# ບຸລຸດ 4 ທ່ານ
# ຂອງພຣະເຈົ້າ

## GROUP BIBLE STUDY

# ບົດການສຶກສາ
# ພາກສ່ວນໜຶ່ງຂອງ
# ພຣະຄຣິສຕະທຳຄຳພີເດີມ

# ວິທີໃຊ້ປຶ້ມການສຶກສາ

ສັງຄົມໃນທຸກມື້ນີ້ ເຕັມໄປດ້ວຍບັນຫາທີ່ທຳລາຍການເປັນຢູ່ໃນຄອບຄົວ, ເຮືອນຊານບ້ານຊ່ອງ, ແລະປະເທດຊາດບ້ານເມືອງ. ກ່ຽວກັບບັນຫາທີ່ໂລກກຳລັງປະເຊີນຢູ່ ທ່ານຈະພົບຄຳຕອບທຸກຢ່າງໄດ້ໃນພຣະຄຳພີ. ເພາະສະນັ້ນແຫຼະ, ຂ້າພະເຈົ້າຈຶ່ງໄດ້ຈັດຕຽມປຶ້ມຮຽນນີ້ອອກມາສຳລັບທ່ານ. ເປັນສິ່ງສຳຄັນທີ່ສຸດທີ່ທ່ານຈະຕ້ອງຮຽນຮູ້ວ່າ ພຣະຄຳພີໄດ້ກ່າວໄວ້ຢ່າງໃດ ແລະ ຈະເຮັດແບບໃດຈຶ່ງຈະປະຕິບັດຕາມຄຳສອນທີ່ຢູ່ໃນປຶ້ມພຣະຄຳພີນີ້ໄດ້.

ຄົນທົ່ວໄປໃນໂລກໄດ້ພາກັນໃຊ້ວິທີການສຶກສາພຣະຄຳພີແບບນີ້. ຍ້ອນວ່າພຣະຄຳພີເປັນຫ້ອງສະໝຸດຂອງປຶ້ມ 66 ເຫຼັ້ມ, ພວກເຮົາຈຶ່ງຄວນອ່ານແລະສຶກສາປຶ້ມແຕ່ລະຫົວໃຫ້ລະອຽດ. ຖ້າທ່ານຫາກຕິດຕາມຄຳແນະນຳແລະກົດລະບຽບທີ່ຂ້າພະເຈົ້າຈະແນະນຳຕໍ່ໄປນີ້, ທ່ານກໍຈະສາມາດຮຽນຮູ້ເຖິງພື້ນຖານເລື່ອງພຣະຄຳພີ ພ້ອມທັງຄວາມຈິງກ່ຽວກັບປຶ້ມຕ່າງໆໃນພຣະຄຳພີນີ້.

ໃນຂະນະທີ່ທ່ານກຳລັງສຶກສາປຶ້ມຮຽນນີ້, ທ່ານຄວນຮູ້ຈັກດ້ວຍຕົນເອງເຖິງສາມຢ່າງດັ່ງຕໍ່ໄປນີ້:

1. ຄວາມຈິງ... ວ່າພຣະຄຳພີໄດ້ກ່າວໄວ້ຢ່າງໃດ?
2. ການແປຄວາມໝາຍ... ວ່າໝາຍເຖິງຫຍັງ?
3. ການປະຕິບັດຕາມ... ເຮັດແນວໃດ ຈຶ່ງຈະປະຕິບັດຕາມຄວາມຈິງນີ້ໄດ້ໃນຊີວິດຂອງພວກເຮົາ?

ບົດການສຶກສາພຣະຄຳພີນີ້ບໍ່ໄດ້ຂຽນຂຶ້ນມາໃຫ້ສະເພາະແຕ່ສິດຍາພິບານຫຼືຄູສອນເທົ່ານັ້ນ, ແຕ່ເພື່ອທຸກໆຄົນ. ເຮົາອາດໃຊ້ເປັນການຮຽນສ່ວນຕົວເມື່ອເຮົາຢູ່ຄົນດຽວຫຼືວ່າຈະໃຊ້ຮຽນຮ່ວມເປັນໝູ່ຄະນະຊຶ່ງຈະເຮັດໃຫ້ສາມາດມີການສົນທະນາແລະສຶກສາດ້ວຍກັນ. ທ່ານສາມາດໃຊ້ປຶ້ມຮຽນນີ້ເປັນປຶ້ມສຶກສາຕາມບ້ານເຮືອນ, ໃນວິຫານ (ໂບດ), ຫຼືຕາມບ່ອນທີ່ເຫັນວ່າສະດວກຕໍ່ຄວາມຕ້ອງການ. ປຶ້ມຮຽນນີ້ຍັງສາມາດນຳມາໃຊ້ສຶກສາໃນທ່າມກາງພວກຄົນໜຸ່ມແລະໃນໂຮງຮຽນວັນອາທິດອີກດ້ວຍ. ແຕ່ສິ່ງທີ່ສຳຄັນກໍຄືທຸກຄົນຕ້ອງມີປຶ້ມພຣະຄຳພີແລະມີປຶ້ມຮຽນຫົວນີ້. ສຳລັບການຮຽນນີ້ ໃຫ້ໃຊ້ປຶ້ມພຣະຄຳພີທີ່ແປໃໝ່.

ທ່ານອາດເຊີນເອົາຄົນຂ້າງບ້ານຫຼືໝູ່ເພື່ອນມາໃນເຮືອນຂອງທ່ານ ແລະພາກັນສຶກສາພຣະຄຳພີດ້ວຍກັນກໍໄດ້.

## ຜູ້ນຳການສຶກສາພຣະຄຳພີ:

ບົດການສຶກສານີ້ໄດ້ຮັບການຈັດຕຽມອອກມາກໍເພື່ອວ່າຄົນໜຶ່ງໃນພວກທ່ານຈະສາມາດນຳພາການສຶກສາໃນແຕ່ລະອາທິດ, ຫຼືວ່າທ່ານອາດຈະປ່ຽນໃຫ້ຄົນອື່ນໆໃນໝູ່ຄະນະສຶກສາພຣະຄຳພີນີ້ປ່ຽນກັນນຳພາໃນແຕ່ລະອາທິດກໍໄດ້. ຜູ້ນຳອາດຈະເປັນຜູ້ຊາຍຫຼືຜູ້ຍິງ. ຖ້າການສຶກສາພຣະຄຳພີເປັນກຸ່ມຜູ້ຍິງກໍສົມຄວນໃຫ້ຜູ້ຍິງເອງເປັນຜູ້ນຳພາ. ຖ້າຫາກວ່າທັງສອງເພດສຶກສາດ້ວຍກັນ ກໍສົມຄວນໃຫ້ຜູ້ຊາຍເປັນຜູ້ນຳໃນການສຶກສານີ້.

## ຜົນປະໂຫຍດຂອງການປ່ຽນຜູ້ນຳ:

ປະສົບການໃນການນຳການສຶກສາ ຈະຊ່ອຍເຮົາກາຍເປັນຜູ້ທີ່ເຂົ້າສ່ວນໃນການສົນທະນາດີຂຶ້ນເມື່ອມີຄົນອື່ນເປັນຜູ້ນຳເຮົາ.

ສະມາຊິກທຸກຄົນໃນກຸ່ມສຶກສາພຣະຄຳພີກໍມີຄວາມຮູ້ສຶກວ່າ ຕົນກໍເປັນຄົນສຳຄັນຄົນໜຶ່ງເຊັ່ນດຽວ, ແລະການສຶກສາພຣະຄຳພີກໍເປັນຂອງທຸກໆຄົນ.

ເມື່ອຄົນໜຶ່ງຄົນໃດຫາກເປັນຜູ້ນຳ, ຄົນນັ້ນກໍຈະມີຄວາມລະວັງໃນການຈັດຕຽມ ແລະ ຈະມີໂອກາດຮຽນເພີ້ມເຕີມອີກດ້ວຍ.

## ວິທີການຈັດຕຽມບົດຮຽນ:

1. ອ້ອນວອນຂໍສະຕິປັນຍາ ແລະ ການຊີ້ນຳພາຈາກພຣະວິນຍານບໍລິສຸດ.
2. ອ່ານພຣະຄຳພີສ່ວນທີ່ຈະສອນນັ້ນໃຫ້ທົ່ວ ໂດຍໃຊ້ຄວາມນຶກຄິດ, ແລະ ຢ່າງໜ້ອຍກໍໃຫ້ອ່ານສອງຫຼືສາມເທື່ອ.
3. ສຶກສາເຖິງຄຳຖາມຕ່າງໆ ແລະໃຫ້ຄິດເຖິງຄຳຕອບທີ່ທ່ານໄດ້ພົບໃນຂໍ້ພຣະຄຳພີທີ່ທ່ານກຳລັງສຶກສາຢູ່ໃຫ້ລະອຽດ.
4. ໃຫ້ຮູ້ຈັກຄຳຖາມຢ່າງຄັກແນ່ ເພື່ອວ່າທ່ານຈະສາມາດປ່ຽນເນື້ອຄວາມຂອງຄຳຖາມນັ້ນຕາມຄວາມນຶກຄິດຂອງທ່ານເອງໄດ້.

## ວິທີການນຳພາການສຶກສາ:

1. ຈັດຕຽງມຕັ່ງນັ່ງໃຫ້ເປັນວົງ ຫຼືໃຫ້ນັ່ງອ້ອມໂຕະດຽວກັນ ເພື່ອວ່າທຸກຄົນຈະໄດ້ສະດວກສະບາຍແລະສົນທະນາເວົ້າຈາໃນເລື່ອງພຣະຄຳພີຢ່າງເປັນກັນເອງ.

2. ເລີ້ມຕົ້ນດ້ວຍການອະທິຖານທູນຂໍການຊົງນຳພາຈາກພຣະເຈົ້າ ແລະປະທານຄວາມເຂົ້າໃຈເຖິງການສຶກສາ, ແຕ່ໃຫ້ເປັນການອ້ອນວອນສັ້ນໆ.

3. ຂໍໃຫ້ຄົນໜຶ່ງໃນໝູ່ຄະນະ ອ່ານຂໍ້ພຣະຄຳພີທີ່ທ່ານຈະສຶກສາຮ່ວມກັນນັ້ນ. ໃຫ້ໃຊ້ບົດການສຶກສານີ້ ແລະໃຫ້ອ່ານຂໍ້ພຣະຄຳພີໃນຕອນທຳອິດຂອງແຕ່ລະພາກຂອງບົດຮຽນນີ້.

4. ຖາມຕາມຄຳຖາມທີ່ມີຢູ່ໃນປຶ້ມບົດການສຶກສານີ້.

5. ໃຫ້ໂອກາດແກ່ສະມາຊິກໃນການອອກຄວາມຄິດຄວາມເຫັນ.

6. ຢ່າເຮັດໃຫ້ຜູ້ທີ່ຕອບຜິດໄດ້ຮັບຄວາມອັບອາຍ.

7. ຢ່າເວົ້ານອກເລື່ອງຂໍ້ພຣະຄຳພີທີ່ທ່ານກຳລັງໃຊ້ພິຈາລະນາຢູ່ນັ້ນ

8. ໃຫ້ທ່ານພະຍາຍາມໃຊ້ບົດຮຽນທີ່ກຳລັງຮຽນຢູ່ນັ້ນ ເປັນການຊ່ອຍຊີວິດປະຈຳວັນຂອງນັກຮຽນ ແລະໃຫ້ຫຍໍ້ເອົາແຕ່ຂໍ້ສຳຄັນຂອງບົດຮຽນນັ້ນ.

9. ແຕ່ຢ່າລືມວ່າ! ເມື່ອເວລາທ່ານເປັນຜູ້ນຳນັ້ນ ທ່ານຢ່າເວົ້າຫຼາຍເກີນໄປ, ຈົ່ງຄິດສະເໝີວ່າ ມັນບໍ່ແມ່ນການເທດສະໜາ ແຕ່ເປັນການສຶກສາພຣະຄຳພີ.

10. ໃຫ້ປິດການຮ່ຳຮຽນພຣະຄຳພີດ້ວຍການອະທິຖານຢ່າງສັ້ນໆ.

## ຜົນປະໂຫຍດຂອງກຸ່ມສຶກສາພຣະຄໍາພີ:

ກຸ່ມສຶກສາພຣະຄໍາພີນີ້ເຮັດໃຫ້ຜູ້ທີ່ເປັນຄຣິສຕຽນໃໝ່ ມີໂອກາດເຜີຍແຜ່ຂ່າວປະເສີດແກ່ໝູ່ເພື່ອນຂອງຕົນທີ່ຍັງບໍ່ທັນເປັນຄຣິສຕຽນເທື່ອ.

ແທນທີ່ຈະເປັນການເທດສະໜາຫຼືການບອກກ່າວຕາມທີ່ຂຽນໄວ້ໃນພຣະຄໍາພີ, ຄົນເຮົາສາມາດຄົ້ນຄວ້າດ້ວຍຕົນເອງວ່າພຣະຄໍາພີໄດ້ສອນຢ່າງໃດແດ່.

ເມື່ອມີການສຶກສາເປັນກຸ່ມນ້ອຍໆ ທຸກຄົນກໍອາດສາມາດຖາມບັນຫາໄດ້ຢ່າງສະດວກໂດຍບໍ່ມີຄວາມຢ້ານຫຼືອາຍແຕ່ຢ່າງໃດ.

ກຸ່ມສຶກສາພຣະຄໍາພີສ້າງບັນຍາກາດແຫ່ງການຜ່ອນຄາຍອາລົມຊຶ່ງເປັນການສ້າງຄວາມແໜ້ນແຟ້ນຂອງການເປັນມິດ, ການໜູນນໍ້າໃຈຊຶ່ງກັນແລະກັນ, ການແບ່ງປັນຄວາມຄິດເຫັນ, ແລະການສົນທະນາເຖິງບັນຫາຕ່າງໆດ້ວຍ.

ດັ່ງນັ້ນ ຈຶ່ງສວຍໂອກາດເຊີນເອົາໝູ່ຂອງທ່ານມາສຶກສາພຣະຄໍາພີດ້ວຍກັນ ບໍ່ວ່າຕາມບ້ານເຮືອນ, ໃນບ່ອນເຮັດວຽກ, ຫຼືໃນວິຫານ (ໂບດ). ຈົ່ງໃຊ້ປຶ້ມການສຶກສານີ້ ແລະ ເລີ້ມການສຶກສາພຣະຄໍາພີຕັ້ງແຕ່ມື້ນີ້ເປັນຕົ້ນໄປ.

# <u>ສາລະບານ</u>


**<u>ບົດແນະນຳ</u>** **<u>ໜ້າທີ</u>**

ອັບຣາຮາມ - ຜູ້ພະຈົນໄພສຳລັບພຣະເຈົ້າ............................13
ອັບຣາຮາມ - ຄວາມເຊື່ອຂື້ນໆລົງໆ......................................19
ອັບຣາຮາມ - ພົບກັບບັນຫາ...............................................23
ອັບຣາຮາມ - ການທົດລອງຕໍ່ຄວາມເຊື່ອ..............................27

ໂຢເຊບ - ຖືກຂົ່ມເຫັງ ແລະ ຖືກທົດລອງ..............................33
ໂຢເຊບ - ຜິດຫວັງ ແລະ ຄອຍຖ້າ........................................37
ໂຢເຊບ - ການໃຫ້ອະໄພ....................................................41

ໂມເຊ - ການເອີ້ນໃຫ້ເປັນຜູ້ນຳພາ.........................................47
ໂມເຊ - ການນຳພາໄດ້ຮັບການທ້າທາຍ.................................55
ໂມເຊ - ຄວາມຫຍຸ້ງຍາກໃນການນຳພາ................................61
ໂມເຊ - ຄຸນຄ່າຂອງການນຳພາ............................................65

ດາວິດ - ຜູ້ໄວ້ວາງໃຈຢ່າງຈິງໃຈ............................................73
ດາວິດ - ກະສັດຂອງອິດສະຣາເອນ......................................81
ດາວິດ - ຄວາມເສົ້າສະລົດໃຈເພີ້ມຂື້ນ.................................87

# ບຸລຸດຂອງພຣະເຈົ້າ 4 ທ່ານ

## ບົດນຳ:

"ຄົນທັງຫຼາຍທີ່ຮູ້ຈັກພຣະນາມຂອງພຣະອົງແລ້ວຈະວາງໃຈໃນພຣະອົງ; ດ້ວຍພຣະເຢໂຮວາຈະບໍ່ປະຖິ້ມຄົນເຫຼົ່ານັ້ນ" (ເພງສັນລະເສີນ 9:10).

ອັບຣາຮາມ, ໂຢເຊບ, ໂມເຊ, ດາວິດ ບຸກຄົນເຫຼົ່ານີ້ແຕ່ລະຄົນມີເລື່ອງທີ່ຖືກຂຽນໄວ້ໃນພຣະຄຳພີເດີມ ຊຶ່ງແຕ່ລະຄົນນັ້ນ ມີບົດບາດສຳຄັນໃນປະຫວັດສາດຂອງຊົນຊາດອິດສະຣາເອນ.

**<u>ອັບຣາຮາມ</u>**: ເປັນບິດາຂອງຊາດອິດສະຣາເອນ (ຄົນຢິວ), ຊຶ່ງເປັນຊົນຊາດທີ່ພຣະເຈົ້າຊົງເລືອກ.

**<u>ໂຢເຊບ</u>**: ເປັນບຸກຄົນທີ່ພຣະເຈົ້າໃຊ້ໄປຊ່ວຍໄພ່ພົນອິດສະຣາເອນຈາກຄວາມຕາຍຍ້ອນການອຶດອາຫານ.

**<u>ໂມເຊ</u>**: ເປັນຜູ້ນຳພາທີ່ພຣະເຈົ້າຊົງເລືອກ ເພື່ອນຳຊົນຊາດອິດສະຣາເອນອອກຈາກການເປັນຂ້າທາດໃນປະເທດອີຢິບ ແລະເພື່ອນຳພາພວກເຂົາໄປຍັງດິນແດນການາອັນ ຊຶ່ງເປັນດິນແດນທີ່ພຣະເຈົ້າຊົງສັນຍາໄວ້ຕໍ່ພວກເຂົາ.

**<u>ດາວິດ</u>**: ເປັນກະສັດທີ່ພຣະເຈົ້າໄດ້ເລືອກໃຫ້ສ້າງຕັ້ງປະເທດອິດສະຣາເອນແລະປົກຄອງຢູ່ເໜືອປະຊາຊົນອິດສະຣາເອນ.

ບຸລຸດທັງ 4 ທ່ານນີ້ມີຄຸນລັກສະນະພິເສດທີ່ພວກເຮົາຄວນຈະຖອດຖອນເອົາເປັນບົດຮຽນ. ແຕ່ລະຄົນມີຄຸນສົມບັດທີ່ຈະເຫັນໄດ້ໃນອົງພຣະເຢຊູຄຣິດເໝືອນກັນ. ພຣະຄຣິດໄດ້ສຳແດງຄຸນລັກສະນະເຫຼົ່ານີ້ຢ່າງສົມບູນແບບໃນພຣະອົງ.

**<u>ອັບຣາຮາມ</u>**: ເປັນທີ່ຮູ້ຈັກໃນການເຊື່ອຟັງຂອງເພິ່ນ.

**<u>ໂຢເຊບ</u>**: ເປັນທີ່ຮູ້ຈັກໃນການໃຫ້ອະໄພແລະຄວາມເມດຕາຕໍ່ພວກອ້າຍໆທີ່ທຳລະຍົດຕໍ່ເພິ່ນ.

**<u>ໂມເຊ</u>**: ເປັນທີ່ຮູ້ຈັກໃນຄວາມອ່ອນໂຍນແລະຄວາມຮັກຕໍ່ໄພ່ພົນອິດສະຣາເອນທີ່ດື້ດ້ານບໍ່ຟັງຄວາມ.

**<u>ດາວິດ</u>**: ເປັນທີ່ຮູ້ຈັກເຖິງຄວາມຖ່ອມຕົວຂອງເພິ່ນໃນຖານະເປັນກະສັດທີ່ພຣະເຈົ້າໄດ້ຊົງຕັ້ງໄວ້.

ບຸລຸດທັງ 4 ທ່ານນີ້ ໄດ້ພົບກັບການທ້າທາຍແລະການລໍ້ລວງໃນຊີວິດຂອງພວກເຂົາ, ແຕ່ປະສົບການເຫຼົ່ານັ້ນໄດ້ຊ່ວຍໃຫ້ພວກເຂົາຈະເລີນໃຫຍ່ຂຶ້ນດ້ານຄວາມເຊື່ອໃນພຣະເຈົ້າ. ໃນບົດຮຽນຕໍ່ໄປນີ້ ພວກເຮົາຈະສັງເກດເບິ່ງປະສົບການຂອງບຸລຸດທັງ 4 ທ່ານນີ້ ແລ້ວມາປຽບທຽບໃສ່ຊີວິດຄຣິສຕຽນຂອງພວກເຮົາເອງ. ພຣະເຈົ້າໄດ້ຊົງນຳພວກເຂົາໃນອາດີດທີ່ຜ່ານມາ ແລະພຣະອົງຈະຊົງນຳພາພວກເຮົາໃນທຸກມື້ນີ້ເໝືອນກັນ. ພຣະເຈົ້າໄດ້ຊອກຫາບັນດາຜູ້ທີ່ເຊື່ອວາງໃຈໃນພຣະອົງ ແລະຜູ້ທີ່ຈະຮັບເອົາພຣະປະສົງແລະແຜນການຂອງພຣະອົງກ່ອນຄວາມປາຖະໜາຂອງຕົນເອງ.

ທຸກມື້ນີ້ ພຣະເຈົ້າໄດ້ຊົງໃຊ້ມະນຸດເພື່ອເຮັດໃຫ້ແຜນການຂອງພຣະອົງສຳເລັດໃນໂລກ. ພວກເຮົາມີໂອກາດທີ່ຈະຮູ້ຈັກພຣະເຈົ້າ, ຮັບໃຊ້ພຣະອົງ, ແລະນຳພຣະພອນໄປສູ່ຍາດພີ່ນ້ອງທີ່ຢູ່ໃນສະໄໝຂອງພວກເຮົາເໝືອນດັ່ງອັບຣາຮາມ, ໂຢເຊບ, ໂມເຊ, ແລະດາວິດ ໄດ້ນຳພຣະພອນໄປສູ່ມະນຸດໃນສະໄໝຂອງພວກເຂົາ.

# ອັບຣາຮາມ - ມິດສະຫາຍຂອງພຣະເຈົ້າ

ອັບຣາຮາມໄດ້ຖືກເອີ້ນວ່າ **"ມິດສະຫາຍຂອງພຣະເຈົ້າ"** (ຈົ່ງອ່ານ ຢາໂກໂບ 2:23; ຂ່າວຄາວສະບັບທີ່ສອງ 20:7; ແລະເອຊາຢາ 41:8). ອັບຣາຮາມໄດ້ມີປະສົບການຄວາມສຳພັນສ່ວນຕົວກັບພຣະເຈົ້າຫຼາຍປະການ. ນີ້ເປັນສາຍເຫດທີ່ເຮັດໃຫ້ເພິ່ນຖືກເອີ້ນວ່າ **"ສະຫາຍຂອງພຣະເຈົ້າ"**.

ປຶ້ມຫົວນີ້ມີບົດຮຽນ 4 ບົດທີ່ກ່ຽວກັບອັບຣາຮາມ. ບົດຮຽນເຫຼົ່ານີ້ໄດ້ສອນພວກເຮົາເຖິງ: ພຣະເຈົ້າໄດ້ຊົງເອີ້ນອັບຣາຮາມແບບໃດ, ພຣະອົງໄດ້ທົດສອບຄວາມເຊື່ອຂອງເພິ່ນແບບໃດ, ແລະເພິ່ນໄດ້ມີຄວາມຜິດພາດແລະໄຊຊະນະດ້ວຍຄວາມເຊື່ອຂອງເພິ່ນແບບໃດ. ພວກເຮົາສາມາດຮຽນຮູ້ເຖິງຄຸນລັກສະນະຂອງພຣະເຈົ້າຫຼາຍຢ່າງເໝືອນກັນໃນຂະນະທີ່ພວກເຮົາເຫັນເຖິງວິທີທີ່ພຣະເຈົ້ານຳພາແນະນຳ ແລະປະຕິບັດຕໍ່ອັບຣາຮາມ.

# ບົດຮຽນທີ 1
## (ປະຖົມມະການ 12–15)

# ອັບຣາຮາມ – ຜູ້ພະຈົນໄພສຳລັບພຣະເຈົ້າ

**ຈົ່ງອ່ານ ປະຖົມມະການ 12:1–20; 13:1–4**

1.ກ. ພຣະເຈົ້າຊົງບອກໃຫ້ອັບຣາມເຮັດຫຍັງ? (ຂໍ້ 1-2)
ຂ.ພຣະເຈົ້າໄດ້ຊົງສັນຍາຈະປະທານຫຍັງໃຫ້ແກ່ອັບຣາມ?(ຂໍ້ 2)
ຄ. ພຣະເຈົ້າໄດ້ບອກໃຫ້ອັບຣາມປະຫຍັງໄວ້ຂ້າງຫຼັງ? (ຂໍ້ 1)

2. ກ. ອັບຣາມໄດ້ຕອບຕໍ່ຄຳສັ່ງຂອງພຣະເຈົ້າແບບໃດ? (ຈົ່ງອ່ານ ເຮັບເຣີ 11:8)
ຂ. ພຣະເຈົ້າໄດ້ຊົງປາກົດຕໍ່ອັບຣາມຢູ່ໃສ? (ຂໍ້ 6-7)
ຄ. ເປັນຫຍັງອັບຣາມຈຶ່ງໄດ້ສ້າງແທ່ນບູຊາ? (ຂໍ້ 7-8)

3. ເປັນຫຍັງອັບຣາມຈຶ່ງໄດ້ໄປປະເທດອີຢີບ? (ຂໍ້ 10)

**ຂໍ້ສັງເກດ**: ພຣະເຈົ້າໄດ້ສັນຍາຕໍ່ອັບຣາມແລ້ວວ່າເພິ່ນຈະໄດ້ຮັບພຣະພອນແລະກາຍເປັນຊົນຊາດໃຫຍ່ ແຕ່ຍ້ອນການກັນດານອາຫານ, ອັບຣາມບໍ່ເຊື່ອວາງໃຈພຣະເຈົ້າສຳລັບອາຫານ! ເຮົາຂາດຄວາມເຊື່ອວາງໃຈໃນພຣະສັນຍາຂອງພຣະເຈົ້າບໍ ທຸກມື້ນີ້?

4. ອັບຣາມໄດ້ພົບກັບໄພອັນຕະລາຍແລະການຫຼອກຫຼວງໃນປະເທດອີຢິບ.

ກ. ອັບຣາມໄດ້ເຮັດຫຍັງ? (ຂໍ້ 11-13)

ຂ. ພຣະເຈົ້າໄດ້ເຂົ້າແຊກແຊງແລະຂັດຂວາງອັບຣາມບໍ່ໃຫ້ເຮັດຜິດອີກຕໍ່ໄປແບບໃດ? (ຂໍ້ 17)

ຄ. ກະສັດໄດ້ກ່າວແນວໃດຕໍ່ອັບຣາມ? (ຂໍ້ 18)

5. ກ. ເວລາອັບຣາມອອກຈາກປະເທດອີຢິບ, ເພິ່ນໄດ້ໄປໃສ? (13:1-2)

ຂ. ທ່ານຄິດວ່າ ເປັນຫຍັງເພິ່ນຈິ່ງຢາກເດີນທາງກັບໄປເມືອງເບັດເອັນ? (13:1-4)

## ຈົ່ງອ່ານ ປະຖົມມະການ 13:5–18

6. ກ. ອັບຣາມໄດ້ມີບັນຫາແນວໃດກັບທ້າວໂລດຫຼານຊາຍຂອງເພິ່ນ? (ຂໍ້ 5-7)

ຂ. ອັບຣາມໄດ້ແກ້ໄຂບັນຫານີ້ແບບໃດ? (ຂໍ້ 8-9)

ຄ. ພວກເຮົາໄດ້ຮຽນເຖິງຄຸນສົມບັດຂອງອັບຣາມຢ່າງໃດໃນເຫດການອັນນີ້?

**<u>ຂໍ້ສັງເກດ</u>**: ໃນເວລານີ້, ອັບຣາມໄດ້ມີຄວາມເຊື່ອພຽງພໍໃນພຣະເຈົ້າ, ດັ່ງນັ້ນ ເພິ່ນຈຶ່ງລະເວັ້ນຈາກການຮັ່ງມີທາງດ້ານວັດຖຸສິ່ງຂອງ ເພື່ອຈະໃຫ້ໄດ້ມາຊຶ່ງການຈະເລີນເຕີບໃຫຍ່ທາງດ້ານຈິດວິນຍານ.

ງ. ທ້າວໂລດໄດ້ເລືອກເອົາທາງໃດ? (ຂໍ້ 10)

ຈ. ດັ່ງນັ້ນ ອັບຣາມຈິ່ງໄດ້ເຮັດແບບໃດ? (ຂໍ້ 11-12)

7. ກ. ອົງພຣະຜູ້ເປັນເຈົ້າໄດ້ພິຈາລະນາແບບໃດຕໍ່ນໍ້າໃຈກວ້າງຂວາງ
ຂອງອັບຣາມທີ່ມີຕໍ່ທ້າວໂລດ? (ຂໍ້ 14-15)
ຂ. ພຣະເຈົ້າໄດ້ຊົງສັນຍາກັບອັບຣາມແບບໃດອີກ? (ຂໍ້ 16)
ຄ. ອົງພຣະຜູ້ເປັນເຈົ້າໄດ້ຊົງສັນຍາແບບໃດໃນພຣະທຳມັດ
ທາຍ 6:31-33?
ງ. ແມ່ນຫຍັງຄືສິ່ງທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານ . . . ຄວາມ
ປາຖະໜາສ່ວນຕົວຫຼືການເຊື່ອວາງໃຈໃນພຣະເຈົ້າທັງໝົດ?

## ຈົ່ງອ່ານປະຖົມມະການ 14:8-16 & 15:1-21

8. ກ. ເປັນຫຍັງທ່ານໂລດຈຶ່ງພົບກັບບັນຫາ (ຈົ່ງອ່ານປະຖົມມະ
ການ 13:12-13 ອີກເທື່ອໜຶ່ງ)
ຂ. ອັບຣາມໄດ້ເຮັດແນວໃດ ເມື່ອໄດ້ຍິນຂ່າວວ່າໂລດກຳລັງມີ
ບັນຫາ? (ຈົ່ງອ່ານຂໍ້ 13-16)

9. ພຣະເຈົ້າໄດ້ຊົງສັນຍາແບບໃດກັບອັບຣາມໃນປະຖົມມະການ
15:1?

**<u>ຂໍ້ສັງເກດ</u>**: ພຣະເຈົ້າບໍ່ພຽງສັນຍາວ່າຈະຄຸ້ມຄອງຮັກສາອັບຣາມ ຈາກສັດຕູຂອງເພິ່ນເທົ່ານັ້ນ ແຕ່ວ່າພຣະອົງຍັງຊົງສັນຍາວ່າຈະອວຍພອນອັບຣາມໃຫ້ອຸດົມສົມບູນອີກດ້ວຍ. ຈົ່ງອ່ານ ເຮັບເຣີ 13:5-6. ພຣະເຈົ້າຊົງສັນຍາ ຈະຄຸ້ມຄອງຮັກສາພວກເຮົາ ພ້ອມທັງປະທານທຸກຢ່າງທີ່ພວກເຮົາຕ້ອງການນັ້ນໃຫ້.

10. ກ. ເປັນຫຍັງອັບຣາມຈິ່ງວຸ້ນວາຍ ຫຼືເພິ່ນມີບັນຫາແບບໃດ?
(ຈົ່ງອ່ານຂໍ້ 2-3)
ຂ. ພຣະເຈົ້າຊົງສັນຍາວ່າຈະປະທານອັນໃດພິເສດໃຫ້ອັບຣາມ
ໃນກໍລະນີນີ້? (ຂໍ້ 5)

11. ກ. ອັບຣາມໄດ້ຕອບພຣະເຈົ້າ ຕໍ່ພຣະສັນຍາຂອງພຣະອົງ
ແບບໃດ? (ຂໍ້ 6)
ຂ. ຄວາມພົ້ນຂອງພວກເຮົາແມ່ນວາງໄວ້ຢູ່ເທິງຄຸນລັກສະນະ
ທີ່ບໍລິສຸດຂອງພຣະເຈົ້າແລະຂອງພຣະລາຊະທານຄືຄວາມ
ຊອບທຳຂອງພຣະອົງຫຼືວາງຢູ່ເທິງການກະທຳຂອງພວກ
ເຮົາ?
ຈົ່ງອ່ານປິດທິ 15:7-21 ອີກເທື່ອໜຶ່ງ.

12. ກ. ພຣະເຈົ້າຊົງສັນຍາຈະປະທານຫຍັງໃຫ້ກັບອັບຣາມໃນຂໍ້
ພຣະທຳເຫຼົ່ານີ້? (ຂໍ້ 7)
ຂ. ພຣະເຈົ້າຊົງສັ່ງໃຫ້ອັບຣາມເຮັດຫຍັງ? (ຂໍ້ 9-11)
ຈົ່ງອ່ານຂໍ້ 10-12 ອີກເທື່ອໜຶ່ງ.

**<u>ຂໍ້ສັງເກດ</u>**: ມີປະເພນີອັນເກົ່າແກ່ອັນໜຶ່ງໃນສະໄໝນັ້ນ ຄືໃນເວລາທີ່ສອງຄົນໄດ້ສັນຍາຕໍ່ກັນ, ຈະຕ້ອງມີການຂ້າສັດຖວາຍບູຊາ. ສັດນັ້ນຈະຖືກຜ່າເປັນສອງທ່ອນ ຊຶ່ງໝາຍເຖິງສອງຄົນທີ່ມີຄວາມຮັບຜິດຊອບຕໍ່ຄຳໝັ້ນສັນຍານັ້ນ. ໃນພຣະສັນຍາທີ່ພຣະເຈົ້າໄດ້ຊົງໃຫ້ກັບອັບຣາມ, ສັນຍາລັກ (ຈົ່ງອ່ານຂໍ້ 17) ທີ່ສະແດງໃຫ້ເຫັນກໍຄືພຣະເຈົ້າໄດ້ສະເດັດຜ່ານສັດສອງທ່ອນນັ້ນໄປ. ອັນນີ້ໝາຍຄວາມວ່າ

ພຣະເຈົ້າພຽງຜູ້ດຽວທີ່ຈະເຮັດໃຫ້ພຣະສັນຍານັ້ນເປັນທີ່ສຳເລັດ, ເຖິງແມ່ນວ່າອັບຣາມບໍ່ໄດ້ເຮັດໜ້າທີ່ຂອງຕົນກໍຕາມ. ພຣະເຈົ້າຊົງເຕັມລົ້ນໄປດ້ວຍພຣະຄຸນແລະເປັນພຣະພອນສຳລັບພວກເຮົາເຖິງວ່າພວກເຮົາຈະບໍ່ເຮັດຕາມສັນຍາທີ່ພວກເຮົາໄດ້ສັນຍາຕໍ່ພຣະອົງກໍຕາມ.

**ຫຍໍ້ໃຈຄວາມ**:

1. ບົດຮຽນບົດນີ້ໄດ້ສອນພວກເຮົາຢ່າງໃດກ່ຽວກັບພຣະເຈົ້າ?

2. ບົດຮຽນບົດນີ້ໄດ້ສອນພວກເຮົາຢ່າງໃດກ່ຽວກັບຊາຍຜູ້ໜຶ່ງ, ອັບຣາມ? ອັບຣາມໄດ້ມີຈຸດດີຝ່າຍຈິດວິນຍານແບບໃດ? ແລະຈຸດອ່ອນແບບໃດ?

3. ຈຸດດີຂອງອັບຣາມແບບໃດ ທີ່ເຮົາຢາກນຳເອົາເຂົ້າມາໃນຊີວິດຂອງເຮົາ?

**ບົດສະຫລຸບ**: ອັບຣາມໄດ້ອອກຈາກບ້ານເຮືອນຂອງຕົນແລະໄດ້ເດີນທາງໄປຍັງແຜ່ນດິນໃໝ່ຕາມທີ່ພຣະເຈົ້າຊົງເອີ້ນເພິ່ນ. ໃນແຜ່ນດິນຜືນໃໝ່ນີ້, ອັບຣາມໄດ້ສາມາດເສຍສະຫຼະຊັບສົມບັດ ຈົນເຖິງກັບໃຫ້ທ້າວໂລດເລືອກເອົາແຜ່ນດິນຂອງເພິ່ນຕາມຊອບໃຈ. ອັບຣາມມີຄວາມກ້າຫານແລະຄວາມເຊື່ອ. ຈົ່ງອ່ານປະຖົມມະການ 15:6.

# ບົດຮຽນທີ 2
## (ປະຖົມມະການ 16-18)

# ອັບຣາຮາມ-ຄວາມເຊື່ອຂອງທ່ານຂຶ້ນໆແລະລົງໆ

### ຈົ່ງອ່ານປະຖົມມະການ 16:1-16

1. ກ. ເວລາໄດ້ຜ່ານໄປດົນນານເທົ່າໃດແລ້ວ ຕັ້ງແຕ່ພຣະເຈົ້າໄດ້ ຊົງສັນຍາກັບອັບຣາຮາມ? ໃນປະຖົມມະການ 12:1-4
   ຂ. ຈົ່ງອ່ານປະຖົມມະການ 16:3 ແລະ 16. ນາງຊາຣາຍໄດ້ຕັດ ສິນໃຈເຮັດຫຍັງ?

<u>ຂໍ້ສັງເກດ</u>: ນາງຊາຣາຍບໍ່ໄດ້ລໍຖ້າພຣະເຈົ້າທີ່ຈະຕອບສະໜອງ ຄວາມຕ້ອງການ ທີ່ພວກເຂົາຢາກມີລູກຜູ້ໜຶ່ງ. ລາວຕັດສິນໃຈທີ່ຈະ ແກ້ໄຂບັນຫານີ້ດ້ວຍໂຕລາວເອງ.

2. ກ. ຕໍ່ມາບໍ່ນານເທົ່າໃດ ນາງຊາຣາຍໄດ້ເສຍໃຈຕໍ່ການກະທຳ ຂອງຕົນແບບໃດ? (ຂໍ້ 5)
   ຂ. ເຮົາເຄີຍພະຍາຍາມແກ້ໄຂບັນຫາຂອງທ່ານເອງ ຫຼືວ່າ "ເຮັດ ສິ່ງເຫຼົ່ານັ້ນຕາມທາງຂອງຕົນເອງ" ແທນທີ່ຈະໄວ້ວາງໃຈໃນ ພຣະເຈົ້າໃຫ້ແກ້ໄຂບັນຫານັ້ນບໍ?
   ຄ. ນາງຊາຣາຍໄດ້ໂຍນຄວາມຜິດທີ່ນາງ ຮາກາ ໄດ້ມີທ່າທີບໍ່ດີ ຕໍ່ນາງນັ້ນໃຫ້ຜູ້ໃດ? (ຂໍ້ 5)

ງ. ພຣະເຈົ້າໄດ້ຊົງກ່າວຕໍ່ນາງ ຮາກາ ແບບໃດ? (ຂໍ້ 9-13)

ຈ. ນາງ ຮາກາ ໄດ້ຮຽນຮູ້ຢ່າງໃດກ່ຽວກັບພຣະເຈົ້າ? (ຂໍ້ 13-14)

## ຈົ່ງອ່ານ ປະຖົມມະການ 17:1–27

3. ຈົ່ງອ່ານ ປະຖົມມະການ 15:1 ແລະ 7 ແລະ 17:1. ຈົ່ງສັງເກດວ່າ ພຣະເຈົ້າໄດ້ຊົງກະທຳແບບໃດໃນແຕ່ລະກໍລະນີ:

**ອັນທີໜຶ່ງ** ພຣະເຈົ້າໄດ້ຊົງສະແດງພຣະອົງເອງໃຫ້ແກ່ອັບຣາມ

**ອັນທີສອງ** ພຣະເຈົ້າໄດ້ຊົງກ່າວຕໍ່ອັບຣາມ, ປະທານຄຳສັ່ງ ແລະພຣະສັນຍາໃຫ້.

4. ເປັນຫຍັງຊື່ຂອງອັບຣາມຈຶ່ງປ່ຽນແປງ?

__ຂໍ້ສັງເກດ__: ຊື່ **“ອັບຣາມ”** ນັ້ນໝາຍຄວາມວ່າ **“ບິດາຜູ້ສູງ”** ຊື່ **“ອັບຣາຮາມ”** ໝາຍຄວາມວ່າ **“ບິດາຂອງປະຊາຊາດ”**.

5. ໃນບົດທີ 17, ຂໍ້ທີ 7, 9, ແລະ14, ພວກເຮົາເຫັນວ່າ ພຣະເຈົ້າຫວັງຢາກໃຫ້ອັບຣາຮາມມີຄວາມສຳພັນຢ່າງໃກ້ຊິດກັບພຣະອົງເອງ. ເພື່ອອັບຣາຮາມຈະສາມາດເຊື່ອວ່າ ພຣະເຈົ້າຈະຮັກສາຄຳໝັ້ນສັນຍາຂອງພຣະອົງທີ່ມີຕໍ່ເພິ່ນ. ພຣະເຈົ້າໄດ້ຊົງບອກອັບຣາຮາມວ່າເພິ່ນຈະຕ້ອງເຮັດສິ່ງໃດ? (ຂໍ້ທີ 9)

6. ກ. ນາງຊາຣາຍມີສ່ວນພົວພັນແບບໃດໃນພຣະສັນຍາທີ່ພຣະເຈົ້າມີຕໍ່ອັບຣາຮາມນັ້ນ? ແລະພຣະເຈົ້າໄດ້ຊົງປະທານຊື່ແບບໃດໃຫ້ແກ່ນາງຊາຣາຍ? (ຂໍ້ 15-16)

ຂ. ແມ່ນຫຍັງເປັນສິ່ງພິເສດທີ່ໄດ້ທຳນວາຍໄວ້ໃນຂໍ້ທີ 17-21ນັ້ນ?

ຄ. ອັບຣາຮາມໄດ້ເຮັດແບບໃດໂລດ ຫຼັງຈາກທີ່ພຣະເຈົ້າໄດ້ກ່າວຕໍ່ເພິ່ນສິ້ນສຸດແລ້ວ? (ຈົ່ງອ່ານຂໍ້ທີ 22-23)

ງ. ເວລາທີ່ພຣະເຈົ້າຊົງກ່າວຕໍ່ພວກເຮົາ, ພຣະເຈົ້າຫວັງຢາກໃຫ້ພວກເຮົາຕອບພຣະອົງແບບໃດແລະໃນເວລາໃດ?

## ຈົ່ງອ່ານ ປະຖົມມະການ 18:1–15

7. ກ. ພຣະເຈົ້າໄດ້ຊົງປາກົດໃຫ້ແກ່ອັບຣາຮາມໂດຍທາງໃດອີກ? (ຂໍ້ 1)

ຂ. ອັບຣາຮາມໄດ້ຕອບພຣະເຈົ້າແບບໃດ? (ຂໍ້ 3-5)

ຈົ່ງອ່ານປະຖົມມະການ 18:12 ແລະແລ້ວອ່ານ ປະຖົມມະການ 17:17.

ຄ. ເປັນຫຍັງອັບຣາຮາມແລະນາງຊາຣາຈິ່ງຫົວ? (ຂໍ້ 12)

ງ. ທັງສອງຄົນທັງອັບຣາຮາມແລະຊາຣາໄດ້ຖາມຄຳຖາມແບບໃດ? (ຂໍ້ 13)

8. ພຣະເຈົ້າຊົງຖາມແບບໃດ? (ຂໍ້ 14)

9. ກ. ເປັນຫຍັງນາງຊາຣາຈິ່ງຢ້ານ?

ຂ. ນາງຊາຣາໄດ້ປະຕິເສດທີ່ລາວໄດ້ຫົວນັ້ນບໍ? (ຂໍ້ 15)

## ຈົ່ງອ່ານປະຖົມມະການ 18:16-33

10. ເປັນຫຍັງພຣະເຈົ້າຈິ່ງໄດ້ບອກແຜ່ນການກ່ຽວກັບເມືອງໂຊໂດມ ແລະໂກໂມຣາ ໃຫ້ອັບຣາຮາມຟັງ? (ຈົ່ງອ່ານຂໍ້ທີ 17-18)

11. ພຣະເຈົ້າຊົງບອກຕໍ່ອັບຣາຮາມແບບໃດ? (ຂໍ້ທີ 20)

12. ເປັນຫຍັງອັບຣາຮາມຈິ່ງໄດ້ທູນຕໍ່ພຣະເຈົ້າ ບໍ່ໃຫ້ທຳລາຍເມືອງ ໂຊໂດມແລະໂກໂມຣາ?

13. ຂໍ້ພຣະທຳເຫຼົ່ານີ້ໄດ້ສອນພວກເຮົາແບບໃດ?

**ຂໍ້ສັງເກດ**: ອັບຣາຮາມເຊື່ອວ່າ ພຣະເຈົ້າຊົງຊອບທຳ, ສັດຊື່ ແລະບໍລິສຸດ. ເພິ່ນເຊື່ອວ່າ ພຣະເຈົ້າຊົງຮັກສາຄຳໝັ້ນສັນຍາຂອງພຣະອົງ ທີ່ຈະອວຍພອນຊົນຊາດທັງຫຼາຍໃນໂລກໂດຍທາງເພິ່ນ.

## ບົດສະຫລຸບ:

ໃນບົດທີ 16-18 ນີ້, ພວກເຮົາສາມາດເຫັນວ່າ ຄວາມເຊື່ອໃນພຣະເຈົ້າອັບຣາຮາມໄດ້ຈະເລີນໃຫຍ່ຂຶ້ນ. ອັບຣາຮາມແລະຊາຣາໄດ້ຮຽນທີ່ຈະວາງໃຈໃນພຣະເຈົ້າ, ເຊື່ອພຣະອົງ, ແລະຟັງຄວາມຂອງພຣະອົງ. ສິ່ງເຫຼົ່ານີ້ເປັນບົດຮຽນທີ່ພວກເຮົາຈະຕ້ອງຮຽນຮູ້ເໝືອນກັນ. ຈະມີບາງເວລາໃນຊີວິດຂອງພວກເຮົາທີ່ພວກເຮົາຈະຕ້ອງລໍຖ້າພຣະເຈົ້າດ້ວຍຄວາມອົດທົນທີ່ຈະເຮັດໃຫ້ພຣະສັນຍາຂອງພຣະອົງສຳເລັດ.

ອັບຣາຮາມໄດ້ຮ້ອງຂໍຕໍ່ພຣະເຈົ້າໃຫ້ໄວ້ຊີວິດຂອງຜູ້ຊອບທຳ ທີ່ຢູ່ໃນເມືອງໂຊໂດມແລະໂກໂມຣາ. ພວກເຮົາທີ່ເປັນຄຣິສຕຽນໃນທຸກມື້ນີ້ ຕ້ອງອະທິຖານຂໍຄວາມເມດຕາແລະພຣະພອນຂອງພຣະເຈົ້າສະຖິດຢູ່ນຳຜູ້ທີ່ຮັກພຣະອົງ.

# ບົດຮຽນທີ 3
## (ປະຖົມມະການ 19 ແລະ 21)

# ອັບຣາຮາມ - ພົບກັບບັນຫາ

## ປະຖົມມະການ 19:1-38

1. ກ. ເວລາທີ່ເທວະດາໄດ້ມາເຖິງເມືອງໂຊໂດມ, ສະຖານະການໃນເມືອງນັ້ນເປັນແນວໃດ?

**<u>ຂໍ້ສັງເກດ</u>**: ເບິ່ງຄືວ່າໂລດເປັນຜູ້ສຳຄັນຜູ້ໜຶ່ງ ເພາະລາວນັ່ງຢູ່ທີ່ປະຕູເມືອງ. (ຂໍ້ 1)

ຂ. ປະຊາຊົນຂອງເມືອງນັ້ນໄດ້ສະແດງຄວາມເຄົາລົບແລະຟັງຄວາມຂອງໂລດບໍ? (ຂໍ້ທີ່ 9 ແລະ 15)

2. ຈົ່ງອ່ານບົດທີ່ 18:22-23 ອີກ.
   ກ. ພຣະເຈົ້າຊົງຕອບຄຳອະທິຖານຂອງອັບຣາຮາມບໍ?
   ຂ. ເທວະດາໄດ້ບອກໃຫ້ໂລດເຮັດຫຍັງ? (ຂໍ້ 15-17)

3. ກ. ແມ່ນເຫດຮ້າຍອັນໃດທີ່ຈະເກີດຂຶ້ນກັບໂລດ?
   ຂ. ແມ່ນຫຍັງໄດ້ເກີດຂຶ້ນຕໍ່ເມືອງໂຊໂດມແລະໂກໂມຣາ? (ຂໍ້ 23-25)

**ຂໍ້ສັງເກດ**: ຈົ່ງຈື່ໄວ້ວ່າ ໂລດເອງທີ່ໄດ້ເລືອກອາໄສຢູ່ໃນເຂດເມືອງໂຊໂດມແລະໂກໂມຣາ (ຈົ່ງອ່ານປະຖົມມະການ 13:11-13). ຈົ່ງພິຈາລະນາເບິ່ງຜົນທີ່ຕາມມາຂອງການເລືອກທີ່ທ່ານເອງເປັນຜູ້ຕັດສິນໃຈໃນຊີວິດວ່າ ມັນຈະເປັນຜົນສະທ້ອນຢ່າງໃດຕໍ່ຄອບຄົວຂອງທ່ານແລະລູກຫຼານຂອງທ່ານ.

## ປະຖົມມະການ 21:1-21

ພຣະທຳບົດນີ້ແມ່ນກ່ຽວກັບການເກີດຂອງອີຊາກ, ລູກຊາຍຂອງອັບຣາຮາມແລະນາງຊາຣາ.

4. ຈົ່ງສັງເກດວ່າ ທຳອິດພຣະເຈົ້າໄດ້ເອີ້ນອັບຣາຮາມໃຫ້ເປັນບິດາຂອງຊົນຊາດອິດສະຣາເອນໃນເວລາທີ່ເພິ່ນມີອາຍຸໄດ້ 75 ປີແລ້ວ (ປະຖົມມະການ 12:1-4). ພຣະເຈົ້າໄດ້ຊົງສັນຍາຈະປະທານລູກຊາຍໃຫ້ອັບຣາຮາມໃນເວລາທີ່ເພິ່ນມີອາຍຸໄດ້ 99 ປີແລ້ວ. (ປະຖົມມະການ 17:1)
   ກ. ອັບຣາຮາມມີອາຍຸໄດ້ຈັກປີ ໃນເວລາທີ່ອີຊາກໄດ້ເກີດມານັ້ນ? (ປະຖົມມະການ 21:5)
   ຂ. ອັບຣາຮາມໄດ້ລໍຄອຍຖ້າພຣະສັນຍາຂອງພຣະເຈົ້າທີ່ຈະສຳເລັດນັ້ນເປັນເວລາດົນນານບໍ?

5. ກ. ແມ່ນໃຜເປັນຜູ້ບອກນາງຊາຣາໃຫ້ໃສ່ຊື່ໃຫ້ລູກຊາຍຂອງລາວ? (ປະຖົມມະການ 17:19)
   ຂ. ນາງຊາຣາມີຄວາມຮູ້ສຶກແນວໃດໃນເມື່ອອີຊາກໄດ້ເກີດມານັ້ນ? (ປະຖົມມະການ 21:6)

6. ແມ່ນຫຍັງຄືການຕັດສິນໃຈທີ່ຍາກ ທີ່ອັບຣາຮາມຈະຕ້ອງເຮັດ? (ຈົ່ງອ່ານປະຖົມມະການ 21:10-14)

7. ກ. ພຣະເຈົ້າຊົງຄຸ້ມຄອງຮັກສານາງຮາກາແລະລູກຊາຍຂອງລາວແບບໃດ? (ປະຖົມມະການ 21:17-21)

ຂ. ພຣະຄຳພີຕອນນີ້ໄດ້ສອນພວກເຮົາຢ່າງໃດກ່ຽວກັບພຣະເມດຕາຂອງພຣະເຈົ້າ?

## ບົດຫຍໍ້:

1. ອັບຣາຮາມໄດ້ມີບັນຫາແບບໃດໃນຊີວິດຂອງເພິ່ນ (ຕາມທີ່ພວກເຮົາໄດ້ເຫັນໃນປະຖົມມະການບົດທີ 19 ແລະ 21 ນີ້)?

2. ພວກເຮົາໄດ້ຮຽນບົດຮຽນແບບໃດຈາກຊີວິດຂອງອັບຣາຮາມນີ້? ຕົວຢ່າງ: ພວກເຮົາຄວນຈະເຮັດຫຼືພວກເຮົາບໍ່ຄວນເຮັດແບບໃດໃນກໍລະນີຕໍ່ລົງໄປນີ້?

ກ. ເມື່ອເວລາໝູ່ເພື່ອນຫຼືພີ່ນ້ອງຂອງເຮົາໄດ້ມີບັນຫາໜັກໃນຊີວິດຂອງພວກເຂົາ ເພາະພວກເຂົາໄດ້ເລືອກເສັ້ນທາງຜິດຫຼືຕັດສິນໃຈຜິດພາດໃນຊີວິດ (ຈົ່ງເບິ່ງບົດທີ່ 19).

ຂ. ເວລາທີ່ມີການຜິດຖຽງກັນກ່ຽວເຖິງວ່າ ແມ່ນໃຜເປັນເຈົ້າຂອງທີ່ດິນທີ່ຖືກຕ້ອງ. (ບົດທີ 21:25-32)

## ບົດສະຫລຸບ:

ອັບຣາຮາມໄດ້ມີບັນຫາຫຼາຍຢ່າງພາຍໃນຄອບຄົວແລະພາຍໃນວຽກງານກິດຈະການທີ່ບໍ່ແຕກຕ່າງຈາກບັນຫາທີ່ພວກເຮົາໃນຊີວິດທຸກມື້ນີ້. ເຖິງແມ່ນວ່າອັບຣາຮາມຈະມີຄວາມເຊື່ອທີ່

ອ່ອນແອເປັນບັງຄັ້ງບາງຄາວແລະບາງເທື່ອກໍເຮັດຜິດຕໍ່ພຣະເຈົ້າ, ພວກເຮົາກໍເຫັນວ່າເພິ່ນໄດ້ຮຽນບົດຮຽນຫຼາຍຢ່າງຈາກພຣະເຈົ້າ ແລະເພິ່ນກໍໄດ້ຈະເລີນໃຫຍ່ຂຶ້ນໃນດ້ານຄວາມເຊື່ອໃນອົງພຣະຜູ້ເປັນເຈົ້າ.

ພຣະເຈົ້າຊົງສັດຊື່ສະເໝີ ເຖິງວ່າອັບຣາຮາມຈະບໍ່ວາງໃຈໃນພຣະອົງກໍຕາມ. ອັບຣາຮາມໄດ້ເຫັນເຖິງການທີ່ພຣະເຈົ້າໄດ້ປະທານລູກຊາຍຄືອີຊາກໃຫ້ເພິ່ນໂດຍທາງມະຫັດສະຈັນ, ແລະເພິ່ນກໍໄດ້ເປັນພະຍານເຖິງການເບິ່ງແຍງຮັກສາຂອງພຣະເຈົ້າຕໍ່ຜູ້ອື່ນ, ຄືນາງຮາກາ, ອິຊະມາເອັນ, ແລະຕໍ່ໆໄປ; ຊຶ່ງເປັນຜູ້ທີ່ໄດ້ພົບກັບບັນຫາຫຼາຍຢ່າງເໝືອນກັນຍ້ອນຄວາມອ່ອນແອແລະຄວາມຜິດພາດຂອງອັບຣາຮາມ.

# ບົດຮຽນທີ 4

## (ປະຖົມມະການ 22-25)

# ອັບຣາຮາມ - ການທົດລອງອັນໃຫຍ່ຕໍ່ຄວາມເຊື່ອ

### ຈົ່ງອ່ານປະຖົມມະການ 22:1-19

1. ແມ່ນຫຍັງຄືການທົດລອງທີ່ອົງພຣະຜູ້ເປັນເຈົ້າໄດ້ທົດລອງອັບຣາຮາມ? (ຂໍ້ 1-2)
2. ພຣະເຈົ້າໄດ້ຊົງປະທານຄຳສັ່ງແບບໃດໃຫ້ອັບຣາຮາມ ທີ່ສະແດງໃຫ້ພວກເຮົາເຫັນວ່າພຣະອົງຊົງຮູ້ຈັກວ່າ ຄຳສັ່ງອັນນີ້ຈະເປັນຄຳສັ່ງທີ່ຍາກຫຼາຍ?

**<u>ຂໍ້ສັງເກດ</u>**: ໃນສະໄໝທີ່ອັບຣາຮາມມີຊີວິດຢູ່ ໄດ້ມີປະເພນີອັນໜຶ່ງທ່າມກາງຄົນຄານາອັນ (ພວກຜູ້ທີ່ບໍ່ແມ່ນຄົນຢິວ) ໃຫ້ຖວາຍລູກຫົວປີ (ລູກກົກ) ໃຫ້ເປັນສິ່ງສັກກາລະບູຊາ (ຊຶ່ງເປັນວິທີນະມັດສະການແບບໜຶ່ງ) ຕໍ່ພຣະເຈົ້າຂອງພວກເຂົາ.

3. ກ. ທ່ານຄິດວ່າ ອັບຣາຮາມໄດ້ຮູ້ສຶກແບບໃດຕໍ່ຄຳສັ່ງຂອງພຣະເຈົ້ານີ້?
   ຂ. ເພິ່ນໄດ້ເຊື່ອຟັງພຣະເຈົ້າບໍ?
   ຄ. ອັບຣາຮາມໄດ້ເຮັດຫຍັງແຕ່ເຊົ້າມືດ? (ຂໍ້ 3)
   ງ. ເພິ່ນໄດ້ພາຜູ້ໃດໄປນຳ? ເພິ່ນໄດ້ຈັດແຈງເອົາຫຍັງໄປນຳແດ່? (ຂໍ້ 3)

4. ກ. ອັບຣາຮາມໄດ້ບອກຄົນໃຊ້ຂອງເພິ່ນໃຫ້ເຮັດຫຍັງ? (ຂໍ້ 5)
   ຂ. ອັບຣາຮາມແລະອີຊາກໄດ້ເດີນທາງໄປໃສ?
   ຄ. ອີຊາກໄດ້ຖາມພໍ່ຂອງລາວວ່າແບບໃດ? (ຂໍ້ 7)

5. ກ. ທ່ານຄິດຢ່າງໃດກ່ຽວກັບຄວາມສຳພັນຂອງອັບຣາຮາມແລະ
   ອີຊາກ? ພວກເຂົາຮັກແພງແລະເຄົາລົບນັບຖືຊຶ່ງກັນແລະກັນ
   ບໍ?
   ຂ. ອີຊາກໄດ້ເຊື່ອວາງໃຈໃນພໍ່ຂອງລາວບໍ?

6. ທ່ານຄິດວ່າ ອັບຣາຮາມໄດ້ຮູ້ສຶກແບບໃດ?

**ຂໍ້ສັງເກດ**: ຈົ່ງຈື່ໄວ້ວ່າພຣະເຈົ້າໄດ້ຊົງສັນຍາຈະປະທານໃຫ້ແກ່ອັບຣາຮາມ, ຄືອີຊາກ, ແລະພຣະເຈົ້າກໍໄດ້ຊົງສັນຍາໄວ້ວ່າ ຈະອວຍພອນເຊື້ອສາຍຂອງອີຊາກ ແລະຈະເຮັດໃຫ້ຊາວຍິວເປັນຊົນຊາດໃຫຍ່. ເວລານີ້ພຣະເຈົ້າໄດ້ທົດລອງຄວາມເຊື່ອຂອງອັບຣາຮາມເຖິງຂັ້ນສຸດຂີດ ເພາະຖ້າອີຊາກຕາຍ, ກໍຈະບໍ່ມີຜູ້ທີ່ຈະເຮັດໃຫ້ພຣະສັນຍານັ້ນສຳເລັດ. ຈົ່ງອ່ານເຮັບເຣີ 11:17-19.

7. ກ. ອັບຣາຮາມໄດ້ເຮັດແບບໃດ? (ຂໍ້ 9)
   ຂ. ການທົດລອງນີ້ໄດ້ພິສູດໃຫ້ເຫັນແບບໃດ?

8. ເທວະດາຂອງອົງພຣະຜູ້ເປັນເຈົ້າໄດ້ກ່າວຢ່າງໃດຕໍ່ອັບຣາ
   ຮາມ? (ຂໍ້ 12)

9. ພຣະເຈົ້າຊົງຮູ້ໄດ້ແນວໃດວ່າ "ອັບຣາຮາມຢຳເກງພຣະອົງ"?

10. ອັບຣາຮາມໄດ້ຮຽນບົດຮຽນແບບໃດຈາກພຣະເຈົ້າໃນປະສົບການອັນນີ້

ກ. ກ່ຽວກັບການຖວາຍມະນຸດ?

ຂ. ກ່ຽວກັບຄວາມຊອບທຳທີ່ຈະເຮັດໃຫ້ພຣະສັນຍາຂອງພຣະອົງສຳເລັດ?

ຄ. ກ່ຽວກັບຄວາມສາມາດຂອງພຣະເຈົ້າທີ່ຈະປະທານສິ່ງທີ່ຕ້ອງການທຸກໆຢ່າງໃຫ້?

**<u>ຂໍ້ສັງເກດ</u>**: ມີຫຼາຍເລື່ອງໃນພຣະຄຳພີເດີມຊຶ່ງໄດ້ເລັ່ງເຖິງເຫດການທີ່ຈະເກີດຂຶ້ນຢູ່ໃນພຣະຄຳພີໃໝ່. ອັບຣາຮາມແລະອີຊາກທີ່ຢູ່ໃນບົດຮຽນບົດນີ້ກໍແມ່ນເລັ່ງເຖິງພຣະເຢຊູຄຣິດ ພຣະບຸດຂອງພຣະເຈົ້າທີ່ໄດ້ສິ້ນພຣະຊົນແທນຄວາມຜິດບາບຂອງພວກເຮົາ. ຈົ່ງອ່ານໂຢຮັນ 1:29, 3:16, ແລະ 10:17-18.

## ຈົ່ງອ່ານ ປະຖົມມະການ 23:1-2, 19 ແລະ 24:1-9

11. ກ. ນາງຊາຣາມີອາຍຸຈັກປີໃນເວລາທີ່ເພິ່ນສິ້ນຊີວິດ? (ຂໍ້ 1)

ຂ. ອັບຣາຮາມໄດ້ຝັງສົບເພິ່ນໄວ້ຢູ່ໃສ? (ຂໍ້ 19)

**<u>ຂໍ້ສັງເກດ</u>**: ຈົ່ງຈື່ໄວ້ວ່າ ພຣະເຈົ້າໄດ້ສັນຍາຈະປະທານແຜ່ນດິນການາອັນໃຫ້ແກ່ອັບຣາຮາມ. ອັບຣາຮາມໄດ້ສະແດງຄວາມເຊື່ອຂອງເພິ່ນໃນພຣະເຈົ້າໃນເວລາທີ່ເພິ່ນໄດ້ຝັງສົບພັນລະຍາຂອງເພິ່ນໃນແຜ່ນດິນຄານາອັນແທນທີ່ຈະນຳສົບຂອງລາວກັບຄືນໄປຍັງບ່ອນທີ່ລາວເກີດ.

12. ກ. ແມ່ນຫຍັງຄືຄວາມຫ່ວງໃຍອັນໃຫຍ່ຂອງອັບຣາຮາມທີ່ກ່ຽວ
ກັບອີຊາກ? (24:3)
ຂ. ເປັນຫຍັງເພິ່ນຈຶ່ງບໍ່ຢາກໃຫ້ອີຊາກແຕ່ງງານກັບຍິງຄານາ
ອັນ?

13. ອັບຣາຮາມໄດ້ໃຫ້ຂໍ້ແນະນຳອັນໃດແກ່ຄົນໃຊ້ຂອງເພິ່ນໃນ
ການຊອກເມຍໃຫ້ອີຊາກ? (24:4-9)

14. ອັບຣາຮາມຫວັງວ່າພຣະເຈົ້າຈະຊ່ອຍເພິ່ນແບບໃດໃນການ
ຫາເມຍໃຫ້ອີຊາກ? (ຂໍ້ 7)

## ຈົ່ງອ່ານປະຖົມມະການ 25:7-11

15. ກ. ອັບຣາຮາມໄດ້ມີອາຍຸຫຼາຍປານໃດໃນເວລາທີ່ເພິ່ນສິ້ນລົມ
ຫາຍໃຈ? (ຂໍ້ 1)
ຂ. ເພິ່ນໄດ້ຖືກຝັງສົບໄວ້ຢູ່ໃສ? (ຂໍ້ 9)

## ບົດຫຍໍ້:

1. ອັບຣາຮາມໄດ້ສະແດງໃຫ້ເຫັນແບບໃດວ່າ ເພິ່ນເປັນສະຫາຍຂອງພຣະເຈົ້າ? ຈົ່ງອ່ານ ໂຢຮັນ 15:14. ພຣະເຢຊູໄດ້ຊົງກ່າວກ່ຽວກັບມິດສະຫາຍທີ່ແທ້ຈິງນັ້ນເປັນແບບໃດ?

## ບົດສະຫລຸບ:

ໃນການທົດລອງຄວາມເຊື່ອອັນຍິ່ງໃຫຍ່ຂອງອັບຣາຮາມນີ້, ພຣະເຈົ້າໄດ້ຊົງໃຫ້ເພິ່ນໄວ້ວາງໃຈໃນພຣະອົງວ່າ ບໍ່ແມ່ນທາງຊີວິດ

ຂອງເພິ່ນເອງ ແຕ່ທາງອີຊາກ ລູກຊາຍຄົນດຽວຂອງເພິ່ນ ຜູ້ທີ່ເພິ່ນຮັກຫຼາຍກວ່າຊີວິດຂອງເພິ່ນເອງ. ສຳລັບພວກເຮົາທີ່ຈະທໍລະມານນັ້ນກໍງ່າຍກວ່າທີ່ຈະເຫັນລູກທັງຫຼາຍຂອງພວກເຮົາຕ້ອງທໍລະມານ. ໃນການທົດລອງນີ້ ຄວາມໄວ້ວາງໃຈຂອງອັບຣາຮາມໃນລິດເດດອຳນາດຂອງພຣະເຈົ້າໄດ້ສະແດງໃຫ້ເຫັນໂດຍການເຊື່ອຟັງພຣະເຈົ້າຈົນກະທັ້ງຈະຖວາຍລູກຂອງຕົນ. ການທົດລອງນີ້ໄດ້ພິສູດໃຫ້ເຫັນວ່າອັບຣາຮາມຮັກພຣະເຈົ້າດ້ວຍສຸດໃຈ, ສຸດຄວາມຄິດ, ແລະສຸດກຳລັງຂອງເພິ່ນ. ເພິ່ນໄດ້ໃຫ້ພຣະເຈົ້າເປັນໜຶ່ງໃນຊີວິດຂອງເພິ່ນ ເປັນພຣະຜູ້ສ້າງ, ເປັນອົງພຣະຜູ້ເປັນເຈົ້າ, ແລະເປັນມິດສະຫາຍຂອງເພິ່ນ.

# ໂຢເຊບ - ຜູ້ມີໃຈເມດຕາ

ໂຢເຊບເປັນຜູ້ໜຶ່ງທີ່ມີປະສົບການຕໍ່ສະພາບການຫຼາຍຢ່າງທີ່ຫຍຸ້ງຍາກໃນຊີວິດຂອງຕົນ. ມີຫຼາຍສິ່ງຫຼາຍຢ່າງເກີດຂຶ້ນໃນຊີວິດຂອງລາວທີ່ເກືອບຈະທຳລາຍລາວ, ແຕ່ໂຢເຊບກໍສາມາດຮັບໄຊຊະນະຕໍ່ສິ່ງເຫຼົ່ານັ້ນ. ພວກເຮົາສາມາດຮຽນຮູ້ຫຼາຍຢ່າງຈາກຊີວິດຂອງລາວ. ພວກເຮົາສາມາດເຫັນໄດ້ເຖິງວິທີທີ່ໂຢເຊບໄດ້ກາຍມາເປັນຜູ້ທີ່ແຂງແຮງເຂັ້ມແຂງໃນພຣະເຈົ້າ ໃນເວລາທີ່ລາວໄດ້ໄຊຊະນະຕໍ່ສະຖານະການຂອງຊີວິດໂດຍຄວາມເຊື່ອໃນພຣະເຈົ້າ.

# ບົດທີ 5
## (ປະຖົມມະການ 37 ແລະ 39)

# ໂຢເຊບ - ຖືກຂົ່ມເຫັງແລະຖືກທົດລອງ

### ຈົ່ງອ່ານປະຖົມມະການ 37:1-11

1. ກ. ຂໍ້ທີ 1-4 ໄດ້ສອນພວກເຮົາຢ່າງໃດກ່ຽວກັບໂຢເຊບແລະຄອບຄົວຂອງລາວ?
   ຂ. ພໍ່ຂອງລາວມີອາຊີບຫຍັງ?
   ຄ. ແມ່ນຫຍັງຄືສິ່ງທີ່ພິເສດທີ່ພໍ່ຂອງໂຢເຊບໄດ້ປະຕິບັດຕໍ່ລາວ? (ຂໍ້ 3)
   ງ. ເປັນຫຍັງເພິ່ນຈຶ່ງເຮັດແບບນັ້ນ? (ຂໍ້ 3)

2. ກ. ພວກອ້າຍຂອງໂຢເຊບຮູ້ສຶກແບບໃດຕໍ່ລາວ? (ຂໍ້ 4)
   ຂ. ພວກເຂົາໄດ້ເຮັດຕໍ່ລາວແບບໃດ? (ຂໍ້ 4)

3. ກ. ຈົ່ງອະທິບາຍເຖິງຄວາມຝັນຂອງໂຢເຊບທັງສອງຢ່າງ. (ຂໍ້ 5-11)
   ຂ. ຄວາມຝັນນີ້ເປັນຜົນສະທ້ອນຢ່າງໃດຕໍ່ຄອບຄົວ?
   ຄ. ຢາໂຄບຮູ້ສຶກແບບໃດຕໍ່ຄວາມຝັນຂອງໂຢເຊບ?
   ງ. ອ້າຍຂອງລາວໄດ້ຖາມລາວແບບໃດ? (ຂໍ້ 8)

**<u>ຂໍ້ສັງເກດ</u>**: ໂຢເຊບຍັງໜຸ່ມນ້ອຍແລະບໍ່ສະຫຼາດ. ລາວບໍ່ຮູ້ວ່າ ບາງທີລາວຄວນຈະມິດຢູ່ກ່ຽວກັບຄວາມຝັນຂອງລາວນັ້ນ. ລາວມີແຕ່ເຮັດໃຫ້ອ້າຍຂອງລາວກຽດຊັງລາວຕື່ມອີກ. ມີບາງເທື່ອທີ່ພວກເຮົາໄດ້ນຳບັນຫາມາສູ່ຕົນເອງເພາະພວກເຮົາເວົ້າຫຼາຍໂພດ.

## ຈົ່ງອ່ານ ປະຖົມມະການ 37:12-36

4. ຢາໂຄບໄດ້ຂໍໃຫ້ໂຢເຊບເຮັດຫຍັງ? (ຂໍ້ 12-13)

5. ເວລາທີ່ພວກອ້າຍໄດ້ເຫັນໂຢເຊບ ພວກເຂົາໄດ້ຕົກລົງກັນທີ່ຈະເຮັດຫຍັງ? (ຂໍ້ 18-20)

6. ເປັນຫຍັງພວກເຂົາຈຶ່ງປ່ຽນແຜນການຂອງພວກເຂົາ? (ຂໍ້ 25-27)

7. ກ. ພວກເຂົາໄດ້ວາງແຜນທີ່ຈະຫຼອກລວງພໍ່ຂອງພວກເຂົາແບບໃດ? (ຂໍ້ 31-33)
   ຂ. ຢາໂຄບຮູ້ສຶກແບບໃດເມື່ອໄດ້ຍິນຂ່າວນັ້ນ? (ຂໍ້ 33-35)

**<u>ຂໍ້ສັງເກດ</u>**: ພວກອ້າຍຂອງໂຢເຊບຕ້ອງຮູ້ສຶກລະອາຍໃຈແລະສຳນຶກຜິດ ໃນຂະນະທີ່ພວກເຂົາເບິ່ງພໍ່ຂອງພວກເຂົາທີ່ເປັນທຸກໂສກເສົ້າສຳລັບລູກຊາຍຂອງເພິ່ນ. ຄວາມອິດສາໄດ້ນຳພາໃຫ້ພວກເຂົາເຮັດແບບນັ້ນຕໍ່ນ້ອງຂອງພວກເຂົາ. ຄວາມອິດສາເປັນຄວາມຮູ້ສຶກທີ່ທຳລາຍຢ່າງຮ້າຍແຮງ. ພວກເຮົາຈະມີໄຊຊະນະຕໍ່ຄວາມອິດສານີ້ໄດ້ແນວໃດ? (ຈົ່ງອ່ານ ໂກໂລຊາຍ 3:5 ແລະ 12-13).

8. ແມ່ນຫຍັງໄດ້ເກີດຂຶ້ນກັບໂຢເຊບໃນເວລາທີ່ລາວໄດ້ມາ
ເຖິງປະເທດອີຢິບແລ້ວ? (ຂໍ້ 36)

## ຈົ່ງອ່ານ ປະຖົມມະການ 39:1-6

9. ກ. ໂປຕິຟາແມ່ນໃຜ? (ຂໍ້ 1)
ຂ. ໂຢເຊບໄດ້ເຮັດໃຫ້ເກີດຢ່າງໃດໃນເຮືອນຂອງໂປຕິຟາ?(ຂໍ້2)
ຄ. ໂຢເຊບໄດ້ຮັບຄວາມສຳເລັດແລະໄດ້ຮັບໜ້າທີ່ໃໝ່ແບບໃດ? (ຂໍ້ 6)
ງ. ເປັນຫຍັງໂປຕິຟາຈິ່ງໄດ້ມອບໜ້າທີ່ຫຼາຍຢ່າງໃຫ້ໂຢເຊບນັ້ນ? (ຂໍ້ 3-4)

## ຈົ່ງອ່ານ ປະຖົມມະການ 39:6-13

10. ກ. ເມຍຂອງໂປຕິຟາໄດ້ເຮັດການຊົ່ວຮ້າຍແບບໃດ? (ຂໍ້ 7 ແລະ 10)
ຂ. ເປັນຫຍັງໂຢເຊບຈິ່ງບໍ່ໄດ້ຕົກໃນການທົດລອງອັນນີ້? (ຂໍ້ 9)

11. ກ. ເປັນຫຍັງໂຢເຊບຈິ່ງຖືກນຳເອົາໄປໃສ່ຄຸກ? (ຂໍ້ 14-18)
ຂ. ທ່ານຄິດວ່າ ໂຢເຊບຈະຮູ້ສຶກແນວໃດໃນເວລາທີ່ລາວຖືກ
ຄຸກນັ້ນ?

12. ຈົ່ງອ່ານຂໍ້ທີ21.ອົງພຣະຜູ້ເປັນເຈົ້າໄດ້ຊົງຊ່ວຍໂຢເຊບແບບໃດ?
(ໃນທຸກສະຖານະການ, ໂຢເຊບໄດ້ຮູ້ສຶກວ່າ ພຣະເຈົ້າຊົງສະຖິດ
ຢູ່ນຳລາວ).

13. ເປັນຫຍັງໂຢເຊບຈຶ່ງໄດ້ຮັບຜົນສຳເລັດ ແມ່ນກະທັ້ງວ່າຊີວິດຂອງຕົນ ຕົກຢູ່ໃນສະຖານະການທີ່ຫຍຸ້ງຍາກຫຼາຍ? (ຂໍ້ 23)

## ບົດຫຍໍ້:

1. ສະພາບການແບບໃດທີ່ເກີດຂຶ້ນໃນຊີວິດຂອງໂຢເຊບທີ່ອາດເຮັດໃຫ້ໂຢເຊບຮູ້ສຶກວ່າ ພຣະເຈົ້າໄດ້ຊົງປະຖິ້ມລາວແລ້ວ?

2. ແມ່ນຫຍັງໄດ້ເກີດຂຶ້ນກັບໂຢເຊບທີ່ສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າບໍ່ໄດ້ປະຖິ້ມລາວຈັກເທື່ອ?

3. ໂຢເຊບໄດ້ຕໍ່ສູ້ກັບຄວາມບາບແບບໃດ? ໃນຊີວິດຄຣິສຕຽນຂອງພວກເຮົາ, ພວກເຮົາຮຽນຮູ້ທີ່ຈະຕໍ່ສູ້ກັບຄວາມບາບ, ຈົ່ງເວົ້າ "ບໍ່" ຕໍ່ສິ່ງທີ່ພວກເຮົາຮູ້ວ່າບໍ່ເປັນທີ່ພໍພຣະໄທພຣະເຈົ້າ.

ຈົ່ງອ່ານ ເຮັບເຣີ 12:1-2. "ຈົ່ງປັກຕາເບິ່ງພຣະເຢຊູ" (ຂໍ້ທີ 2).

## ບົດສະຫລຸບ:

ເຖິງແມ່ນວ່າພວກອ້າຍຂອງໂຢເຊບແລະເມຍຂອງໂປຕີຟາຈະເຮັດຜິດຢ່າງໃຫຍ່ຫຼວງຕໍ່ໂຢເຊບ ລາວກໍບໍ່ໄດ້ເສົ້າໂສກເສຍໃຈ, ໃຈຮ້າຍ, ຫຼືຕົກໃນຄວາມຜິດບາບ. ພຣະເຈົ້າຊົງສະຖິດຢູ່ນຳລາວເຖິງແມ່ນວ່າສະພາບແວດລ້ອມຈະຫຍຸ້ງຍາກສັບສົນຫຼາຍປານໃດກໍຕາມ. ພຣະເຈົ້າບໍ່ໄດ້ສັນຍາວ່າ ພວກເຮົາຈະບໍ່ມີຄວາມຫຍຸ້ງຍາກແລະບໍ່ມີການທົດລອງໃນຊີວິດຂອງພວກເຮົາ, ແຕ່ພຣະອົງຊົງສັນຍາໄວ້ວ່າຈະຢູ່ກັບພວກເຮົາໃນທ່າມກາງສະພາບການທີ່ຫຍຸ້ງຍາກ.

# ບົດທີ 6
## (ປະຖົມມະການ 40 – 41)

# ໂຢເຊບ – ຜິດຫວັງ ແລະ ຄອຍຖ້າ

### ປະຖົມມະການ 40:1–23

1. ກ. ເປັນຫຍັງກະສັດຈິ່ງເອົາຄົນໃຊ້ຂອງເພິ່ນສອງຄົນໃສ່ຄຸກໄວ້ກັບໂຢເຊບ? (ຂໍ້ 1)
   ຂ. ໂຢເຊບຮູ້ຈັກພວກເຂົາໄດ້ແບບໃດ? (ຂໍ້ 3-4)

**<u>ຂໍ້ສັງເກດ</u>**: ເຖິງແມ່ນວ່າ ໂຢເຊບເອງໄດ້ມີບັນຫາຫຼາຍຢ່າງແລ້ວກໍຕາມ, ລາວຍັງເປັນຫ່ວງນຳຜູ້ທີ່ມີບັນຫາແລະຂໍ້ຫຍຸ້ງຍາກເໝືອນກັນ. ໃນຖານະທີ່ເປັນຄຣິສຕຽນ, ທ່ານເປັນຫ່ວງຄົນອື່ນຫຼືບໍ? ທ່ານໄດ້ສະແດງຄວາມຫ່ວງໃຍແລະຄວາມຮັກຕໍ່ຜູ້ອື່ນຫຼືບໍ?

2. ນັກໂທດທັງສອງໄດ້ຂໍໃຫ້ໂຢເຊບເຮັດຫຍັງໃຫ້ພວກເຂົາ? (ຂໍ້ 8)

3. ເປັນຫຍັງໂຢເຊບຈິ່ງສາມາດເຂົ້າໃຈເຖິງຄວາມຝັນຂອງພວກເຂົາໄດ້? (ຂໍ້ 8)

4. ໂຢເຊບໄດ້ບອກວ່າ ແມ່ນຫຍັງຈະເກີດຂຶ້ນກັບຫົວໜ້າພະນັກງານເຮັດເຫຼົ້າອະງຸ່ນ? (ຂໍ້ 13)

5. ໂຢເຊບໄດ້ຂໍຮ້ອງໃຫ້ລາວເຮັດຫຍັງໃຫ້? (ຂໍ້ 14)

6. ກ. ແມ່ນຫຍັງໄດ້ເກີດຂຶ້ນກັບພະນັກງານເຮັດເຫຼົ້າອະງຸ່ນ? (ຂໍ້ 20)
   ຂ. ແມ່ນຫຍັງໄດ້ເກີດຂຶ້ນຕໍ່ພະນັກງານເຮັດເຂົ້າຈີ່? (ຂໍ້ 22)

7. ໂຢເຊບໄດ້ຮັບຄວາມຜິດຫວັງແບບໃດ? (ຂໍ້ 23)

**<u>ຂໍ້ສັງເກດ</u>**: ການລໍຄອຍພຣະເຈົ້າຊ່ອຍພວກເຮົາຈາກຄວາມຫຍຸ້ງຍາກນັ້ນ ຫຼາຍເທື່ອເປັນການຍາກ ແຕ່ພຣະເຈົ້າໄດ້ຊົງສັນຍາໄວ້ວ່າພຣະອົງຈະຊ່ອຍພວກເຮົາໃນຂະນະທີ່ພວກເຮົາໄວ້ວາງໃຈໃນພຣະອົງ. ພຣະອົງສາມາດສອນພວກເຮົາຫຼາຍຢ່າງໂດຍການລໍຖ້າແລະໂດຍທາງສະພາບແວດລ້ອມທີ່ຫຍຸ້ງຍາກ. ຈົ່ງອ່ານເພງສັນລະເສີນ 25:4-5; 40:1-3; 32:1-2, ແລະ 5-7.

## ປະຖົມມະການ 41:1-36

8. ກ. ໃນທີ່ສຸດກະສັດໄດ້ຍິນເຖິງເລື່ອງໂຢເຊບໃນທາງໃດ? (ຂໍ້ 1-8)
   ຂ. ໂຢເຊບໄດ້ຢູ່ໃນຄຸກດົນປານໃດ? (ຂໍ້ 1)
   ງ. ຫົວໜ້າພະນັກງານເຮັດເຫຼົ້າອະງຸ່ນໄດ້ກາບທູນສິ່ງໃດຕໍ່ກະສັດທີ່ກ່ຽວກັບໂຢເຊບ? (9-13)

**<u>ຂໍ້ສັງເກດ</u>**: ເວລາຂອງພຣະເຈົ້າເປັນເວລາທີ່ດີທີ່ສຸດ. ຖ້າຫາກຫົວໜ້າພະນັກງານເຮັດເຫຼົ້າອະງຸ່ນໄດ້ຂໍໃຫ້ກະສັດຟາໂຣປ່ອຍໂຢເຊບສອງປີກ່ອນໜ້ານີ້, ພຣະອົງ (ຟາໂຣ)ອາດຈະບໍ່ປ່ອຍກໍເປັນໄດ້. ແຕ່ດຽວນີ້ ພຣະອົງໄດ້ເອີ້ນໂຢເຊບອອກມາຈາກຄຸກເພື່ອຈະໃຫ້ມາແກ້ຄວາມຝັນຂອງພຣະອົງ. ໂຢເຊບກໍໄດ້ຈະເລີນໃຫຍ່ຂຶ້ນຝ່າຍຈິດວິນຍານເໝືອນກັນ, ແລະດຽວນີ້ລາວໄດ້ມີໃຈກ້າທີ່ຈະບອກກະສັດເຖິງພຣະເຈົ້າ.

9. ໂຢເຊບໄດ້ເນັ້ນເຖິງພຣະເຈົ້າໃນຂໍ້ 16, 25, 28, ແລະ 32 ແບບໃດ?

10. ຈົ່ງອ່ານຂໍ້ທີ 33-36.
   ກ. ໂຢເຊບໄດ້ບອກໃຫ້ກະສັດເຮັດຫຍັງ?
   ຂ. ຊົນຊາດອີຢີບຈະໄດ້ລອດພົ້ນຈາກການອຶດອາຫານໄດ້ແບບໃດ?

## ຈົ່ງອ່ານປະຖົມມະການ 41:37–57

11. ກ. ກະສັດມີຄວາມຮູ້ສຶກແບບໃດຕໍ່ແຜນການຂອງໂຢເຊບ? (ຂໍ້ 37)
   ຂ. ກະສັດຟາໂຣໄດ້ຍອມຮັບຮູ້ວ່າ ສະຕິປັນຍາຂອງໂຢເຊບນັ້ນໄດ້ມາຈາກໃສ? (ຂໍ້ 39)
   ຄ. ກະສັດໄດ້ມອບອຳນາດຢ່າງໃດໃຫ້ໂຢເຊບ? (ຂໍ້ 40-44)
   ງ. ກະສັດໄດ້ມອບຍົດຖາບັນດາສັກແບບໃດໃຫ້ໂຢເຊບ? (ຂໍ້ 42)

12. ໂຢເຊບໄດ້ມີລູກຊາຍສອງຄົນ. ລາວໃສ່ຊື່ຫຍັງໃຫ້ລູກທັງສອງຄົນນັ້ນ? ຊື່ຂອງພວກເຂົາມີຄວາມໝາຍຫຍັງ? (ຂໍ້ 50-52)

**ບົດຫຍໍ້**: ໃນບົນທີ່ 40-41, ໂຢເຊບໄດ້ພົບກັບຄວາມຫຍຸ້ງຍາກ ແລະຄວາມຜິດຫວັງ, ແຕ່ຈາກສິ່ງເຫຼົ່ານີ້ລາວໄດ້ຮຽນຮູ້ຈັກພຣະເຈົ້າ. ລາວໄດ້ຮຽນຮູ້ເໝືອນກັນວ່າ ການທີ່ລາວໄດ້ລຸດພົ້ນຈາກການຄຸມຂັງນັ້ນບໍ່ໄດ້ມາຈາກສະຕິປັນຍາຫຼືແຜນການຂອງລາວເອງ ແຕ່ມາຈາກພຣະຫັດອັນຊົງລິດຂອງພຣະເຈົ້າ. ພຣະເຈົ້າຊົງໃຊ້ໂຢເຊບໃຫ້ເປັນພະຍານຕໍ່ກະສັດ, ຄືຟາໂຣ, ແລະຜູ້ອື່ນໆ.

**ບົດສະຫລຸບ**:

ໃນເວລາທີ່ພວກເຮົາທໍ້ຖອຍແລະໄດ້ຮັບຄວາມຜິດຫວັງໃນຊີວິດ, ຈົ່ງໃຫ້ພວກເຮົາຈື່ໄວ້ວ່າ ພຣະເຈົ້າຜູ້ຊົງສະຖິດຢູ່ໃນສະຫວັນບໍ່ໄດ້ປະຖິ້ມພວກເຮົາ. ພຣະອົງຊົງຮູ້ເຖິງສະພາບແວດລ້ອມໃນຊີວິດຂອງພວກເຮົາໝົດທຸກຢ່າງ ແລະຢາກໃຫ້ພວກເຮົາໄວ້ວາງໃຈໃນພຣະອົງໃຫ້ພຣະອົງຊ່ອຍເຫຼືອພວກເຮົາ ເພາະວ່າພຣະອົງຊົງຮັກພວກເຮົານັ້ນເອງ.

# ບົດທີ 7
## (ປະຖົມມະການ 42-45)

# ໂຢເຊບ - ການໃຫ້ອະໄພ

### ປະຖົມມະການ 42:1-38

1. ກ. ເປັນຫຍັງຢາໂຄບຈຶ່ງໄດ້ສົ່ງອ້າຍທັງສິບຂອງໂຢເຊບໄປ ປະເທດອີຢີບ? (ຂໍ້ 1-5)
   ຂ. ຈົ່ງອະທິບາຍເຖິງເຫດການທີ່ເກີດຂຶ້ນໃນເວລາທີ່ພວກອ້າຍ ໄດ້ພົບໂຢເຊບ. (ຂໍ້ 5-8)
   ຄ. ໂຢເຊບໄດ້ກະທຳຕໍ່ພວກອ້າຍຂອງລາວແບບໃດ?
   ງ. ລາວໄດ້ຫາເລື່ອງໃສ່ພວກເຂົາແບບໃດ? (ຂໍ້ 8-10)

2. ກ. ພວກອ້າຍຮູ້ສຶກແບບໃດເມື່ອໂຢເຊບໄດ້ສັ່ງໃຫ້ພວກເຂົານຳ ນ້ອງຫຼ້າຂອງພວກເຂົາມາປະເທດອີຢີບ? (ຂໍ້ 21-24)
   ຂ. ພວກເຂົາຮູ້ສຶກແບບໃດເມື່ອໄດ້ພົບເງິນໃນຖົງເຂົ້າຂອງພວກ ເຂົາ? (ຂໍ້ 25-28)

3. ກ. ພໍ່ຂອງພວກເຂົາ, ຄືຢາໂຄບ ໄດ້ຮູ້ສຶກແບບໃດເມື່ອພວກ ເຂົາບອກເພິ່ນເຖິງເຫດການທັງໝົດທີ່ເກີດຂຶ້ນໃນປະເທດອີ ຢີບ? (ຂໍ້ 35-38).

ຂ. ເປັນຫຍັງຢາໂຄບຈຶ່ງຢ້ານຫຼາຍທີ່ຈະສູນເສຍເບັນຈາມິນ? (ຂໍ້ 38)

4. ໂຢເຊບຍັງຮັກແລະສົງສານພວກອ້າຍຂອງຕົນຢູ່ບໍ? (ຂໍ້ 23-24)

## ປະຖົມມະການ 43:1–34

5. ກ. ເປັນຫຍັງຢາໂຄບຈຶ່ງໄດ້ປ່ຽນຄວາມຄິດຂອງເພິ່ນເຖິງການຈະສົ່ງເບັນຈາມິນໄປປະເທດອີຢິບ? (ຂໍ້ 6-12)
   ຂ. ເພິ່ນໄດ້ສັ່ງລູກຂອງເພິ່ນໃຫ້ເຮັດຫຍັງແດ່? (ຂໍ້ 12-13)
   ຄ. ຄຳອະທິຖານແບບໃດທີ່ຢາໂຄບໄດ້ອະທິຖານ? (ຂໍ້ 14)

6. ກ. ໂຢເຊບໄດ້ກະທຳແບບໃດຕໍ່ພວກອ້າຍນ້ອງຂອງລາວເມື່ອພວກເຂົາກັບມາ? (ຂໍ້ 15-17)
   ຂ. ອ້າຍນ້ອງຂອງລາວໄດ້ຮູ້ສຶກແບບໃດ? (ຂໍ້ 18-22)

7. ກ. ໂຢເຊບຮູ້ສຶກແບບໃດເມື່ອໄດ້ຮັບປະທານອາຫານຮ່ວມກັບອ້າຍນ້ອງຂອງຕົນ? (ຂໍ້ 30-34)
   ຂ. ພວກອ້າຍນ້ອງຂອງລາວຮູ້ສຶກແບບໃດເມື່ອພວກເຂົາໄດ້ກິນເຂົ້າຢູ່ທີ່ໂຕະຂອງໂຢເຊບ?

## ປະຖົມມະການ 44:1–34

8. ກ. ໂຢເຊບມີແຜນການແບບໃດ?(ຂໍ້ 1-5)
   ຂ. ທ່ານຄິດວ່າ ເປັນຫຍັງໂຢເຊບຈຶ່ງເອົາຈອກເງິນໃສ່ໄວ້ໃນຖົງເຂົ້າຂອງເບັນຈາມິນ?

9. ພວກອ້າຍນ້ອງໄດ້ໃຫ້ຄຳໝັ້ນສັນຍາແບບໃດ? (ຂໍ້ 9)

10. ກ. ຈົ່ງອ່ານຂໍ້ທີ 10. ຄົນໃຊ້ຂອງໂຢເຊບໄດ້ອອກຄຳສັ່ງແບບ ໃດ? ເປັນຫຍັງ?

ຂ. ພວກອ້າຍຮູ້ສຶກແບບໃດເມື່ອຄົນໃຊ້ໄດ້ພົບຈອກເງິນຢູ່ ໃນຖົງເຂົ້າຂອງເບັນຈາມິນ? (ຂໍ້ 13)

ຄ. ໂຢເຊບໄດ້ອອກຄຳສັ່ງແບບໃດອີກ? (ຂໍ້ 17)

ງ. ເປັນຫຍັງຢູດາຈິ່ງຂໍຮ້ອງຕໍ່ໂຢເຊບ? (ຂໍ້ 18-34)

<u>**ຂໍ້ສັງເກດ**</u>: ປະຖົມມະການ 37:25-28. ແມ່ນອ້າຍຂອງໂຢເຊບ, ທີ່ຊື່ວ່າຢູດາ, ໄດ້ຊັກຊວນພວກນ້ອງຂອງລາວບໍ່ໃຫ້ຂ້າໂຢເຊບ ແຕ່ໃຫ້ຂາຍໂຢເຊບໃຫ້ແກ່ພໍ່ຄ້າ. ດຽວນີ້ ໂຢເຊບເຫັນຢູດາກຳລັງຂໍຮ້ອງຕໍ່ລາວໃຫ້ໄວ້ຊີວິດຂອງເບັນຈາມິນ, ແລະໂຢເຊບກໍມີຄວາມເມດຕາຫຼາຍ. ໂຢເຊບຮູ້ສຶກເສຍໃຈສຳລັບພວກອ້າຍນ້ອງຂອງຕົນແລະມີຄວາມສົງສານພວກເຂົາແທນທີ່ຈະກຽດຊັງພວກເຂົາ.

## ປະຖົມມະການ 45:1–28

11. ກ. ຈົ່ງອະທິບາຍເຖິງເຫດການ ເມື່ອໂຢເຊບໄດ້ບອກພວກອ້າຍນ້ອງຂອງລາວຕາມຄວາມຈິງວ່າ ລາວແມ່ນໃຜ.(ຂໍ້1-3)

ຂ. ພວກອ້າຍນ້ອງຮູ້ສຶກແບບໃດ? (ຂໍ້ 3-4)

12. ກ. ໂຢເຊບໄດ້ເລົ່າຄຳພະຍານເຖິງການຊົງນຳພາຂອງພຣະເຈົ້າແບບໃດໃຫ້ພວກອ້າຍນ້ອງຂອງລາວຟັງ? (ຂໍ້ 5, 7, ແລະ 9)

ຂ. ໂຢເຊບໄດ້ເລົ່າຄຳພະຍານເຖິງພຣະພອນຂອງພຣະເຈົ້າແບບ
ໃດໃນຊີວິດ ໃຫ້ພວກອ້າຍນ້ອງຂອງລາວຟັງ? (ຂໍ້ 8-9).

**ຂໍ້ສັງເກດ**: ເມື່ອພວກເຮົາຮັບຮູ້ເຖິງພຣະເມດຕາແລະພຣະພອນຂອງພຣະເຈົ້າໃນຊີວິດຂອງຕົນ ມັນຈະນຳພວກເຮົາໃຫ້ສະແດງຄວາມເມດຕາແລະຄວາມຮັກຕໍ່ຄົນອື່ນໆທີ່ຢູ່ໃກ້ຄຽງກັບພວກເຮົາ. ຈົ່ງອ່ານພຣະທຳເອເຟໂຊ 4:31 - 5:2.

13. ໂຢເຊບໄດ້ເຮັດແບບໃດເພື່ອສະແດງເຖິງຄວາມຮັກແລະຄວາມເມດຕາອັນຍິ່ງໃຫຍ່ຕໍ່ພວກອ້າຍນ້ອງຂອງລາວ? (ຂໍ້ 10-11)

14. ກ. ກະສັດໄດ້ຊົງກະທຳແບບໃດເພື່ອສະແດງເຖິງຄວາມເມດຕາອັນຍິ່ງໃຫຍ່ຕໍ່ພວກອ້າຍນ້ອງຂອງໂຢເຊບ? (ຂໍ້ 16-20)
ຂ. ມີທາງໃດແດ່ທີ່ພວກເຮົາຜູ້ເປັນຄຣິສຕຽນສາມາດສະແດງຄວາມເມດຕາຕໍ່ຜູ້ອື່ນ? ຈົ່ງອ່ານພຣະທຳ ເອເຟໂຊ 1:6

15. ຄຳຕັກເຕືອນແບບໃດທີ່ໂຢເຊບໄດ້ເຕືອນພວກອ້າຍນ້ອງຂອງລາວ?(ຂໍ້ 24) ໂຢເຊບຮູ້ຈັກພວກອ້າຍນ້ອງຂອງຕົນເປັນຢ່າງດີ.
16. ຢາໂຄບໄດ້ສະແດງອອກແບບໃດເມື່ອໄດ້ຍິນຂ່າວກ່ຽວກັບໂຢເຊບ? (ຂໍ້ 24)

**ບົດຫຍໍ້**: ຈົ່ງອ່ານປະຖົມມະການ 50:15-21. ພຣະທຳຕອນນີ້ໄດ້ຫຍໍ້ໃຫ້ເຫັນເຖິງທ່າທີຂອງໂຢເຊບແລະອ້າຍນ້ອງຂອງລາວ. ພວກເຂົາຖ່ອມຕົວລົງແລະເສຍໃຈຕໍ່ຄວາມຜິດພາດ ແລະໂຢເຊບໄດ້ມີຄວາມຮັກອັນໃຫຍ່ແລະໃຫ້ອະໄພພວກເຂົາ.

ຈົ່ງອ່ານ 50:20 ແລະ ໂຣມ 8:28. ໂຢເຊບຮູ້ວ່າ ພຣະເຈົ້າຊົງຄຸ້ມຄອງໃນຊີວິດຂອງລາວ. ອາຈານໂປໂລ ໃນ ໂຣມ 8:28 ໄດ້ເຕືອນພວກເຮົາເໝືອນກັນວ່າ ພຣະເຈົ້າຊົງຄຸ້ມຄອງຢູ່ໃນທຸກສະພາບການຂອງຊີວິດຂອງພວກເຮົາ.

**ບົດສະຫລຸບ**:

ໃນເວລາທີ່ພວກເຮົາທູນຂໍໃຫ້ພຣະເຈົ້າປະທານອະໄພໃຫ້; ໂດຍຄວາມຮັກຄວາມເມດຕາອັນຍິ່ງໃຫຍ່ ພຣະອົງຈະອະໄພຄວາມຜິດບາບຂອງພວກເຮົາ. ເມື່ອພວກເຮົາໄດ້ຮັບການອະໄພແລະການຊຳລະລ້າງ, ພວກເຮົາກໍຄວນອະໄພຕໍ່ຜູ້ທີ່ເຮັດຜິດຕໍ່ສູ້ພວກເຮົາເໝືອນກັນ. ທ່ານໄດ້ທູນຂໍພຣະເຈົ້າໃຫ້ອະໄພຕໍ່ຄວາມຜິດບາບຂອງທ່ານຫຼືຍັງ? ທ່ານໄດ້ໃຫ້ອະໄພຄວາມຜິດຂອງຜູ້ທີ່ໄດ້ເຮັດຜິດຕໍ່ທ່ານຫຼືຍັງ?

# ໂມເຊ - ຜູ້ນຳ ແລະ ຜູ້ປົດປ່ອຍ

ສຸພາສິດ 29:18 "ບ່ອນໃດທີ່ຂາດນິມິດ ປະຊາຊົນກໍຈະຈິບຫາຍຖືກໂທດ". ມະນຸດທຸກຊັ້ນວັນນະຕ້ອງການຜູ້ນຳພາທີ່ມີນິມິດ ຄວາມຫວັງແລະຈຸດປະສົງມາເປັນຜູ້ນຳຂອງພວກເຂົາ. ໂມເຊກໍເປັນຜູ້ນຳພາຜູ້ໜຶ່ງທີ່ມະນຸດຕ້ອງການ. ລາວເປັນຜູ້ທີ່ມີຈຸດປະສົງແລະສາມາດນຳພາໄພ່ພົນຂອງພຣະເຈົ້າໄປໃນທາງທີ່ຖືກຕ້ອງໄດ້. ໂດຍການຮຽນຮູ້ເຖິງຊີວິດຂອງໂມເຊນີ້ ພວກເຮົາຈະສາມາດເຫັນບໍ່ພຽງແຕ່ການປ່ຽນແປງໃນຊີວິດຂອງຊົນຊາດອິດສະຣາເອນເທົ່ານັ້ນ ແຕ່ຈະເຫັນຫຼາຍສິ່ງຫຼາຍຢ່າງທີ່ປ່ຽນແປງໃນຊີວິດຂອງໂມເຊເອງອີກດ້ວຍ. ພຣະເຈົ້າຊົງເປັນຫ່ວງຜູ້ຮັບໃຊ້ແລະວຽກງານຂອງຜູ້ຮັບໃຊ້ທີ່ກຳລັງປະຕິບັດຢູ່ນັ້ນສະເໝີ. ພຣະເຈົ້າຊົງປ່ອຍໃຫ້ໂມເຊໄດ້ມີປະສົບການຫຼາຍຢ່າງທີ່ຫຍຸ້ງຍາກເພື່ອຈັດຕຽມລາວໃຫ້ເປັນຜູ້ນຳພາຜູ້ໜຶ່ງ.

# ບົດທີ 8
## (ພຣະທຳອົບພະຍົບ 2 – 4)
# ໂມເຊ – ຖືກເອີ້ນໃຫ້ເປັນຜູ້ນຳພາ

### ພຣະທຳອົບພະຍົບ 2:1–25

1. ກ. ສະພາບການຂອງຊົນຊາດອິດສະຣາເອນນັ້ນເປັນແນວໃດ ໃນເວລາທີ່ໂມເຊເກີດ? (ຈົ່ງອ່ານພຣະທຳອົບພະຍົບ 1:8-14)
   ຂ. ໂມເຊໄດ້ຖືກຊ່ອຍໃຫ້ພົ້ນຈາກຄວາມຕາຍດ້ວຍວິທີໃດ?

__ຂໍ້ສັງເກດ__: ເຮັບເຣີ, ຢິວ, ແລະ ອິດສະຣາເອນ ແມ່ນຊື່ຕ່າງໆຂອງຊົນຊາດດຽວກັນ ຄືຊົນຊາດທີ່ພຣະເຈົ້າຊົງເລືອກໄວ້.

2. ແມ່ຂອງໂມເຊສາມາດເບິ່ງແຍງລູກຂອງຕົນໄດ້ແບບໃດ? (ຂໍ້ 7-8)

__ຂໍ້ສັງເກດ__: ໂມເຊໄດ້ຮຽນກ່ຽວກັບບັນພະບຸລຸດຂອງຊາດເຮັບເຣີແລະກ່ຽວກັບຄວາມເຊື່ອໃນພຣະເຈົ້າອົງທ່ຽງແທ້ຈາກແມ່ຂອງລາວເອງ, ໃນຂະນະທີ່ແມ່ຂອງລາວກຳລັງຮັບໃຊ້ເປັນແມ່ນົມຂອງລາວໃນພຣະລາຊະວັງຂອງກະສັດ.

3. ໂມເຊໄດ້ມີສິດທິແລະໂອກາດທີ່ພິເສດແບບໃດ? (ຂໍ້ 10 ແລະ ຈົ່ງອ່ານ 7:21-22 ເໝືອນກັນ)

4. ກ. ເຖິງແມ່ນວ່າໂມເຊຈະມີຖານະເປັນເຈົ້າຊາຍໃນພຣະລາຊະວັງຂອງຟາໂຣ, ຜູ້ເປັນກະສັດ, ເພິ່ນມີຄວາມຮູ້ສຶກແບບໃດຕໍ່ຊົນຊາດເຮັບເຣີ? (ຂໍ້ 11-12)

   ຂ. ຈົ່ງອ່ານກິດຈະການ 7:23-29. ເປັນຫຍັງໂມເຊຈຶ່ງໄດ້ໜີຈາກພຣະລາຊະວັງຂອງປະເທດອີຢິບ?

5. ຈົ່ງອ່ານພຣະທຳອົບພະຍົບ 2:17-19. ໂມເຊໄດ້ສະແດງຄວາມເປັນຫ່ວງຕໍ່ການກົດຂີ່ຂົ່ມເຫັງແລະການບໍ່ຍຸຕິທຳຂອງຊາວອີຢິບທີ່ມີຕໍ່ຊາວເຮັບເຣີແບບໃດ?

6. ໂມເຊໄດ້ຕັດສິນໃຈທີ່ຈະອາໄສຢູ່ໃສ? (ຂໍ້ 20-21)

7. ຈົ່ງອ່ານຂໍ້ 23-25. ເຖິງແມ່ນວ່າໂມເຊຈະຢູ່ໃນປະເທດ ເມດີອານ, ພຣະເຈົ້າກໍຍັງລະນຶກເຖິງຊົນຊາດອິດສະຣາເອນທີ່ຍັງເປັນຂ້ອຍຂ້າຢູ່ປະເທດອີຢິບ. ແມ່ນຫຍັງເກີດຂຶ້ນໃນເວລາທີ່ພວກອິດສະຣາເອນໄດ້ຮ້ອງທຸກຕໍ່ພຣະເຈົ້າ? (ຈົ່ງອ່ານຂໍ້ 24-25 ອີກເທື່ອໜຶ່ງ)

**ຂໍ້ສັງເກດ**: ພຣະເຈົ້າຊົງ**ໄດ້ຍິນ**ຄຳອະທິຖານຂອງພວກເຂົາ.ພຣະເຈົ້າຊົງ**ຈື່ຈຳ**ພຣະສັນຍາຂອງພຣະອົງທີ່ມີຕໍ່ອັບຣາຮາມ, ອີຊາກ, ແລະຢາໂຄບ ທີ່ວ່າ ພຣະອົງຈະຊົງເຮັດໃຫ້ພວກເຂົາເປັນຊົນຊາດໃຫຍ່. ພຣະເຈົ້າຊົງ**ເຫັນ**ສະພາບການເປັນຂ້ອຍຂ້າຂອງພວກເຂົາ. ພຣະເຈົ້າຊົງ**ເປັນຫ່ວງ**ພວກເຂົາ.

8. ກ. ທ່ານເຄີຍຮູ້ສຶກບໍ່ວ່າ ພຣະເຈົ້າໄດ້ລືມກ່ຽວກັບທ່ານແລະ
ຄວາມຕ້ອງການຂອງທ່ານ?
ຂ. ພຣະເຈົ້າເຄີຍລືມພວກເຮົາບໍ?

## ພຣະທຳອົບພະຍົບ 3:1-22

9. ກ. ແມ່ນວຽກການແບບໃດທີ່ໂມເຊໄດ້ເຮັດ? (ຂໍ້ 1)
ຂ. ຊີວິດຂອງລາວແຕກຕ່າງກັບຕອນທີ່ລາວໄດ້ຢູ່ໃນພຣະລາຊະວັງຂອງກະສັດຟາໂຣແບບໃດ?

<u>**ຂໍ້ສັງເກດ**</u>: ປະສົບການໃນການຢູ່ຢ່າງໂອ້ໂຖງແລະອຸດົມສົມບູນໃນພຣະລາຊະວັງພ້ອມທັງປະສົບການຢູ່ຢ່າງຜູ້ລ້ຽງແກະໃນຊົນນະບົດນັ້ນ ແມ່ນແຜນການຕຽມຕົວທັງໝົດທີ່ພຣະເຈົ້າໄດ້ຈັດຕຽມໄວ້ສຳລັບໂມເຊຜູ້ທີ່ຈະກາຍມາເປັນຜູ້ນຳເພື່ອນຳພາພວກອິດສະຣາເອນອອກຈາກການເປັນຂ້ອຍຂ້າໃນປະເທດອີຢິບ.

10. ກ. ແມ່ນຫຍັງຄືສິ່ງທີ່ແປກປະຫລາດທີ່ໂມເຊໄດ້ເຫັນຢູ່ເທິງພູນັ້ນ? (ຂໍ້ 2-3)
ຂ. ໂມເຊໄດ້ຮຽນຮູ້ກ່ຽວກັບພຣະເຈົ້າຢ່າງໃດ? (ຂໍ້ 2-6)
ຄ. ໂມເຊຮູ້ສຶກແນວໃດໃນເວລາທີ່ພຣະເຈົ້າຊົງກ່າວກັບລາວຈາກພຸ່ມໄມ້ທີ່ໄໝ້ຢູ່ນັ້ນ? (ຂໍ້ 6)

11. ຈົ່ງອ່ານຂໍ້ທີ 7-10. ຈົ່ງສັງເກດເບິ່ງຄວາມເປັນຫ່ວງໃຍຂອງພຣະເຈົ້າທີ່ສະແດງອອກໃຫ້ເຫັນແລະຈຸດປະສົງຂອງພຣະເຈົ້າ

ຕໍ່ໄພ່ພົນຂອງພຣະອົງ, ຄືຊົນຊາດອິດສະຣາເອນ. ພຣະເຈົ້າຊົງກ່າວວ່າ "ເຮົາໄດ້ເຫັນ," "ເຮົາໄດ້ຍິນ," ແລະ "ເຮົາຮູ້ຈັກ". ພຣະເຈົ້າຊົງສັນຍາວ່າ "ເຮົາລົງມາຊ່ອຍເຂົາ".

12. ໂມເຊໄດ້ຕອບຄຳສັ່ງຂອງພຣະເຈົ້າແບບໃດ? (ຂໍ້ 10-11)

13. ເມື່ອໂມເຊຮູ້ສຶກວ່າຕົນບໍ່ພຽບພ້ອມທີ່ຈະເປັນຜູ້ນຳພາ, ພຣະເຈົ້າຊົງຕອບໂມເຊແບບໃດ? (ຈົ່ງອ່ານ 2 ໂກຣິນໂທ 3:3-4)

14. ກ. ພຣະເຈົ້າຊົງສັ່ງໂມເຊໃຫ້ກ່າວຢ່າງໃດຕໍ່ພວກອິດສະຣາເອນ? (ຂໍ້ 14-17)
   ຂ. ພຣະເຈົ້າຊົງສັ່ງໃຫ້ໂມເຊກ່າວຢ່າງໃດຕໍ່ກະສັດຂອງອີຢິບ? (ຂໍ້ 18)
   ຄ. ພຣະເຈົ້າຊົງທຳເຣັດສັນຍາຢ່າງໃດ? (ຂໍ້ 19-21)
   ງ. ພຣະເຈົ້າຊົງສັນຍາວ່າຈະປະທານເຄື່ອງໃຊ້ຫຼືສິ່ງຂອງທີ່ພວກອິດສະຣາເອນຕ້ອງການໃນເວລາທີ່ພວກເຂົາອອກເດີນທາງຈາກປະເທດອີຢິບແບບໃດ? (ຂໍ້ 22)

## ພຣະທຳອົບພະຍົບ 4:1-21

15. ໂມເຊໄດ້ສົງໄສຕໍ່ໄປອີກວ່າ ພວກອິດສະຣາເອນຈະຟັງເພິ່ນຫຼືຮັບເອົາເພິ່ນມາເປັນຜູ້ນຳບໍ?
   ກ. ແມ່ນຫຍັງຄືການມະຫັດສະຈັນຄັ້ງທີໜຶ່ງທີ່ພຣະເຈົ້າໄດ້ຊົງອະນຸຍາດໃຫ້ໂມເຊເຮັດເພື່ອສະແດງເຖິງລິດອຳນາດຂອງພຣະອົງ? (ຂໍ້ 2-5)

ຂ. ແມ່ນຫຍັງຄືການມະຫັດສະຈັນອັນທີສອງ? (ຂໍ້ 6-7)

ຄ. ຖ້າພວກອິດສະຣາເອນຫາກດື້ດ້ານບໍ່ຍອມຟັງລາວແລ້ວ, ແມ່ນຫຍັງຄືສິ່ງມະຫັດສະຈັນອີກອັນໜຶ່ງທີ່ໄດ້ສັນຍາໄວ້ ຊຶ່ງຈະສຳແດງເຖິງລິດອຳນາດຂອງພຣະອົງ? (ຂໍ້ 8-9)

16. ກ. ໂມເຊໄດ້ຍົກເອົາຂໍ້ອ້າງແບບໃດມາອີກເພື່ອຕອບໂຕ້ການຊົງເອີ້ນຂອງພຣະເຈົ້າ? (ຂໍ້ 10)

ຂ. ເປັນຫຍັງພຣະເຈົ້າຈຶ່ງຊົງພິໂລດຕໍ່ໂມເຊ? (ຂໍ້ 13-14)

ຄ. ພຣະເຈົ້າໄດ້ຊົງໃຫ້ນິມິດແບບໃດເພື່ອຊ່ວຍເຫຼືອໂມເຊ? (ຂໍ້ 14-16)

17. ໂມເຊຢາກຮູ້ຫຍັງ ກ່ອນທີ່ລາວຈະກັບໄປປະເທດອີຢິບ? (ຂໍ້ 18-20)

**<u>ຂໍ້ສັງເກດ</u>**: ທ່ານຈື່ໄດ້ບໍວ່າ ໂມເຊໄດ້ອອກຈາກປະເທດອີຢິບກໍຍ້ອນວ່າ ກະສັດຈະຂ້າລາວ. (ຈົ່ງອ່ານ ພຣະທຳອົບພະຍົບ 2:14-18)

## ພຣະທຳ ອົບພະຍົບ 4:27-31

18. ກ. ເມື່ອໂມເຊໄດ້ພົບອາໂຣນແລ້ວ, ໂມເຊໄດ້ບອກສິ່ງໃດແກ່ອາໂຣນ? (ຂໍ້ 28)

ຂ. ໂມເຊແລະອາໂຣນໄດ້ພາກັນໄປໃສ? ພວກເຂົາໄດ້ເຮັດຫຍັງກ່ອນ? (ຂໍ້ 29)

ຄ. ພວກອິດສະຣາເອນໄດ້ຕອບອາໂຣນແລະໂມເຊແບບໃດ? (ຂໍ້ 31)

**ຂໍ້ສັງເກດ**: ຈົ່ງອ່ານພຣະທຳອົບພະຍົບ 2:23-25. ພວກອິດສະຣາເອນໄດ້ຮ້ອງຂໍຄວາມຊ່ວຍເຫຼືອແລະຮ້ອງທຸກຕໍ່ການເປັນຂ້ອຍຂ້າຂອງພວກອີຢີບ ແລະພວກເຂົາເຮັດເໝືອນກັບວ່າລືມພຣະເຈົ້າ, ແຕ່ພຣະເຈົ້າບໍ່ໄດ້ລືມພວກເຂົາ. ຈົ່ງອ່ານພຣະທຳອົບພະຍົບ 3:12.

## ບົດທບໍ້:

1. ເປັນຫຍັງໂມເຊຈຶ່ງບໍ່ສາມາດຊ່ວຍພວກອິດສະຣາເອນຈາກການເປັນຂ້າທາດໃນເມື່ອລາວຍັງເປັນໜຸ່ມຢູ່ນັ້ນ? (ບົດ 2)

2. ແມ່ນບົດຮຽນອັນໃດທີ່ລາວຕ້ອງໄດ້ຮຽນ ກ່ອນທີ່ພຣະເຈົ້າຈະຊົງສາມາດໃຊ້ລາວໄດ້?

3. ໂມເຊໄດ້ຮຽນຮູ້ກ່ຽວກັບຕົນເອງ, ຜູ້ອື່ນໆ, ແລະກ່ຽວກັບພຣະເຈົ້າຢ່າງໃດ?

4. ບົດຮຽນແບບໃດທີ່ພວກເຮົາຕ້ອງຮຽນກ່ຽວກັບພວກເຮົາເອງກ່ອນທີ່ພຣະເຈົ້າຈະສາມາດໃຊ້ພວກເຮົາໄດ້? ຈົ່ງອ່ານໂຣມ 12:3, ຟີລິບປອຍ 4:12-13, ແລະ 2 ໂກຣິນໂທ 3:5.

5. ຈົ່ງອ່ານເຮັບເຣີ 11:23-27. ໂມເຊໄດ້ຕັດສິນໃຈແບບໃດໃນຊີວິດທີ່ໄດ້ຕຽມຕົວລາວໃຫ້ເປັນຜູ້ນຳພາໄດ້?

6. ເປັນຫຍັງພຣະເຈົ້າຈຶ່ງຢາກໃຫ້ພວກອິດສະຣາເອນລຸດພົ້ນຈາກການເປັນຂ້າທາດ?

7. ກ. ໃນຖານະທີ່ເປັນຄຣິສຕຽນ, ທ່ານໄດ້ລຸດພົ້ນຈາກການເປັນທາດຂອງຄວາມບາບແລ້ວບໍ?

ຂ. ພຣະເຈົ້າຊົງມີຈຸດປະສົງແບບໃດຕໍ່ຊີວິດຂອງພວກເຮົາ? (ຈົ່ງອ່ານ 1 ເປໂຕ 2:9-16)

**ບົດສະຫລຸບ:**

ຢູ່ອ້ອມຂ້າງຂອງພວກເຮົາມີຫຼາຍຄົນທີ່ຢາກຈະລຸດພົ້ນຈາກການເປັນທາດຂອງຄວາມບາບ. ໃນຖານະທີ່ເປັນຄຣິສຕຽນ, ພວກເຮົາມີໜ້າທີ່ຮັບຜິດຊອບທີ່ຈະຊ່ອຍພວກເຂົາທີ່ຍັງເປັນຂ້າທາດຂອງຄວາມບາບ. ຊີວິດຂອງໂມເຊໄດ້ສອນບົດຮຽນໃຫ້ແກ່ພວກເຮົາຫຼາຍຢ່າງ. ລາວໄດ້ເຮັດຜິດຢູ່ສອງຢ່າງ:

1. ລາວຄິດວ່າ ລາວສາມາດແກ້ບັນຫາຂອງພວກອິດສະຣາເອນດ້ວຍຕົນເອງ. ລາວຮູ້ຄວາມຕ້ອງການ ແຕ່ລາວບໍ່ໄດ້ຄອຍຖ້າການນຳພາຂອງພຣະເຈົ້າ. ລາວໄດ້ຂ້າຄົນອີຢີບຜູ້ໜຶ່ງແລ້ວພົບກັບບັນຫາ.

2. ຕໍ່ມາ ເມື່ອພຣະເຈົ້າຊົງເອີ້ນລາວໃຫ້ເປັນຜູ້ນຳ, ລາວຮູ້ສຶກວ່າລາວບໍ່ສາມາດທີ່ຈະເຮັດຕາມທີ່ພຣະເຈົ້າຕ້ອງການໃຫ້ລາວເຮັດໄດ້. ອີກເທື່ອໜຶ່ງລາວໄດ້ຮູ້ເຖິງຄວາມຕ້ອງການແລະລາວບໍ່ໄດ້ເຊື່ອວາງໃຈໃນພຣະເຈົ້າສຳລັບສະຕິປັນຍາ.

ຖ້າພຣະເຈົ້າຫາກເອີ້ນພວກເຮົາໃຫ້ເຮັດສິ່ງໃດສິ່ງໜຶ່ງ, ພຣະອົງຈະຊົງນຳພາພວກເຮົາແລະປະທານສະຕິປັນຍາໃຫ້ພວກເຮົາທີ່ຈະເຮັດວຽກງານໃຫ້ສຳເລັດໄດ້.

# ບົດທີ 9
## (ພຣະທຳອົບພະຍົບ 5–12)

# ໂມເຊ - ການນຳພາຂອງລາວໄດ້ຮັບການທ້າທາຍ

## ພຣະທຳອົບພະຍົບ 5:1–23

ໂມເຊໄດ້ຮູ້ຈັກເປັນຢ່າງດີກ່ຽວກັບພຣະລາຊະວັງຂອງປະເທດອີຢີບ. ລາວໄດ້ໃຫຍ່ຂຶ້ນຢູ່ທີ່ນັ້ນເມື່ອຕອນຍັງເປັນເດັກນ້ອຍ, ແຕ່ກະສັດທີ່ລາວໄດ້ຮູ້ຈັກນັ້ນໄດ້ສິ້ນພຣະຊົນແລ້ວ. (ພຣະທຳອົບພະຍົບ 2:10)

1. ໂມເຊແລະອາໂຣນໄດ້ຮ້ອງຂໍສິ່ງໃດຕໍ່ກະສັດ? (ຂໍ້ 1)
2. ກະສັດຟາໂຣໄດ້ຕອບວ່າແນວໃດ? (ຂໍ້ 2)
3. ກ. ການຮ້ອງຂໍຂອງໂມເຊແລະອາໂຣນຕໍ່ຟາໂຣ ເປັນຜົນສະທ້ອນແບບໃດຕໍ່ການເຮັດວຽກງານຂອງພວກອິດສະຣາເອນ?
   ຂ. ເປັນຫຍັງກະສັດຈຶ່ງໃຈຮ້າຍ? (ຂໍ້ 4-5)
   ຄ. ກະສັດໄດ້ເຮັດແບບໃດ ເພື່ອທີ່ຈະເຮັດໃຫ້ການດຳເນີນຊີວິດຂອງພວກອິດສະຣາເອນຍາກຂຶ້ນກວ່າເກົ່າ? (ຂໍ້ 6-9)
4. ກ. ເປັນຫຍັງຫົວໜ້າຂອງພວກອິດສະຣາເອນຈຶ່ງໃຈຮ້າຍໃຫ້ໂມເຊແລະອາໂຣນ?
   ຂ. ພວກເຂົາໄດ້ຕໍ່ວ່າແບບໃດ? (ຂໍ້ 15 ແລະ 20-21)
5. ໂມເຊໄດ້ກາບທູນພຣະເຈົ້າແບບໃດ? (ຂໍ້ 22)

**ຂໍ້ສັງເກດ**: ໃນເວລານັ້ນ, ໂມເຊໄດ້ຮັບຄວາມທໍ້ຖອຍຕໍ່ພວກອິດສະຣາເອນທີ່ບອກວ່າພວກເຂົາເຊື່ອໃນພຣະເຈົ້າແລະຂາບໄຫວ້ນະມັດສະການພຣະອົງໃນ ພຣະທຳອົບພະຍົບ 4:31. ຈົ່ງອ່ານ ພຣະທຳອົບພະຍົບ 5:21. ແຕ່ບັດນີ້ ພວກອິດສະຣາເອນໄດ້ເລີ້ມຈົ່ມຕໍ່ໂມເຊແລະບໍ່ເຊື່ອໃນພຣະເຈົ້າ.

6. ເມື່ອເວລາໂມເຊໄປຫາພຣະເຈົ້າຢ່າງເປັນທຸກໃຈ, ພຣະເຈົ້າຊົງກ່າວຕໍ່ລາວຢ່າງໃດ? (ຈົ່ງອ່ານພຣະທຳອົບພະຍົບ 5:22-23 ແລະ 6:1)

## ພຣະທຳອົບພະຍົບ 6:1-13

ໂມເຊອາດຈະຫວັງວ່າ ພຣະເຈົ້າຈະຊົງໃຫ້ພວກອິດສະຣາເອນມີອິດສະຫຼະພາບໃນປະເທດອີຢີບຫຼາຍຂຶ້ນແລະເຮັດໃຫ້ວຽກງານຂອງເຂົາເຈົ້າເບົາແລະງ່າຍຂຶ້ນ. ແຕ່ພຣະເຈົ້າຢາກໃຫ້ພວກອິດສະຣາເອນອອກຈາກປະເທດອີຢີບ ແລະກັບຄືນໄປຍັງດິນແດນທີ່ພຣະເຈົ້າໄດ້ສັນຍາຕໍ່ພວກເຂົາ.

7. ພຣະເຈົ້າຊົງສັນຍາວ່າ ຈະກະທຳສິ່ງໃດຕໍ່ກະສັດຟາໂຣທີ່ບໍ່ຍອມປ່ອຍຊົນຊາດອິດສະຣາເອນໄປ? (ພຣະທຳອົບພະຍົບ 6:1 ແລະ 6:6-8)

8. ກ. ພຣະເຈົ້າຊົງກ່າວຢ່າງໃດຕໍ່ໂມເຊ? (ພຣະທຳອົບພະຍົບ 6:2-5)

ຂ. ພຣະເຈົ້າຊົງກ່າວຢ່າງໃດຕໍ່ຊົນອິດສະຣາເອນ? (ພຣະທຳ ອົບພະຍົບ 6:6-8)

ຄ. ພຣະເຈົ້າຊົງກ່າວຢ່າງໃດຕໍ່ກະສັດຟາໂຣ? (ພຣະທຳອົບພະ ຍົບ 6:10-11)

ງ. ພຣະເຈົ້າຊົງກ່າວເຖິງອະດີດທີ່ຜ່ານມາຢ່າງໃດແດ່? (ຂໍ້ 5)

ຈ. ພຣະເຈົ້າຊົງກ່າວເຖິງອະນາຄົດໄວ້ຢ່າງໃດແດ່? (ຈົ່ງອ່ານ ພຣະທຳອົບພະຍົບ 6:6-8) ແມ່ນຫຍັງຄືພຣະສັນຍາເຈັດຂໍ້ ທີ່ຢູ່ໃນພຣະຄຳພີຕອນນີ້ ທີ່ພຣະເຈົ້າໄດ້ສັນຍາຕໍ່ພວກອິດ ສະຣາເອນ?

9. ກ. ພວກອິດສະຣາເອນໄດ້ສະແດງອາການໂຕ້ຕອບຢ່າງໃດ ໃນເວລາທີ່ໂມເຊໄດ້ບອກພວກເຂົາກ່ຽວກັບຄຳສັ່ງຂອງພຣະ ເຈົ້າ? (ຂໍ້ 9)

ຂ. ເປັນຫຍັງພວກເຂົາຈຶ່ງສະແດງທ່າທີ່ແບບນີ້? (ຂໍ້ 9)

ຄ. ຈົ່ງອ່ານຂໍ້ 2, 6, ແລະ 8. ແມ່ນຂໍ້ຄວາມໃດທີ່ພຣະເຈົ້າ ໄດ້ຊົງກ່າວຢ້ຳອີກ?

ງ. ເປັນຫຍັງພຣະເຈົ້າຈຶ່ງກ່າວຢ້ຳຂໍ້ຄວາມເຫຼົ່ານີ້?

10. ໂມເຊໄດ້ໃຫ້ຂໍ້ອ້າງແບບໃດ ເພື່ອທີ່ຈະບໍ່ເຮັດຕາມທີ່ພຣະເຈົ້າ ຊົງບອກລາວໃຫ້ເຮັດນັ້ນ? (ຂໍ້ 12 ແລະ 30)

<u>**ຂໍ້ສັງເກດ**</u>: ພຣະທຳອົບພະຍົບບົດທີ 7 ເຖິງ 12 ສະແດງໃຫ້ພວກເຮົາ ເຫັນວ່າ ພຣະເຈົ້າໄດ້ເພີ້ມການລົງໂທດຢ່າງຮ້າຍແຮງລົງເທິງຟາໂຣ ຍ້ອນຟາໂຣມີໃຈແຂງກະດ້າງ ແລະບໍ່ຍອມປ່ອຍຊົນຊາດອິດສະ

ຣາເອນໄປ. ຈົ່ງອ່ານພຣະທຳອົບພະຍົບ 7:8-13 ອີກເທື່ອໜຶ່ງ, ໂມເຊແລະອາໂຣນໄດ້ຮ້ອງຂໍຕໍ່ຟາໂຣໃຫ້ປ່ອຍພວກອິດສະຣາເອນໄປ ແຕ່ກະສັດຍັງໃຈແຂງກະດ້າງແລະບໍ່ຍອມຟັງພວກເຂົາ.

## ຈົ່ງອ່ານພຣະທຳອົບພະຍົບ 7:14–15

11. ກ. ພຣະເຈົ້າຊົງສັ່ງໃຫ້ໂມເຊໄປບອກສິ່ງໃດອີກຕໍ່ຟາໂຣ? (ຂໍ້ 16)
    ຂ. ພຣະເຈົ້າຊົງສັນຍາວ່າຈະກະທຳສິ່ງໃດ? (ຂໍ້ 17)
    ຄ. ມີສິ່ງໃດເກີດຂຶ້ນ ເມື່ອເວລາອາໂຣນໄດ້ຕີນ້ຳນັ້ນ? (ຂໍ້ 20)
    ງ. ດຽວນີ້ກະສັດໄດ້ຍອມຟັງອາໂຣນແລະໂມເຊບໍ່? (ຂໍ້ 20)

ພຣະເຈົ້າໄດ້ລົງໂທດຊົນຊາດອີຢິບ. ຈົ່ງອ່ານໄພພິບັດທີ່ເກີດຂຶ້ນເກົ້າຢ່າງຕໍ່ລົງໄປນີ້ ເມື່ອພຣະເຈົ້າໄດ້ສະແດງລິດອຳນາດຂອງພຣະອົງເພື່ອພິສູດໃຫ້ເຫັນວ່າ ພຣະອົງຊົງເປັນພຣະເຈົ້າອົງທ່ຽງແທ້.

1) ນ້ຳກາຍເປັນເລືອດ --ບົດທີ 7:14-15
2) ຝູງກົບທົ່ວແຜ່ນດິນ--ບົດທີ 8:1-15
3) ຮີ້ນແລະຍຸງຫຸ້ມຕອມມະນຸດແລະສັດ--ບົດທີ 8:16-19
4) ຝູງເຫຼືອກຕອມຕາມບ້ານເຮືອນແລະແຜ່ນດິນ--ບົດທີ 8:20-30
5) ໂລກລະບາດຂ້າຝູງສັດລ້ຽງຂອງພວກອີຢິບ--ບົດທີ 9:1-7
6) ຝີເປັນບາດຕາມຕົວຕົນຂອງມະນຸດແລະສັດ--ບົດທີ 9:8-12
7) ໝາກເຫັບທຳລາຍພືດຜົນແລະຕົ້ນໄມ້--ບົດທີ 9:23-34

8) ຕັກແຕນມາທົ່ວແຜ່ນດິນ ແລ້ວທຳລາຍພືດຜົນແລະຕົ້ນໄມ້ ບົດທີ 18:12-16

9) ຄວາມມືດອັນໜາຕຶບປົກຄຸມທົ່ວປະເທດອີຢິບເປັນເວລາ 10 ວັນ--ບົດທີ 10:21-29

__ຂໍ້ສັງເກດ__: ມີຫຼາຍເທື່ອໃນບົດພຣະຄຳພີເຫຼົ່ານີ້, ພວກເຮົາໄດ້ອ່ານວ່າ ພຣະເຈົ້າໄດ້ກະທຳໃຫ້ໃຈຂອງຟາໂຣແຂງກະດ້າງ ຊຶ່ງໝາຍຄວາມວ່າ ພຣະເຈົ້າໄດ້ຊົງອະນຸຍາດໃຫ້ຟາໂຣເຮັດໃນສິ່ງທີ່ເພິ່ນຢາກເຮັດ (ຈົ່ງອ່ານ ໂຣມ 1:28-31 ແລະ 9:17). ພຣະເຈົ້າຊົງປ່ອຍຕາມໃຈຂອງເພິ່ນ ເພື່ອໃນຄາວສຸດທ້າຍລິດອຳນາດຂອງພຣະເຈົ້າຈະປາກົດຂຶ້ນ.

12. ຫຼັງຈາກໄພພິບັດທັງຫຼາຍນີ້, ກະສັດຟາໂຣໄດ້ປ່ອຍພວກອິດສະຣາເອນໄປບໍ?

__ຂໍ້ສັງເກດ__: ບົດທີ 12:12-14. ພຣະເຈົ້າຊົງອິດທິນຢ່າງໃຫຍ່ຫຼວງຕໍ່ຟາໂຣ. ຈົ່ງອ່ານພຣະທຳອົບພະຍົບ 9:13-16 ອີກເທື່ອໜຶ່ງ. ຈົ່ງອ່ານ ໂຣມ 2:4-5 ແລະສຸພາສິດ 29:1 ເໝືອນກັນ.

## ພຣະທຳອົບພະຍົບ 12:50-51 ແລະ 14:1-31

13. ເປັນຫຍັງກະສັດຟາໂຣຈຶ່ງປ່ຽນໃຈອີກ? (ຂໍ້ 5-6)

14. ເປັນຫຍັງພວກອິດສະຣາເອນຈຶ່ງຈົ່ມຕໍ່ວ່າໂມເຊ? (ຂໍ້ 11-12)

15. ໂມເຊໄດ້ແນະນຳໃຫ້ພວກເຂົາເຮັດແນວໃດ? (ຂໍ້ 13-14)

16. ກ. ພຣະເຈົ້າໄດ້ຊົງສັ່ງໃຫ້ໂມເຊເຮັດຫຍັງ? (ຂໍ້ 16)

ຂ. ພຣະເຈົ້າຢາກໃຫ້ພວກອີຢິບຮູ້ຈັກສິ່ງໃດ? (ຂໍ້ 18)

17. ຈົ່ງອະທິບາຍເຖິງວິທີທີ່ມະຫັດສະຈັນໃນການທີ່ພວກອິດສະຣາເອນໄດ້ຂ້າມນໍ້ານັ້ນ. (ຂໍ້ 25-29)

18. ພວກອິດສະຣາເອນຮູ້ສຶກແນວໃດ ເມື່ອພວກເຂົາເຫັນຊາກສົບຂອງພວກອີຢິບນອນຕາຍຢູ່ແຄມຝັ່ງທະເລນັ້ນ?(ຂໍ້ 31)

## ບົດຫຍໍ້:

ພຣະເຈົ້າຊົງມີຈຸດປະສົງຢູ່ສອງຢ່າງໃນການຊ່ອຍພວກອິດສະຣາເອນອອກຈາກທະຫານອີຢິບ:

1. ພຣະອົງຢາກໃຫ້ພວກອີຢິບຮູ້ວ່າ ພຣະອົງຊົງເປັນພຣະເຈົ້າອົງທ່ຽງແທ້.

2. ພຣະອົງຢາກໃຫ້ພວກອິດສະຣາເອນນະມັດສະການຂາບໄຫວ້ພຣະອົງ ຜູ້ຊົງເປັນພຣະເຈົ້າທ່ຽງແທ້ແຕ່ອົງດຽວ, ມີອຳນາດເໜືອທຸກສິ່ງແລະສົມຄວນທີ່ຈະເຊື່ອຟັງ.

ພຣະເຈົ້າຊົງຊ່ອຍໂມເຊໃນເວລາເພິ່ນປະເຊີນກັບການບໍ່ເຊື່ອຟັງຂອງພວກອິດສະຣາເອນແລະການຕໍ່ສູ້ຂອງກະສັດຟາໂຣ. ພຣະເຈົ້າຊົງທົດລອງເບິ່ງຄວາມເຊື່ອຂອງພວກເຮົາຢູ່ສະເໝີ. ພຣະອົງຢາກໃຫ້ພວກເຮົາໄວ້ວາງໃຈໃນພຣະອົງດ້ວຍຄວາມເຊື່ອໝັ້ນເໜືອສະພາບແວດລ້ອມທີ່ຂັດສົນແລະຫຍຸ້ງຍາກ. ໃຫ້ພວກເຮົາທູນຂໍພຣະອົງຊົງໂຜດໃຫ້ພວກເຮົາເປັນໄພ່ພົນທີ່ເຊື່ອຟັງແລະມີອຳນາດທາງຝ່າຍຈິດວິນຍານ.

# ບົດທີ 10

## (ພຣະທຳອົບພະຍົບ 15 - 16)

# ໂມເຊ - ຄວາມຫຍຸ້ງຍາກໃນການນຳພາ

ເພື່ອທີ່ຈະໃຫ້ທ່ານເຂົ້າໃຈບົດຮຽນໝົດທຸກບົດ, ທ່ານຄວນຈະອ່ານບົດທີ 15-17 ທັງໝົດ. ທ່ານອາດຈະອ່ານຢູ່ເຮືອນກ່ອນທີ່ຈະສຶກສາບົດຮຽນນີ້ຮ່ວມກັນ.

## ພຣະທຳອົບພະຍົບ15:22-27

1. ກ. ແມ່ນຫຍັງຄືປະສົບການອັນທີ່ໜຶ່ງທີ່ລູກຫຼານອິດສະຣາເອນພົບໃນປ່າກັນດານ ຫຼັງຈາກທີ່ພວກເຂົາໜີຈາກປະເທດອີຢິບແລ້ວ? (ຂໍ້ 22-23)
   ຂ. ພວກອິດສະຣາເອນມີທ່າທີແບບໃດຕໍ່ສະຖານະການອັນນີ້? (ຂໍ້ 24)
   ຄ. ພວກເຂົາຫາກໍໄດ້ເຫັນການທີ່ພຣະເຈົ້າໄດ້ຊ່ອຍພວກເຂົາໃຫ້ລອດພົ້ນຈາກພວກອີຢິບ. ພວກເຂົາຈື່ຈຳລິດອຳນາດຂອງພຣະເຈົ້າໄດ້ບໍໃນເວລານັ້ນ?
   ງ. ພວກເຮົາຈະເຫັນວ່າເປັນການຍາກຫຼາຍແທ້ບໍທີ່ຈະຈົດຈຳຄວາມຮັກແລະລິດອຳນາດທີ່ພຣະອົງຊົງສະແດງຕໍ່ພວກເຮົາ?

2. ໂມເຊໄດ້ເຮັດແບບໃດໃນເວລາທີ່ປະຊາຊົນໄດ້ຈົ່ມທຸກຕໍ່ເພິ່ນ? (ຂໍ້ 25)

3. ກ. ພຣະເຈົ້າມີຄວາມຕ້ອງປະສົງແບບໃດຈາກໄພ່ພົນຂອງພຣະອົງ?

   ຂ. ພຣະເຈົ້າຊົງໃຫ້ຄໍາໝັ້ນສັນຍາແບບໃດ? (ຂໍ້ 26)

4. ແມ່ນຫຍັງຄືຈຸດປະສົງຂອງພຣະເຈົ້າ ທີ່ປ່ອຍໃຫ້ພວກເຮົາມີບັນຫາແລະການທົດລອງໃນຊີວິດຂອງພວກເຮົາທຸກມື້ນີ້? (ຈົ່ງອ່ານ 1 ເປໂຕ 1:6-7 ແລະ ຢາໂກໂບ 1:2-4)

## ພຣະທໍາອົບພະຍົບ 16:1-12

5. ໄພ່ພົນອິດສະຣາເອນໄດ້ຈົ່ມທຸກວ່າຢ່າງໃດຕໍ່ສູ້ໂມເຊແລະອາໂຣນ? (ຂໍ້ 2-3) ພວກເຂົາໄດ້ລືມການເປັນຂ້າທາດແລະການກົດຂີ່ຂົ່ມເຫັງໃນປະເທດອີຢີບເສຍແລ້ວ.
6. ໂມເຊຮູ້ສຶກແບບໃດເມື່ອພວກອິດສະຣາເອນໄດ້ຈົ່ມທຸກນັ້ນ?
7. ພຣະເຈົ້າຊົງປະທານຕໍ່ຄວາມຕ້ອງການຂອງພວກອິດສະຣາເອນແບບໃດ? (ຂໍ້ 4-5, ແລະ 10-12)
8. ໂມເຊແລະອາໂຣນພະຍາຍາມຈະສອນສິ່ງໃດໃຫ້ພວກອິດສະຣາເອນ
   - ກ່ຽວກັບການປົບໜີຈາກປະເທດອີຢີບ (ຂໍ້ 6)
   - ກ່ຽວກັບການຈົ່ມທຸກຂອງພວກເຂົາ (ຂໍ້ 7)
   - ກ່ຽວກັບອົງພຣະຜູ້ເປັນເຈົ້າພຣະອົງເອງ (ຂໍ້ 8)
9. ເວລາປະຊາຊົນກະວົນກະວາຍແລະຮ້ອງທຸກ, ມັນໄດ້ສະແດງໃຫ້ຮູ້ວ່າພວກເຂົາບໍ່ພໍໃຈແລະບໍ່ມີຄວາມສຸກ. ພຣະຄໍາພີໄດ້

ສອນຢ່າງໃດກ່ຽວກັບເລື່ອງນີ້? ຈົ່ງອ່ານຄຳສອນຂອງພຣະເຢຊູ ໃນ ມັດທາຍ 6:30-32 ແລະຄຳສອນຂອງອາຈານໂປໂລໃນ 1 ເທຊະໂລນິກ 5:16-18.

10. ເປັນຫຍັງໂມເຊຈຶ່ງບໍ່ນຳພາປະຊາຊົນກັບໄປປະເທດອີຢິບ ໃນເວລາພວກເຂົາຈົ່ມທຸກນັ້ນ?

<u>**ບົດສະຫລຸບ**</u>:

ໂມເຊໄດ້ຮຽນຮູ້ວ່າປະຊາຊົນໄດ້ຈົ່ມທຸກຕໍ່ພຣະເຈົ້າເທົ່າໆ ກັບການນຳພາຂອງໂມເຊເອງ. ທ່າທີທີ່ບໍ່ດີຂອງພວກເຂົາໄດ້ເພີ້ມພາ ລະໃຫ້ການນຳພາແລະເພີ້ມຄວາມທຸກໃຫ້ພວກເຂົາເອງ. ໂມເຊໄດ້ ຮຽນໂດຍທາງປະສົບການອັນນີ້ວ່າເພິ່ນບໍ່ສາມາດເພິ່ງໃນຕົນເອງ ແຕ່ເພິ່ນຕ້ອງເພິ່ງໃນອົງພຣະຜູ້ເປັນເຈົ້າທຸກຢ່າງ.

# ບົດທີ 11

## (ພຣະທຳອົບພະຍົບ 31 – 33,
## ຈົດເຊັ່ນບັນຊີ 11, ພຣະທຳອົບພະຍົບ 20)

# ໂມເຊ – ຄຸນຄ່າຂອງການນຳພາ

### ພຣະທຳອົບພະຍົບ 32:1–14

1. ກ. ໂມເຊໄດ້ຢູ່ໃສ? (ຂໍ້ 1) ຈົ່ງອ່ານພຣະທຳອົບພະຍົບ 24:12-18.
   ຂ. ປະຊາຊົນໄດ້ຂໍໃຫ້ອາໂຣນເຮັດຫຍັງ? (ຂໍ້ 1)
   ຄ. ແມ່ນຫຍັງທີ່ສະແດງໃຫ້ເຫັນວ່າ ພວກເຂົາບໍ່ເຊື່ອຟັງພຣະເຈົ້າ?
2. ພຣະເຈົ້າໄດ້ປະທານພຣະບັນຍັດ 10 ປະການໃຫ້ໂມເຊແລ້ວ.
   ກ. ພຣະບັນຍັດຂໍ້ທຳອິດແມ່ນຫຍັງ? (ພຣະທຳອົບພະຍົບ 20:2-5)
   ຂ. ພວກອິດສະຣາເອນສັນຍາຈະເຮັດແບບໃດ? (ຈົ່ງອ່ານພຣະທຳອົບພະຍົບ 24:3)
3. ປະຊາຊົນໄດ້ປະຕິເສດພຣະເຈົ້າຂອງອິດສະຣາເອນແບບໃດ? (ຂໍ້ 4 ແລະ 7)
4. ເປັນຫຍັງພຣະເຈົ້າຈຶ່ງຊົງພຣະພິໂລດຕໍ່ພວກອິດສະຣາເອນ? (ຂໍ້ 11)

5. ໂມເຊໄດ້ອະທິຖານຢ່າງໃດ? (ຂໍ້ 12-13)
6. ພຣະເຈົ້າໄດ້ຕອບຄຳອະທິຖານຂອງໂມເຊບໍ? (ຂໍ້ 14)
7. ລັກສະນະຂອງຜູ້ນຳທີ່ສຳຄັນແບບໃດທີ່ໂມເຊໄດ້ສະແດງ ໃຫ້ເຫັນ?.

## ພຣະທຳອົບພະຍົບ 32:15-35

8. ໂມເຊໄດ້ເຮັດຫຍັງເວລາທີ່ລາວໄດ້ກັບມາເຖິງທີ່ພັກເຊົາ ຂອງພວກອິດສະຣາເອນ? (ຂໍ້ 19)
9. ຈົ່ງອ່ານ ພຣະທຳອົບພະຍົບ32:2-4 ແລະອ່ານ 32:23-24. ອາໂຣນພະຍາຍາມຈະຫຼີກລ້ຽງຕໍ່ສິ່ງທີ່ເກີດຂຶ້ນແບບໃດ?
10. ໂມເຊໄດ້ເຮັດຢ່າງໃດ ເພື່ອພະຍາຍາມແກ້ໄຂສະຖານະການ?

**<u>ຂໍ້ສັງເກດ</u>**: ເບິ່ງເໝືອນກັບວ່າ ຍັງມີພວກອິດສະຣາເອນບາງຄົນທີ່ຍັງ ຂາບໄຫວ້ຮູບງົວທອງຢູ່ ເຖິງແມ່ນວ່າໂມເຊໄດ້ກັບມາຮອດບ່ອນພັກ ເຊົາແລະໄດ້ເຮັດກິດຈະການໃນຂໍ້ທີ 20 ແລ້ວກໍຕາມ.

11. ໂມເຊໄດ້ເຮັດຢ່າງໃດ ທີ່ສະແດງໃຫ້ເຫັນວ່າ ລາວຍັງຮັກປະຊາ ຊົນຢູ່? (ຂໍ້ 30)
12. ກ. ຈົ່ງບັນລະຍາຍເຖິງການອະທິຖານເພື່ອຂອງໂມເຊ.(ຂໍ້ 32)
    ຂ. ໂມເຊໄດ້ທູນຂໍໃຫ້ພຣະເຈົ້າກະທຳສິ່ງໃດ?
13. ແມ່ນຫຍັງຄືຄຳຕອບທີ່ພຣະເຈົ້າຊົງຕອບໂມເຊ? (ຂໍ້ 33-34)
14. ໃນຖານະທີ່ເປັນຄຣິສຕຽນຫຼືເປັນຜູ້ນຳພາຄຣິສຕຽນຜູ້ໜຶ່ງ, ພຣະເຈົ້າຫວັງຢາກໃຫ້ພວກເຮົາເຮັດແບບໃດ ໃນເວລາທີ່ຢູ່

ອ້ອມຂ້າງຂອງພວກເຮົາເຕັມໄປດ້ວຍການຕໍ່ສູ້ແລະການຫັນໜີຈາກການຂາບໄຫວ້ພຣະເຈົ້າອົງທ່ຽງແທ້?

15. ໂມເຊຮູ້ສຶກແບບໃດຕໍ່ຄວາມຜິດບາບ? ຕໍ່ໄພ່ພົນຂອງພຣະເຈົ້າ? ແລະຕໍ່ພຣະເຈົ້າພຣະອົງເອງ?

## ພຣະທຳອົບພະຍົບ 33:1-23

16. ກ. ພຣະເຈົ້າຊົງບອກໃຫ້ໂມເຊແລະພວກອິດສະຣາເອນເຮັດຫຍັງ? (ຂໍ້ 1)
    ຂ. ພຣະເຈົ້າຊົງສັນຍາຢ່າງໃດອີກ? (ຂໍ້ 2)
    ຄ. ເປັນຫຍັງພຣະເຈົ້າຈຶ່ງສະເດັດໜີຈາກພວກອິດສະຣາເອນຊົ່ວຂະນະໜຶ່ງ? (ຂໍ້ 3)
17. ຈົ່ງອ່ານຂໍ້ 7-11.
    ກ. ໂມເຊໄດ້ເຮັດສິ່ງໃດເພື່ອທີ່ຈະຮັກສາໄວ້ຊຶ່ງຄວາມສຳພັນຂອງລາວກັບພຣະເຈົ້າ?
    ຂ. ຄວາມສຳພັນຂອງໂມເຊກັບພຣະເຈົ້າໄດ້ຊ່ອຍປະຊາຊົນແບບໃດ? (ຂໍ້ 7 ແລະ 10)
18. ກ. ແມ່ນຫຍັງຄືຄຳທູນຂໍອັນສຳຄັນສາມຢ່າງທີ່ໂມເຊໄດ້ທູນຂໍຕໍ່ພຣະເຈົ້າໃນຂໍ້ທີ 13, 14, ແລະ 18?
    ຂ. ພຣະເຈົ້າຊົງຕອບຄຳອະທິຖານຂອງລາວແບບໃດ?(ຂໍ້19)
19. ເປັນຫຍັງພຣະເຈົ້າຈຶ່ງບໍ່ໃຫ້ປະຊາຊົນເຫັນພຣະພັກຂອງພຣະອົງ? (ຂໍ້ 20)

**ຂໍ້ສັງເກດ**: ໂມເຊໄດ້ຮູ້ສຶກວ່າລາວບໍ່ຢາກໄປທີ່ແຜ່ນດິນທີ່ຊົງສັນຍາໄວ້ ຖ້າພຣະເຈົ້າບໍ່ໄປນຳລາວ (ຂໍ້ 15). ໂມເຊໄດ້ພົບກັບການທົດລອງຫຼາຍຢ່າງໃນຖານະທີ່ເປັນຜູ້ນຳພາຜູ້ໜຶ່ງ. ລາວປະຕິເສດທີ່ຈະໜີຈາກປະຊາຊົນອິດສະຣາເອນທີ່ດື້ດ້ານແລະບໍ່ຟັງຄວາມ. ໂມເຊຕ້ອງການການສະຖິດນຳພາຂອງພຣະເຈົ້າເໝືອນກັນ. ກຳລັງ, ຄວາມສາມາດ, ແລະຄວາມອົດທົນໃນການນຳພາຂອງລາວໄດ້ມາຈາກການສະໜິດສະໜົມກັບພຣະເຈົ້າຢ່າງສະໝ່ຳສະເໝີ. ທ່ານໄດ້ໃຊ້ເວລາກັບພຣະເຈົ້າຢ່າງສະໝ່ຳສະເໝີບໍ?

## ຈົດເຊັນບັນຊີ 11:1-35

ເປັນເວລາຜ່ານໄປໜຶ່ງປີຫຼັງຈາກທີ່ໂມເຊໄດ້ນຳພາປະຊາຊົນອອກຈາກປະເທດອີຢີບ.

1. ກ. ປະຊາຊົນໄດ້ສືບຕໍ່ສະແດງໃຫ້ເຫັນທ່າທີແບບໃດຂອງພວກເຂົາ? (ຂໍ້ 1, 4, ແລະ6)
   ຂ. ພຣະເຈົ້າຊົງພໍພຣະໄທຕໍ່ການຈົ່ມທຸກຂອງພວກເຂົາບໍ?(ຂໍ້2)
2. ຈົ່ງອ່ານຂໍ້ 11-15.
   ກ. ເປັນຫຍັງໂມເຊຈິ່ງທໍ້ຖອຍຈິດໃຈ?
   ຂ. ແມ່ນຫຍັງຄືຄວາມຕ້ອງປະສົງສອງຢ່າງທີ່ໂມເຊສະແດງໃຫ້ພຣະເຈົ້າເຫັນໃນຂໍ້ 13-14?
3. ພຣະເຈົ້າຊົງຕອບຄຳອະທິຖານຂອງໂມເຊແບບໃດ ເພື່ອຊ່ອຍພາລະຮັບຜິດຊອບຂອງລາວ? (ຂໍ້ 16-17)
4. ພຣະເຈົ້າຊົງຕັດກັບໂມເຊໃຫ້ໄປບອກປະຊາຊົນວ່າແນວໃດ? (ຂໍ້ 18-20)

5. ພຣະເຈົ້າຊົງກະທຳສິ່ງໃດເພື່ອປະທານອາຫານໃຫ້ແກ່ປະຊາຊົນ? (ຂໍ້ 31-33)

**<u>ຂໍ້ສັງເກດ</u>**: ພວກອິດສະຣາເອນເມື່ອຍຕໍ່ການກິນມານາ ແລະພວກເຂົາໄດ້ຈົ່ມທຸກຕໍ່ພຣະເຈົ້າແລະອ້ອນວອນຂໍຊີ້ນ. ພຣະເຈົ້າໄດ້ປະທານໃຫ້ພວກເຂົາຕາມທີ່ພວກເຂົາຕ້ອງການ, ແຕ່ພວກເຂົາໄດ້ກິນຫຼາຍແລະກໍໄດ້ເບື່ອຕໍ່ສິ່ງເຫຼົ່ານັ້ນ. ພຣະເຈົ້າໄດ້ຊົງລົງໂທດພວກເຂົາຕໍ່ທ່າທີຈົ່ມທຸກທີ່ບໍ່ຮູ້ຈັກບຸນຄຸນຂອງພວກເຂົາ.

ໃນພຣະທຳຈົດເຊັນບັນຊີບົດທີ 13, ໂມເຊໄດ້ເຊື່ອຟັງຄຳແນະນຳຂອງອົງພຣະຜູ້ເປັນເຈົ້າແລະໄດ້ສົ່ງຜູ້ສອດແນມ 12 ຄົນໄປແຜ່ນດິນຄານາອັນເພື່ອສັງເກດເບິ່ງພູມປະເທດນັ້ນ. ລາວໄດ້ບອກພວກເຂົາໃຫ້ໄປຊອກເບິ່ງວ່າ ມັນເປັນປະເທດແບບໃດ ແລະມີປະຊາຊົນຫຼາຍປານໃດອາໄສຢູ່ ແລະພວກເຂົາແຂງແຮງຫຼາຍພຽງໃດ. ລາວບອກໃຫ້ພວກເຂົາຊອກເບິ່ງວ່າແຜ່ນດິນນັ້ນອຸດົມສົມບູນຫຼືວ່າອຶດຢາກມາກແຄ້ນ, ແລະໃຫ້ນຳໝາກໄມ້ບາງຢ່າງຄືນມາດ້ວຍ. ພວກສອດແນມໄປທີ່ນັ້ນເປັນເວລາ 40 ວັນ ແລະພວກເຂົາໄດ້ກັບມາລາຍງານຕໍ່ໂມເຊ. ຈົ່ງອ່ານ ຈົດເຊັນບັນຊີ 13:22-31. ພວກສອດແນມສ່ວນຫຼາຍໄດ້ຮູ້ສຶກແບບໃດກ່ຽວກັບການທີ່ຈະເຂົ້າໄປຍຶດເອົາແຜ່ນດິນຄານາອັນນັ້ນ? ກາເລັບໄດ້ໃຫ້ຄຳແນະນຳຢ່າງໃດ? (ຈົ່ງເບິ່ງບົດທີ 13:30).

ປະຊາຊົນອິດສະຣາເອນບໍ່ຍອມທີ່ຈະເຂົ້າໄປແລະຈົ່ມທຸກຕໍ່ອາໂຣນແລະໂມເຊ. ພວກເຂົາໄດ້ຢູ່ໃກ້ກັບແຜ່ນດິນທີ່ຊົງສັນຍາໄວ້,

ແຕ່ພວກເຂົາໄດ້ຫັນກັບຄືນ. ສຳລັບພວກເຂົາ, ໂອກາດທີ່ຈະເຂົ້າໄປໃນແຜ່ນດິນນັ້ນບໍ່ມີອີກແລ້ວ. ກາເລັບແລະໂຢຊວຍແມ່ນສອງຄົນເທົ່ານັ້ນໃນຈຳນວນ 600,000 ຄົນທີ່ອາຍຸຫຼາຍກວ່າ 20 ປີ ຊຶ່ງມີຊີວິດຢູ່ແລະໄດ້ເຂົ້າໄປແຜ່ນດິນຄານາອັນ. ຈົ່ງອ່ານຈົດເຊັນບັນຊີ 14:36-37.

ໂມເຊເປັນຜູ້ນຳພາທີ່ແຂງແຮງ ເຖິງປານນັ້ນລາວກໍມີບັນຫາຫຼາຍຢ່າງ ເຖິງແມ່ນເວລາທີ່ປະຊາຊົນຂູ່ທີ່ຈະຂ້າລາວ, ລາວກໍຍັງສືບຕໍ່ອະທິຖານພຣະເຈົ້າເພື່ອພວກເຂົາ ແລະພຣະເຈົ້າກໍຊົງຄຸ້ມຄອງລາວ. ຈົ່ງອ່ານ ຈົດເຊັນບັນຊີ 14:1-20.

## ຈົດເຊັນບັນຊີ 20:1-13

ເບິ່ງຄືວ່າຈະເປັນເວລາເຖິງ 38 ປີ ລະຫວ່າງບົດທີ 19 ແລະ 20 ຂອງພຣະທຳອິບພະຍົບ.

1. ໂມເຊໄດ້ປະສົບກັບການເສົ້າເສຍໃຈຢ່າງໃດ? (ຂໍ້ 1)
2. ພວກປະຊາຊົນໄດ້ຈົ່ມທຸກກ່ຽວກັບສິ່ງໃດໃນເວລານັ້ນ? (ຂໍ້ 2-5)
3. ກ. ແມ່ນຫຍັງຄືຄຳສັ່ງຂອງພຣະເຈົ້າຕໍ່ໂມເຊ? (ຂໍ້ 8)
   ຂ. ໂມເຊໄດ້ເຮັດຜິດໃນການບໍ່ເຊື່ອຟັງພຣະເຈົ້າແບບໃດ? (ຂໍ້ 9-11)
4. ກ. ພຣະເຈົ້າໄດ້ສະແດງໃຫ້ເຫັນວ່າພຣະອົງບໍ່ພໍພຣະໄທຕໍ່ໂມເຊແລະອາໂຣນແບບໃດ? (ຂໍ້ 12 ແລະ 24)
   ຂ. ການລົງໂທດແບບໃດທີ່ພຣະເຈົ້າໄດ້ຊົງກະທຳ?

## ບົດສະຫລຸບ:

ໃນພຣະທຳພຣະບັນຍັດຄັ້ງທີ່ສອງ 3:23-29, ໂມເຊໄດ້ອະທິບາຍຕໍ່ປະຊາຊົນວ່າ ເປັນດ້ວຍເຫດໃດພຣະເຈົ້າຈຶ່ງບໍ່ອະນຸຍາດໃຫ້ລາວເຂົ້າໄປໃນແຜ່ນດິນທີ່ຊົງສັນຍາໄວ້. ໂມເຊບໍ່ໄດ້ເສຍໃຈລາວຍອມຮັບເອົາຄຳສັ່ງຂອງພຣະເຈົ້າແລະກໍສືບຕໍ່ທີ່ຈະຮັບຮູ້ພຣະເຈົ້າຜູ້ຊົງເປັນອົງພຣະຜູ້ເປັນເຈົ້າທີ່ມີອຳນາດເໜືອສັບພະທຸກສິ່ງ ຊົງໂຜດນຳພາແລະຈະກະທຳສິ່ງທີ່ຍິ່ງໃຫຍ່ຕໍ່ທຸກໆຄົນທີ່ເຊື່ອຟັງພຣະອົງ. ໂມເຊມີອາຍຸ 120 ປີໃນເວລາທີ່ລາວຕາຍ. ລາວເປັນຜູ້ທີ່ແຂງແຮງຈົນເຖິງເວລາທີ່ລາວຕາຍ. ພຣະຄຳພີກ່າວວ່າ (ພຣະບັນຍັດຄັ້ງທີສອງ 34:10) “ໃນອິດສະຣາເອນບໍ່ເຄີຍມີຜູ້ປະກາດພຣະທຳຄົນໃດເໝືອນໂມເຊ ພຣະຜູ້ເປັນເຈົ້າຊົງກ່າວກັບເພິ່ນໜ້າຕໍ່ໜ້າ”.

ໂມເຊເປັນຜູ້ທີ່ຖ່ອມຕົວລົງ, ມີສະຕິປັນຍາທີ່ສະຫຼາດ, ແລະມີຄວາມເຊື່ອທີ່ຍິ່ງໃຫຍ່ໃນພຣະເຈົ້າ,ລາວເປັນຫ່ວງຕໍ່ພຣະລັດສະໝີຂອງພຣະເຈົ້າຫຼາຍກວ່າຕົນເອງ. ໃຫ້ພວກເຮົາທູນຂໍໃຫ້ພຣະເຈົ້າຊົງໂຜດໃຫ້ພວກເຮົາເປັນຜູ້ຮັບໃຊ້ທີ່ສັດຊື່, ຖ່ອມຕົວລົງ, ອ່ອນສຸພາບ, ແລະເຊື່ອຟັງເໝືອນກັບໂມເຊ.

# ດາວິດ - ຜູ້ທີ່ໄວ້ວາງໃຈໃນພຣະເຈົ້າຢ່າງຈິງໃຈ

ດາວິດເປັນຜູ້ໜຶ່ງທີ່ໄວ້ວາງໃຈໃນລິດອຳນາດຂອງພຣະເຈົ້າຕະຫຼອດຊີວິດຂອງລາວ. ລາວເປັນເດັກລ້ຽງແກະທີ່ໄດ້ກາຍມາເປັນກະສັດປົກຄອງເໜືອປະເທດອິດສະຣາເອນ. ໃນຖານະທີ່ເປັນຜູ້ຮັບໃຊ້ພຣະເຈົ້າລາວເປັນຜູ້ທີ່ປະຕິບັດຕາມນ້ຳພຣະໄທຂອງພຣະເຈົ້າ ແລະເປັນທີ່ພໍພຣະໄທຂອງພຣະອົງ. ຊາມູເອນ ຜູ້ປະກາດພຣະທຳໄດ້ກ່າວຕໍ່ກະສັດຊາອູນວ່າ ( ຈົ່ງອ່ານ 1 ຊາມູເອນ 13:14) ຍ້ອນຊາອູນບໍ່ເຊື່ອຟັງພຣະເຈົ້າ, ພຣະອົງຈະປ່ຽນຄົນໃໝ່ຂຶ້ນຄອງລາຊະບັນລັງຂອງອິດສະຣາເອນ. ຊາມູເອນໄດ້ກ່າວອີກວ່າ ພຣະເຈົ້າຕ້ອງການບຸກຄົນທີ່ປະຕິບັດຕາມນ້ຳພຣະໄທຂອງພຣະອົງມາເປັນກະສັດຂອງອິດສະຣາເອນ. ດັ່ງນັ້ນດາວິດຈຶ່ງຖືກເລືອກຂຶ້ນມາເປັນກະສັດແທນຊາອູນ.

ຈົ່ງຂໍ້ພຣະຄຳພີ (ເພງສັນລະເສີນ 78:70-72) “ພຣະອົງ (ພຣະເຈົ້າ) ຊົງເລືອກດາວິດຜູ້ຮັບໃຊ້ຂອງພຣະອົງ ຊົງພາທ່ານມາຈາກຄອກແກະ ພຣະອົງຊົງພາທ່ານມາຈາກການດູແລແມ່ແກະທີ່ມີລູກອ່ອນໃຫ້ເປັນຜູ້ລ້ຽງດູປະຊາກອນຂອງພຣະອົງ ຄືອິດສະຣາເອນມໍລະດົກຂອງພຣະອົງຢ່າງລ້ຽງແກະ ທ່ານຈຶ່ງລ້ຽງດູເຂົາທັງຫຼາຍດ້ວຍໃຈທ່ຽງທຳແລະນຳເຂົາທັງຫຼາຍໄປດ້ວຍຄວາມຊຳນານ”.

ຕະຫຼອດຊີວິດຂອງລາວ ດາວິດມີຄວາມເຊື່ອໝັ້ນຢ່າງແຂງແຮງໃນພຣະເຈົ້າ. ກະສັດຊາອູນກໍອິດສາດາວິດແລະພະຍາຍາມຈະຂ້າລາວ ແຕ່ພຣະເຈົ້າກໍໄດ້ຮັກສາດາວິດໄວ້. (1 ຊາມູເອນ 18:15) “ດາວິດໄດ້ເຮັດລ້ອນໜ້າທີ່ທຸກຢ່າງກໍເພາະວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບລາວ”.

ໃນການຈັດຕຽມທີ່ຈະສຶກສາຊີວິດຂອງດາວິດ, ກ່ອນອື່ນເປັນສິ່ງຈຳເປັນທີ່ຈະຮຽນຮູ້ເລື່ອງຂອງຊາມູເອນ ຜູ້ທີ່ຊະໂລມຕັ້ງດາວິດໃຫ້ເປັນກະສັດ.

## ອ່ານ 1 ຊາມູເອນ 16:1-13

1. ກ. ພຣະເຈົ້າໄດ້ຊົງບອກຊາມູເອນໃຫ້ເຮັດຫຍັງ? (ຂໍ້ 1)
   ຂ. ເປັນຫຍັງຊາມູເອນຈຶ່ງຢ້ານ? (ຂໍ້ 2)
   ຄ. ເວລາຊາມູເອນມາເຖິງບ້ານເບັດເລເຮັມແລ້ວ ລາວໄດ້ເຮັດຫຍັງ? (ຂໍ້ 5)
   ງ. ລາວໄດ້ບອກເຈັດຊີ (ພໍ່ຂອງດາວິດ) ໃຫ້ເຮັດຫຍັງ? (ຂໍ້ 5)
2. ກ. ທຳອິດ ຊາມູເອນໄດ້ຄິດວ່າ ພຣະເຈົ້າຈະເລືອກໃຜເປັນກະສັດ? (ຂໍ້ 6)
   ຂ. ພຣະເຈົ້າກ່າວວ່າ ແມ່ນຫຍັງເປັນລັກສະນະສຳຄັນຂອງຜູ້ຈະມາເປັນກະສັດອົງໃໝ່? (ຂໍ້ 6)
3. ກ. ດາວິດຢູ່ໃສໃນເວລາທີ່ຄອບຄົວຂອງລາວໄດ້ພົບກັບຊາມູເອນ? (ຂໍ້ 10, 11)
   ຂ. ຊາມູເອນໄດ້ບອກເຈັດຊີໃຫ້ເຮັດຫຍັງອີກ? (ຂໍ້ 11)
   ຄ. ເວລາດາວິດມາຢູ່ຕໍ່ໜ້າຊາມູເອນ ພຣະເຈົ້າໄດ້ຊົງບອກຊາມູເອນໃຫ້ເຮັດຫຍັງ? (ຂໍ້ 12)
   ງ. ຊາມູເອນໄດ້ເຮັດຢ່າງໃດ? (ຂໍ້ 13)
4. ຊີວິດຂອງດາວິດໄດ້ປ່ຽນແປງແບບໃດ? (ຂໍ້ 13)

**<u>ຂໍ້ສັງເກດ</u>**: ໃນເວລາທີ່ພວກເຮົາໄດ້ກາຍມາເປັນຄຣິສຕຽນ, ຊີວິດຂອງພວກເຮົາກໍໄດ້ຮັບການປ່ຽນແປງ ເພາະວ່າພຣະວິນຍານຂອງພຣະເຈົ້າໄດ້ສະເດັດລົງມາຢູ່ນຳເຮົາແລະສະຖິດຢູ່ໃນເຮົາ. ໃນຂະນະທີ່ພວກເຮົາໃຫ້ພຣະວິນຍານຂອງພຣະເຈົ້າຄຸ້ມຄອງຊີວິດ, ພວກເຮົາ (ກໍເປັນເໝືອນດາວິດ) ຈະຖວາຍກຽດແດ່ພຣະເຈົ້າ.

## ຈົ່ງອ່ານ 1 ຊາມູເອນ 17:1-50

1. ກະສັດຊາອູນແລະພວກອິດສະຣາເອນກຳລັງເຮັດສົງຄາມຕໍ່ສູ້ກັບພວກຟີລິສຕິນ.
   ກ. ຈົ່ງອະທິບາຍກ່ຽວກັບຍັກໃຫຍ່ໂກລີອາດ. (ຂໍ້ 4-8)
   ຂ. ມັນໄດ້ຮ້ອງທ້າທາຍຕໍ່ພວກອິດສະຣາເອນວ່າແນວໃດ? (ຂໍ້ 8-9)
   ຄ. ກະສັດຊາອູນແລະທະຫານຂອງເພິ່ນຮູ້ສຶກແນວໃດຕໍ່ຄຳທ້າທາຍນີ້? (ຂໍ້ 11)
   ງ. ຍັກໃຫຍ່ໂກລີອາດໄດ້ຮ້ອງທ້າທາຍຕໍ່ພວກອິດສະຣາເອນເປັນເວລາດົນນານປານໃດ? (ຂໍ້ 16)
2. ກ. ເປັນຫຍັງດາວິດຈຶ່ງອອກໄປທີ່ສະໜາມຮົບ? (ຂໍ້ 17, 18)
   ຂ. ພວກອິດສະຣາເອນໄດ້ເຮັດຫຍັງເມື່ອພວກເຂົາເຫັນໂກລີອາດ? (ຂໍ້ 24)
   ຄ. ດາວິດໄດ້ຄິດເຫັນຢ່າງໃດຕໍ່ສະພາບການທີ່ເກີດຂຶ້ນ?(ຂໍ້26)
   ງ. ເປັນຫຍັງພວກອ້າຍຂອງດາວິດຈຶ່ງໃຈຮ້າຍ? (ຂໍ້ 28)
3. ກ. ດາວິດໄດ້ສະໝັກເຮັດຫຍັງ? (ຂໍ້ 32)
   ຂ. ດາວິດໄດ້ເວົ້າຢ່າງໃດຕໍ່ກະສັດຊາອູນ? (ຂໍ້ 34-37)

ຄ. ກະສັດຊາອູນໄດ້ເອົາຫຍັງໃຫ້ດາວິດເພື່ອປົກປ້ອງຄຸ້ມ
ຄອງລາວ? (ຂໍ້ 38)

ງ. ດາວິດໄດ້ເລືອກເອົາສິ່ງໃດເປັນອາວຸດ ໃນການຕໍ່ສູ້ກັບຍັກ
ໃຫຍ່ໂກລີອາດ? (ຂໍ້ 40)

4. ຈົ່ງອະທິບາຍເຖິງວິທີທີ່ດາວິດໄດ້ຂ້າຍັກໃຫຍ່. (ຂໍ້ 48-50)
5. ດາວິດໄດ້ມີຈຸດປະສົງແບບໃດໃນເວລາທີ່ລາວຂ້າຍັກໃຫຍ່ນັ້ນ? (ຂໍ້ 46-47)

ຄວາມເຊື່ອໃນອົງພຣະຜູ້ເປັນເຈົ້າຂອງດາວິດເປັນຕົວຢ່າງອັນໜຶ່ງໃຫ້ພວກເຮົາ. ຄວາມໄວ້ວາງໃຈໃນພຣະເຈົ້າຂອງພວກເຮົາສາມາດນຳໃຫ້ພວກເຮົາມີໄຊຊະນະຕໍ່ສັດຕູ, ມານຊາຕານ, ທີ່ພະຍາຍາມທຳລາຍຊີວິດຄຣິສຕຽນຂອງພວກເຮົາ.

## ຈົ່ງອ່ານ 1 ຊາມູເອນ 18:1–16

ດາວິດແລະລູກຊາຍຂອງຊາອູນ, ໂຈນາທານໄດ້ກາຍມາເປັນເພື່ອນທີ່ສະໜິດສະໜົມກັນ.

1. ໂຈນາທານຮູ້ສຶກແບບໃດກ່ຽວກັບດາວິດ? (ຂໍ້ 1-3)
2. ໂຈນາທານໄດ້ເອົາຫຍັງໃຫ້ດາວິດເພື່ອເປັນສັນຍາລັກຂອງຄວາມເປັນເພື່ອນກັບດາວິດ? (ຂໍ້ 4)
3. ກະສັດຊາອູນໄດ້ເຮັດຫຍັງໃຫ້ດາວິດ? (ຂໍ້ 5)
4. ພວກອິດສະຣາເອນຮູ້ສຶກຢ່າງໃດກ່ຽວກັບດາວິດ? (ຂໍ້ 6, 7)
5. ເປັນຫຍັງກະສັດຊາອູນຈິ່ງອິດສາດາວິດ? (ຂໍ້ 8, 9)
6. ກະສັດຊາອູນພະຍາຍາມຈະເຮັດຫຍັງໃຫ້ດາວິດ?(ຂໍ້10,11)

**ຂໍ້ສັງເກດ**: ກະສັດຊາອູນໄດ້ສົ່ງດາວິດໄປຕໍ່ສູ້ທີ່ສະໜາມຮົບ ໂດຍຄາດວ່າລາວຈະຕ້ອງຖືກຂ້າຢ່າງແນ່ນອນແຕ່ພຣະເຈົ້າຊົງສະຖິດຢູ່ກັບດາວິດ ແລະລາວໄດ້ກາຍມາເປັນຜູ້ນຳທີ່ສຳເລັດທຸກຢ່າງ. ເຖິງແມ່ນວ່າກະສັດຊາອູນຈະກຽດຊັງແລະອິດສາລາວ, ແຕ່ລາວຍັງໄວ້ວາງໃຈແລະເຊື່ອຟັງພຣະເຈົ້າ. ພຣະເຈົ້າໄດ້ຊົງສະຖິດຢູ່ນຳດາວິດແລະຊ່ອຍເຫຼືອລາວໃນທຸກກໍລະນີ. ຈົ່ງອ່ານ 1 ຊາມູເອນ 18:14.

ພຣະເຈົ້າຊົງຊ່ອຍພວກເຮົາແບບໃດໃນຍາມທີ່ຕົກຢູ່ໃນອັນຕະລາຍ, ຫຼືໃນຍາມທີ່ມີບາງຄົນອິດສາພວກເຮົາ, ຫຼືໃນຍາມທີ່ພວກເຮົາຖືກປະຕິເສດ, ແລະອື່ນໆ?

ຈົ່ງອ່ານຂໍ້ພຣະຄຳພີຕໍ່ໄປນີ້:

ບົດເພງສັນລະເສີນ 27:1, 5

ບົດເພງສັນລະເສີນ 46:1-3

ບົດເພງສັນລະເສີນ 103:1-6, 15-18

# ຈົ່ງອ່ານ 1 ຊາມູເອນ 24:1-22

ກະສັດຊາອູນໄດ້ອິດສາໃນຄວາມສຳເລັດຂອງດາວິດໃນການຕໍ່ສູ້ກັບພວກຟີລິສະຕິນ ດັ່ງນັ້ນພຣະອົງຈຶ່ງຊອກຫາຊ່ອງທາງທີ່ຈະຂ້າດາວິດເສຍ.

1. ກ. ຊາອູນໄດ້ວາງແຜນແບບໃດທີ່ຈະຂ້າດາວິດ? (ຂໍ້ 2)

   ຂ. ດາວິດມີໂອກາດແບບໃດທີ່ຈະຄຸ້ມຄອງຕົນເອງ ແລະທຳລາຍກະສັດຊາອູນ? (ຂໍ້ 3)

   ຄ. ເປັນຫຍັງດາວິດຈຶ່ງຮູ້ສຶກວ່າ ລາວຈະຕ້ອງຄຸ້ມຄອງກະສັດ? (ຂໍ້ 6)

ງ. ເຫດການທີ່ຈະເກີດຂຶ້ນໄດ້ຊີ້ໃຫ້ເຫັນຢ່າງໃດກ່ຽວກັບດາວິດ? (ຂໍ້ 5, 6)

ຈ. ດາວິດໄດ້ເວົ້າຢ່າງໃດຕໍ່ຊາອູນທີ່ສະແດງໃຫ້ເຫັນເຖິງຄວາມເຄົາລົບນັບຖືຂອງລາວທີ່ມີຕໍ່ສິດອຳນາດຂອງຊາອູນ?

ຈົ່ງອ່ານ ໂຣມ 13:1, 4

ຄຣິສຕຽນໃນປະຈຸບັນນີ້ຄວນຈະປະຕິບັດຕົນຢ່າງໃດຕໍ່ຜູ້ທີ່ມີສິດອຳນາດເໜືອຕົນ?

2. ດາວິດໄດ້ສັນຍາຕໍ່ຊາອູນໄວ້ແບບໃດ? (ຂໍ້ 12)

3. ກ. ກະສັດຊາອູນຮູ້ສຶກແບບໃດ ເມື່ອເພິ່ນໄດ້ຟັງຄວາມເວົ້າຂອງດາວິດ? (ຂໍ້ 17)

ຂ. ຊາອູນໄດ້ສາລະພາບຢ່າງໃດ? (ຂໍ້ 17)

ຄ. ກະສັດຊາອູນໄດ້ມີຄວາມເຊື່ອຢ່າງໃດກ່ຽວກັບອານາຄົດຂອງດາວິດ? (ຂໍ້ 19, 20)

ງ. ກະສັດຊາອູນໄດ້ຂໍຮ້ອງໃຫ້ດາວິດສັນຍາເຮັດສິ່ງໃດ? (ຂໍ້ 21)

**<u>ຂໍ້ສັງເກດ</u>**: ດາວິດໄດ້ສະແດງໃຫ້ເຫັນວ່າລາວໄດ້ຍົກໂທດໃຫ້ຊາອູນຢ່າງຈິງໃຈ. ພຣະເຈົ້າກຳລັງຈັດຕຽມດາວິດທີ່ຈະເປັນກະສັດປົກຄອງຊົນຊາດອິດສະຣາເອນ.

## 1 ຊາມູເອນ 25:1-50

ໃນບົດທີ່ 25 ພວກເຮົາໄດ້ຮຽນຮູ້ວ່າ ຊາມູເອນໄດ້ຕາຍ ແລະໝົດທຸກຄົນຮູ້ສຶກເສຍໃຈແລະໄດ້ຮ້ອງໄຫ້ເພື່ອເພິ່ນ. ເພິ່ນໄດ້ຖືກຝັງ

ໄວ້ຢູ່ທີ່ບ້ານຣາມາ ບ້ານເກີດເມືອງນອນຂອງຕົນ. ເມື່ອຊາມູເອນໄດ້ຕາຍແລ້ວ ດາວິດກໍເຂົ້າໄປໃນປ່າກັນດານ.

1. ກ. ນາບານແມ່ນໃຜ?
   ຂ. ນາບານເປັນຄົນແບບໃດ?
   ຄ. ເມຍຂອງນາບານຊື່ຫຍັງ? (ຂໍ້ 2-3)
2. ດາວິດໄດ້ສົ່ງຂ່າວອັນໃດໄປຫານາບານ? (ຂໍ້ 5-8)
3. ນາບານໄດ້ຮັບຟັງຂ່າວນັ້ນດ້ວຍທ່າທີແບບໃດ? (ຂໍ້ 10, 11)
4. ດາວິດໄດ້ສະແດງທ່າທີແບບໃດຕໍ່ການປະຕິເສດຂອງນາບານທີ່ບໍ່ຍອມຊ່ອຍເຫຼືອຕົນດ້ວຍອາຫານການກິນ? (ຂໍ້ 12)
5. ຂໍ້ທີ 14-17 ໄດ້ຊີ້ໃຫ້ພວກເຮົາເຫັນສິ່ງໃດກ່ຽວກັບດາວິດແລະຄົນທີ່ຕິດຕາມລາວ?
6. ກ. ຄົນໃຊ້ຂອງນາບານໄດ້ລາຍງານຢ່າງໃດຕໍ່ເມຍຂອງນາບານທີ່ຊື່ອາບີກາອິນ? (ຂໍ້ 14-15)
   ຂ. ພວກເຂົາໄດ້ແນະນຳອາບີກາອິນວ່າຄວນຈະເຮັດແບບໃດ? (ຂໍ້ 17)
7. ກ. ອາບີກາອິນໄດ້ຕັດສິນໃຈວ່າຈະເຮັດແບບໃດ? (ຂໍ້ 18)
   ຂ. ເປັນຫຍັງລາວຈຶ່ງບໍ່ໃຫ້ສາມີຂອງລາວຮູ້ກ່ຽວກັບແຜນການຂອງຕົນ?
8. ດາວິດໄດ້ວາງແຜນວ່າຈະເຮັດຢ່າງໃດຕໍ່ນາບານ? (ຂໍ້ 22)
9 . ເຫດຜົນອັນໃດທີ່ອາບີກາອິນໄດ້ຊັກຊວນດາວິດບໍ່ໃຫ້ຕາມແຜນການຂອງລາວ? (ຂໍ້ 23-25)
   ອາບີກາອິນໄດ້ຊີ້ໃຫ້ດາວິດເຫັນຜົນທີ່ຈະຕາມມາແບບໃດ? (ຂໍ້ 28-29)
10. ເປັນຫຍັງດາວິດຈຶ່ງກ່າວຂອບພຣະຄຸນແດ່ພຣະເຈົ້າ?(ຂໍ້31, 33)

11. ເປັນສິ່ງທີ່ຜິດບໍທີ່ພວກເຮົາຈະແກ້ແຄ້ນໃນເວລາທີ່ມີຜູ້ໃດຜູ້ໜຶ່ງເຮັດຜິດຕໍ່ພວກເຮົາ? ຈົ່ງອ່ານໂຣມ 12:19-21; ຢາໂກໂບ 1:19, 20.
12. ແມ່ນຫຍັງໄດ້ເຮັດໃຫ້ນາບານເສຍຊີວິດ? (ຂໍ້ 36-38)
13. ດາວິດຮູ້ສຶກແບບໃດ ເມື່ອໄດ້ຍິນເຖິງການຕາຍຂອງນາບານ? (ຂໍ້ 39)
14. ແມ່ນໃຜໄດ້ກາຍມາເປັນເມຍຂອງດາວິດ? (ຂໍ້ 40)

ໃນການຮຽນຮູ້ເຖິງຊີວິດຂອງດາວິດ,ພວກເຮົາເຫັນວ່າດາວິດໄດ້ຖືກທົດລອງໃຫ້ຂ້າຊາອູນ ແຕ່ລາວບໍ່ໄດ້ເຮັດດັ່ງນັ້ນ. ລາວເປັນຜູ້ທີ່ອົດທົນຫຼາຍ ເຖິງແມ່ນວ່າຊາອູນໄດ້ຂູ່ເຂັນວ່າຈະຂ້າລາວ. ດາວິດໄດ້ຍຶດໝັ້ນໃນຄວາມເຂົ້າໃຈຕໍ່ຄວາມຊອບທຳແລະໄວ້ວາງໃຈໃນພຣະເຈົ້າ. ລາວໄດ້ວາງໃຈໃນອົງພຣະຜູ້ເປັນເຈົ້າທີ່ຈະເຮັດໃຫ້ສະຖານະການໃນອານາຄົດ ທີ່ຈະຕັ້ງໃຫ້ລາວເປັນກະສັດປົກຄອງອິດສະຣາເອນຕາມການເວລາຂອງພຣະເຈົ້າພຣະອົງເອງ.

ຂໍໃຫ້ພຣະເຈົ້າຊົງປະທານຄວາມເຊື່ອໄວ້ວາງໃຈແບບດຽວກັນນີ້ໃຫ້ພວກເຮົາແຕ່ລະຄົນ, ເພື່ອທີ່ພວກເຮົາຈະຍອມມອບໃຫ້ພຣະເຈົ້າຊ່ອຍເຮົາໃນຍາມຍາກລຳບາກແລະສະແດງນ້ຳພຣະໄທອັນບໍຣິສຸດຂອງພຣະອົງໃນຊີວິດຂອງພວກເຮົາ.

# ດາວິດ - ກະສັດຂອງອິດສະຣາເອນ

## ຈົ່ງອ່ານ 1 ຊາມູເອນ 31:1-6

1. ກ. ພວກອິດສະຣາເອນໄດ້ຕໍ່ສູ້ເຮັດສົງຄາມກັບພວກໃດ? (ຂໍ້ 1)
   ຂ. ການສູ້ຮົບໄດ້ເປັນຜົນສະທ້ອນແບບໃດຕໍ່ກະສັດຊາອູນ ແລະລູກຊາຍຂອງພະອົງ? (ຂໍ້ 1-2)
   ຄ. ແມ່ນຫຍັງໄດ້ເກີດຂຶ້ນຕໍ່ກະສັດຊາອູນ? (ຂໍ້ 3)
   ງ. ຊາອູນໄດ້ຂໍໃຫ້ຊາຍໜຸ່ມຜູ້ທີ່ຖືອາວຸດຂອງພະອົງນັ້ນເຮັດ ຫຍັງ? (ຂໍ້ 4)
   ຈ. ກະສັດຊາອູນໄດ້ສິ້ນຊີວິດແບບໃດ? (ຂໍ້ 4,5)

## ຈົ່ງອ່ານ 2 ຊາມູເອນ 3:11

1. ດາວິດຮູ້ສຶກແບບໃດເມື່ອໄດ້ຍິນຂ່າວການສິ້ນພະຊົນຂອງຊາ ອູນ? (ຂໍ້ 11)

## ຈົ່ງອ່ານ 2 ຊາມູເອນ 5:1-5

1. ປະຊາຊົນອິດສະຣາເອນໄດ້ກ່າວຢ່າງໃດຕໍ່ດາວິດ? (ຂໍ້ 1,2)
2. ກ. ແມ່ນໃຜເປັນຜູ້ທີ່ເຈີມຕັ້ງດາວິດໃຫ້ເປັນກະສັດ? (ຂໍ້ 3)
   ຂ. ດາວິດມີອາຍຸໄດ້ຈັກປີໃນເວລາພະອົງໄດ້ຂຶ້ນສະເຫວີຍ ລາດເປັນກະສັດ? (ຂໍ້ 4)
   ຄ. ດາວິດປົກຄອງເໜືອອິດສະຣາເອນໄດ້ດົນປານໃດ? (ຂໍ້ 5)

## ຈົ່ງອ່ານ 2 ຊາມູເອນ 7:1–29

ດາວິດມີຄວາມສຳພັນຢ່າງພິເສດກັບຜູ້ປະກາດພຣະທຳທີ່ຊື່ນາທານ. ພຣະເຈົ້າໄດ້ຊົງຮັກສາດາວິດໃຫ້ປອດໄພຈາກສັດຕູຂອງພະອົງແລະຈາກເສິກສົງຄາມ. ແລະໃນເວລານີ້ດາວິດກໍກຳລັງຄິດເຖິງສິ່ງໃໝ່ໆແລະມີແຜນການໃໝ່ໆ.

1. ກ. ດາວິດໄດ້ກ່າວຢ່າງໃດຕໍ່ຜູ້ປະກາດພຣະທຳນາທານ? (ຂໍ້ 1)
   ຂ. ດາວິດວາງແຜນທີ່ຈະເຮັດຫຍັງ?
2 ນາທານໄດ້ຕອບດາວິດວ່າແນວໃດ? (ຂໍ້ 3)
3. ໃນເວລາອົງພຣະຜູ້ເປັນເຈົ້າຊົງກ່າວຕໍ່ນາທານ ແຜນການຂອງພຣະເຈົ້າແຕກຕ່າງກັບແຜນການຂອງດາວິດແບບໃດ? (ຂໍ້ 5)
4. ພຣະເຈົ້າຢາກໃຫ້ດາວິດຈົດຈຳສິ່ງໃດໄວ້?

**<u>ຂໍ້ສັງເກດ</u>**: ໃນຂໍ້ທີ 5 ແລະ 8 ພຣະເຈົ້າເອີ້ນດາວິດວ່າ "ຜູ້ຮັບໃຊ້ຂອງເຮົາ" ແລະໄດ້ເອີ້ນພຣະອົງວ່າເປັນຜູ້"ປົກຄອງໄພ່ພົນຂອງເຮົາ" ພຣະເຈົ້າຢາກໃຫ້ດາວິດຈົດຈຳໄວ້ສະເໝີວ່າ ພຣະອົງເປັນຜູ້ນຳພາທີ່ຍິ່ງໃຫຍ່ແລະມີຊື່ສຽງຜູ້ໜຶ່ງທີ່ຖ່ອມຕົວລົງຮັບໃຊ້ໄພ່ພົນຂອງພຣະເຈົ້າ.

5. ພຣະເຈົ້າໄດ້ໃຫ້ຄຳໝັ້ນສັນຍາທີ່ມະຫັດສະຈັນຢ່າງໃດຕໍ່ດາວິດທີ່ກ່ຽວກັບໄພ່ພົນອິດສະຣາເອນ? (ຂໍ້ 10, 11)
6. ພຣະເຈົ້າໄດ້ໃຫ້ຄຳໝັ້ນສັນຍາຢ່າງໃດຕໍ່ດາວິດທີ່ກ່ຽວຂ້ອງກັບພຣະອົງເອງ? (ຂໍ້ 11)
7. ອົງພຣະຜູ້ເປັນເຈົ້າໃຫ້ຄຳໝັ້ນສັນຍາຢ່າງໃດກ່ຽວກັບລາຊະອານາຈັກຂອງດາວິດ? (ຂໍ້ 12,13)
8. ອົງພຣະຜູ້ເປັນເຈົ້າໃຫ້ຄຳໝັ້ນສັນຍາຢ່າງໃດກ່ຽວກັບເຊື້ອສາຍຂອງດາວິດ? (ຂໍ້ 13-16)

   ຈົ່ງອ່ານ ລູກາ 1:31-33 ແລະ ມາຣະໂກ 11:7-10

ພຣະເຢຊູຄຣິດໄດ້ໃຫ້ຄຳໝັ້ນສັນຍາທີ່ພຣະເຈົ້າໄດ້ສັນຍາຕໍ່ດາວິດນີ້ສຳເລັດລົງແບບໃດ?

9. ກ. ດາວິດໄດ້ຕອບຮັບເອົາຄຳໝັ້ນສັນຍາຂອງອົງພຣະຜູ້ເປັນເຈົ້າແບບໃດ?
   ຂ. ຈົ່ງອ່ານຄຳອະທິຖານຂອງດາວິດ ໃນຂໍ້ 19-29.
   ຄ. ມີສິ່ງໃດແດ່ທີ່ດາວິດສັນລະເສີນພຣະເຈົ້າໃນຄຳອະທິຖານຂອງພະອົງ?
   ງ. ຄຳອະທິຖານນີ້ໄດ້ຊີ້ໃຫ້ເຫັນເຖິງທ່າທີແບບໃດຂອງດາວິດທີ່ມີຕໍ່ພຣະເຈົ້າ?

**ຂໍ້ສັງເກດ**: ໃນຖານະທີ່ເປັນຄຣິດສະຕຽນ ບາງເທື່ອພວກເຮົາອາດຕ້ອງປ່ຽນແຜນການສ່ວນຕົວຂອງພວກເຮົາຖ້າພຣະເຈົ້າຫາກຊີ້ໃຫ້ເຫັນເຖິງແຜນການຂອງພຣະອົງສຳລັບພວກເຮົາ. ດາວິດຢາກສ້າງວິຫານ (ເຮືອນຂອງພຣະເຈົ້າ) ແຕ່ພຣະເຈົ້າບໍ່ຕ້ອງການໃຫ້ດາວິດເຮັດໃນເວລານັ້ນ. ຫຼາຍປີຕໍ່ມາລູກຊາຍຂອງດາວິດທີ່ຊື່ ຊາໂລໂມນເປັນຜູ້ສ້າງພຣະວິຫານສຳລັບພຣະເຈົ້າ ແຕ່ແມ່ນດາວິດເປັນຜູ້ສ້າງຕັ້ງລາຊະອານາຈັກ ທີ່ຍືນຍົງຄົງຢູ່ຕະຫຼອດໄປ. ດາວິດໄດ້ຮັບພຣະພອນອັນຍິ່ງໃຫ່ຍເພາະວ່າ ພະອົງເຊື່ອຟັງແຜນການຂອງພຣະເຈົ້າ.

## ຈົ່ງອ່ານ 2 ຊາມູເອນ 11:1-14, 26-27

1. ກ. ດາວິດຢູ່ໃສໃນເວລາທີ່ນາຍທະຫານແລະທະຫານກຳລັງສູ້ຮົບກັບຄົນອຳໂມນ ຢູ່ນັ້ນ? (ຂໍ້ 1)
   ຂ. ດາວິດໄດ້ປ່ອຍປະລະເລີຍໜ້າທີ່ຮັບຜິດຊອບຕໍ່ທະຫານຂອງພຣະອົງບໍ?

ຄ. ດາວິດໄດ້ກາຍມາຮູ້ຈັກມັກຄຸ້ນກັບບັດຊີບາເມຍຂອງອູຣີອາ ໄດ້ແບບໃດ? ( ຂໍ້ 2)

2. ດາວິດໄດ້ເຮັດຫຍັງເມື່ອພະອົງໄດ້ສືບຮູ້ວ່າບັດຊີບາແມ່ນໃຜ? (ຂໍ້ 3,4)
3. ເປັນຫຍັງດາວິດຈຶ່ງຢ້ານອູຣີອາ? (ຂໍ້ 5,6)
4. ດາວິດໄດ້ວາງແຜນໃຫ້ອູຣີອາເຮັດແບບໃດ? (ຂໍ້ 10,11)
5. ໃນຂໍ້ທີ 12 ແລະ 13 ດາວິດໄດ້ພະຍາຍາມແຜນໃໝ່ແບບໃດອີກເພື່ອຫຼີກໜີຈາກການຮັບຜິດຊອບຕໍ່ການຫຼິ້ນຊູ້ຂອງພະອົງ?
6. ດາວິດໄດ້ພະຍາຍາມເຮັດແບບໃດອີກເພື່ອປົກປິດຄວາມບາບໃນການຫຼິ້ນຊູ້ຂອງພະອົງ? (ຂໍ້ 14)

**<u>ຂໍ້ສັງເກດ</u>**: ດາວິດໄດ້ເຮັດບາບເພາະວ່າພະອົງຫຼົງລືມພຣະເຈົ້າໃນເວລາທີ່ພະອົງໄດ້ກາຍມາເປັນຜູ້ນຳອິດສະຣາເອນທີ່ສຳເລັດຜົນທຸກຢ່າງ. ຈົ່ງອ່ານ 1 ໂກຣິນໂທ 10:12.

7. ດາວິດໄດ້ເຮັດຜິດບາບແບບໃດອີກ? (ຂໍ້ 14-17)
8. ພຣະເຈົ້າຊົງຮູ້ສຶກແນວໃດຕໍ່ການກະທຳຂອງດາວິດ? (ຂໍ້ 26-27)

## ຈົ່ງອ່ານ 2 ຊາມູເອນ 12:1-14

1. ຜູ້ປະກາດພຣະທຳໄດ້ເລົ່າເລື່ອງຫຍັງໃຫ້ດາວິດຟັງ? (ຂໍ້ 1-4)
2. ດາວິດຮູ້ສຶກແບບໃດແລະເວົ້າແນວໃດເມື່ອພະອົງໄດ້ຍິນເຖິງເລື່ອງນັ້ນ? (ຂໍ້ 5, 6)

3. ນາທານໄດ້ກ່າວໂທດດາວິດຢ່າງໃດ? (ຂໍ້ 7)
4. ນາທານໄດ້ຊີ້ບອກໃຫ້ດາວິດຮູ້ຈັກວ່າ ນໍ້າພຣະໄທຂອງພຣະເຈົ້າຕໍ່ການກະທຳຂອງດາວິດນັ້ນເປັນແບບໃດ? (ຂໍ້ 9)
5. ນາທານໄດ້ກ່າວວ່າ ແມ່ນຫຍັງຈະເປັນຜົນສະທ້ອນຂອງຄວາມບາບຂອງດາວິດ? (ຂໍ້ 10-14)
6. ດາວິດຮູ້ສຶກແບບໃດເມື່ອພະອົງໄດ້ຍິນພຣະທຳຂອງອົງພຣະຜູ້ເປັນເຈົ້າທີ່ກ່າວຜ່ານທາງນາທານ, ຜູ້ປະກາດພຣະທຳ?(ຂໍ້13)

<u>**ຂໍ້ສັງເກດ**</u>: ຫົວຂໍ້ຂອງບົດຮຽນນີ້ແມ່ນ "ດາວິດ-ຜູ້ທີ່ໄວ້ວາງໃຈໃນພຣະເຈົ້າຢ່າງຈິງໃຈ". ໃນບົດນີ້ພວກເຮົາເຫັນວ່າດາວິດໄດ້ກະທຳຜິດຕໍ່ພຣະເຈົ້າແລະຕົກໃນຄວາມບາບ. ດາວິດເປັນຜູ້ນຳພາທີ່ຍິ່ງໃຫຍ່ຂອງອິດສະຣາເອນ, ບໍ່ແມ່ນຍ້ອນວ່າພະອົງບໍ່ເຄີຍເຮັດຜິດຕໍ່ພຣະເຈົ້າຈັກເທື່ອ ແຕ່ຍ້ອນວ່າພະອົງສາລະພາບຄວາມບາບຂອງພະອົງແລະສຳພັດກັບການອະໄພໂທດຂອງພຣະເຈົ້າ. ຈົ່ງອ່ານເພງສັນລະເສີນ 51 ເຊິ່ງເປັນຄຳອະທິຖານທີ່ຂຽນຂຶ້ນໂດຍດາວິດ.

7. ພວກເຮົາຄວນຈະເຮັດແບບໃດໃນເວລາທີ່ພວກເຮົາເຮັດຜິດບາບຕໍ່ພຣະເຈົ້າ? ຈົ່ງອ່ານ 1 ໂຢຮັນ 1:8, 9.

<u>**ຂໍ້ສັງເກດ**</u>: ພວກເຮົາແຕ່ລະຄົນກໍເປັນເໝືອນດາວິດທີ່ມີຈຸດອ່ອນຢູ່ໃນທຸກບ່ອນຂອງຊີວິດ, ຈົ່ງໄວ້ວາງໃຈໃນພຣະເຈົ້າທີ່ຈະປະທານໄຊຊະນະຕໍ່ຄວາມຜິດບາບໃຫ້ພວກເຮົາ ທັງໃນຊີວິດຝ່າຍວິນຍານແລະຝ່າຍຮ່າງກາຍນີ້.ພວກເຮົາຕ້ອງຖ່ອມຕົວລົງສາລະພາບວ່າພວກເຮົາເປັນຄົນຜິດຄົນບາບ. ທູນຂໍພຣະເຢຊູໃຫ້ຊຳລະລ້າງແລະປະທານອະໄພໃຫ້ພວກເຮົາ.

# ດາວິດ - ຄວາມເສົ້າສະລົດໃຈເພີ່ມຂຶ້ນ

ຫຼັງຈາກດາວິດໄດ້ເຮັດບາບບໍ່ດົນປານໃດ, ຄວາມເສົ້າສະລົດໃຈທີ່ຜູ້ປະກາດພຣະທຳນາທານ ໄດ້ທຳນວາຍໄວ້ໄດ້ເລີ່ມຕົກມາສູ່ດາວິດ.

## ຈົ່ງອ່ານ 2 ຊາມູເອນ 12:14–25

1. ຈົ່ງທວນຄືນໃນສິ່ງທີ່ນາທານຜູ້ປະກາດພຣະທຳໄດ້ບອກດາວິດໄວ້ທີ່ກ່ຽວກັບຜົນສະທ້ອນຂອງຄວາມຜິດບາບຂອງພະອົງ. (ຂໍ້ 10-14)
2. ຄຳທຳນວາຍນີ້ໄດ້ສຳເລັດລົງແບບໃດ? (ຂໍ້ 14)
3. ເປັນຫຍັງຄົນໃຊ້ຈຶ່ງຢ້ານກົວໃນເວລາທີ່ລູກນ້ອຍຕາຍ? (ຂໍ້ 18)
4. ດາວິດໄດ້ສະແດງທ່າທີແບບໃດເມື່ອຮູ້ວ່າລູກນ້ອຍນັ້ນໄດ້ຕາຍແລ້ວ? (ຂໍ້ 22, 23)
5. ດາວິດໄດ້ມີຄວາມຫວັງ ແບບໃດ? (ຂໍ້ 23)
6. ຄຣິສຕຽນມີຄວາມຫວັງແບບໃດເມື່ອພວກເຂົາໄດ້ສູນເສຍຄົນທີ່ຮັກໄປ? ຈົ່ງອ່ານ 1 ໂກລິນໂທ 15:20-22, 56, 57.
7. ພຣະເຈົ້າໄດ້ສຳແດງພຣະເມດຕາຂອງພຣະອົງຕໍ່ດາວິດແບບໃດ? (ຂໍ້ 24, 25)
8. ຊື່ລູກຊາຍຄົນໃໝ່ຂອງດາວິດແມ່ນຫຍັງ? (ຂໍ້ 24)

ເລື່ອງລາວຂອງດາວິດກະສັດອິດສະຣາເອນໄດ້ຖືກບັນທຶກໄວ້ຢ່າງລະອຽດໃນບົດທີ 12-14 ຂອງພຣະທຳ 2 ຊາມູເອນ. ຄວາມ

ເສົ້າສະລົດໃຈທີ່ຜູ້ປະກາດພຣະທຳນາທານໄດ້ທຳນວາຍໄວ້ໄດ້ສືບທອດຕົກມາໃສ່ດາວິດ. ພະອົງມີພັນລະຍາຫຼາຍຄົນແລະລູກຫຼາຍຄົນ. ລູກຫຼາຍຄົນຂອງພຣະອົງໄດ້ຈະເລີນໃຫຍ່ຂຶ້ນກາຍເປັນຜູ້ທີ່ອ່ອນແອແລະໂຫດຮ້າຍ. ໃນຖານະທີ່ເປັນກະສັດດາວິດຫຍຸ້ງຍາກຫຼາຍໃນວຽກການຈົນບໍ່ມີເວລາພຽງພໍທີ່ເຮັດໜ້າທີ່ໃນການເປັນພໍ່ຂອງລູກໆຫຼາຍຄົນໄດ້ ໃນສັງຄົມປະຈຸບັນ ບັນຫາຢ່າງໜຶ່ງທີ່ເຮັດໃຫ້ຄົນໜຸ່ມໆບໍ່ຟັງຄວາມ ແລະເຮັດຜິດບາບຢ່າງຫຼວງຫຼາຍກໍຍ້ອນບັນດາພວກຜູ້ທີ່ເປັນພໍ່ບໍ່ໄດ້ໃຊ້ເວລາຢູ່ກັບລູກຂອງຕົນ. ພຣະຄຳພີສອນພວກເຮົາວ່າ "ຈົ່ງສັ່ງສອນລູກໃຫ້ຮູ້ຈັກທາງດຳເນີນຊີວິດເພື່ອເຂົາຈະຈົດຈຳໄວ້ຕະຫຼອດຊີວິດ". (ສຸພາສິດ 22:6).

ອັບໄຊໂລມ, ລູກຊາຍຜູ້ໜຶ່ງຂອງດາວິດ, ເປັນຄົນທີ່ໂຫດຮ້າຍແລະຊົ່ວຊ້າ. ລາວໄດ້ວາງແຜນທີ່ຈະຍາດຊີງເອົາບັນລັງແລະລາຊະອານາຈັກຂອງພໍ່ຂອງລາວ (ດາວິດ), ແລະຍົກຕົນເອງຂຶ້ນເປັນກະສັດແທນບ່ອນຂອງດາວິດ. ອັບໄຊໂລມ, ລາວໄດ້ສຳເລັດໃນຄວາມຫວັງຢູ່ຄາວໜຶ່ງ. ລາວໄດ້ນັ່ງເທິງບັນລັງແລະສວມມົງກຸດຢູ່ໃນພຣະລາຊະວັງທີ່ກຸງເຢຣູຊາເລັມເປັນກະສັດຂອງອິດສະຣາເອນ. ດາວິດກໍຍັງຮັກລູກຊາຍຂອງພຣະອົງອັບໄຊໂລມ ເຖິງແມ່ນວ່າລາວເຮັດຜິດຢ່າງໃຫຍ່ຫຼວງ. ໃນທີ່ສຸດທະຫານຂອງດາວິດກໍໄດ້ຂ້າຄົນຂອງອັບໄຊໂລມຫຼາຍພັນຄົນແລະອັບໄຊໂລມເອງກໍຖືກຂ້າເໝືອນກັນ. ຈົ່ງອ່ານ 2 ຊາມູເອນ 18:8-10 ທີ່ກ່ຽວກັບການຕາຍຂອງລາວ. ຫຼັງຈາກການຕາຍຂອງອັບໄຊໂລມ ດາວິດກໍໄດ້ປົກຄອງອິດສະຣາເອນຢ່າງສະຫງົບສຸກຕະຫຼອດຊີວິດຂອງພຣະອົງ. ໃນພາກສຸດທ້າຍຂອງການຄອງລາດຂອງພຣະອົງ, ດາວິດໄດ້ຍົກໃຫ້ຊາໂລໂມນເປັນ

ກະສັດຂອງອິດສະຣາເອນ. ດາວິດໄດ້ວາງໃຈໃນພຣະທັດຂອງພຣະເຈົ້າໃນຊີວິດຂອງພຣະອົງແລະຂອງຊາໂລໂມນ.

## ຈົ່ງອ່ານປະຫວັດກະສັດທີ່ໜຶ່ງ 1:46-48

1. ເປັນຫຍັງດາວິດຈຶ່ງສັນລະເສີນພຣະເຈົ້າ?

## ຈົ່ງອ່ານປະຫວັດກະສັດທີ່ໜຶ່ງ 2:1-4

1. ດາວິດໄດ້ໃຫ້ຄຳແນະນຳຢ່າງໃດແກ່ຊາໂລໂມນ?

## ຈົ່ງອ່ານປະຫວັດກະສັດທີ່ໜຶ່ງ 2:10-12

1. ດາວິດຄອງລາຊະສົມບັດເປັນກະສັດຂອງອິດສະຣາເອນໄດ້ຈັກປີ?

**ຈົ່ງອ່ານເພງສັນລະເສີນ 51 ອີກເທື່ອໜຶ່ງ:**

ຄຳອະທິຖານຂອງດາວິດທີ່ທູນຂໍພຣະເຈົ້າໃຫ້ຊຳລະລ້າງຈິດໃຈຂອງພະອົງແລະປະທານວິນຍານທີ່ຊື່ສັດອັນໃໝ່ເຂົ້າມາສະຖິດໃນທ່າມກາງພະອົງ. (ຂໍ້10) ດາວິດໄດ້ຮັບບົດຮຽນຈາກການເຮັດຜິດບາບແລະຄວາມເສົ້າສະລົດໃຈວ່າພຣະເຈົ້າໄດ້ຊົງໂຜດໃຫ້ພະອົງແຂງແຮງຂຶ້ນແລະຊົງຕັ້ງພະອົງຂຶ້ນໃໝ່.